# ຄຳນຳ

ພຣະທຳ "ພຣະນິມິດ" ທີ່ເຄີຍເອີ້ນວ່າ "ຄຳປາກົດ" ໄດ້ຖືກຂຽນຂຶ້ນຢູ່ທີ່ເກາະ ປັດໂມ ໃນປີ ຄ.ສ. 95. ຜູ້ຂຽນພຣະທຳນີ້ຄື ໂຢຮັນ ຜູ້ທີ່ພຣະເຢຊູຊົງຮັກແພງເປັນພິເສດ. ໂຢຮັນຜູ້ນີ້ໄດ້ຖືກເນລະເທດໃຫ້ໄປຢູ່ທີ່ເກາະ ປັດໂມ ນີ້ ຍ້ອນເລື່ອງຂ່າວປະເສີດຂອງພຣະເຢຊູຄຣິດ ແລະຍ້ອນພຣະທຳຂອງພຣະເຈົ້າ. ພຣະທຳພຣະນິມິດນີ້ເປັນໜັງສືເຫຼັ້ມສຸດທ້າຍໃນພຣະຄຣິສຕະທຳຄຳພີ ແລະມີຄຳທຳນວາຍຫຼາຍທີ່ກ່າວເຖິງເຫດການທີ່ຈະເກີດຂຶ້ນໃນອະນາຄົດ ຄື ການສະເດັດມາຄັ້ງທີ 2 ຂອງພຣະເຢຊູຄຣິດ ແລະຄວາມທຸກລຳບາກອັນໃຫຍ່ຫຼວງ ຢ່າງບໍ່ເຄີຍເກີດມີມາຕັ້ງແຕ່ຕົ້ນເດີມໂລກຈົນເຖິງບັດນີ້. ແລ້ວພຣະທຳພຣະນິມິດ ນີ້ ກ່າວ ເຖິງ ລາຊະອານາຈັກ ອັນ ຮຸ່ງ ເຮືອງ ຂອງພຣະເຢຊູຄຣິດທີ່ຈະມາເຖິງ. ພຣະທຳນີ້ຍັງໄດ້ກ່າວເຖິງຢ່າງລະອຽດກ່ຽວ ກັບ ສະຫວັນ ກັບ ນະຣົກ ແລະ ການ ພິພາກສາ ອັນ ໃຫຍ່ ຄັ້ງ ສຸດທ້າຍ ລະຫວ່າງພຣະເຈົ້າກັບ ມະນຸດສະໂລກ. ແລ້ວພຣະເຈົ້າໄດ້ສັນຍາໄວ້ວ່າ ມີພຣະພອນອັນພິເສດສຳລັບທຸກຄົນທີ່ອ່ານແລະຟັງຄຳທຳນວາຍນີ້.

ຂໍໃຫ້ພຣະເຈົ້າຊົງອວຍພອນທ່ານຜູ້ອ່ານທຸກໆທ່ານ

# ພຣະນິມິດ

### ຫຼືວ່າ

# ການປາກົດແຫ່ງພຣະເຢຊູຄຣິດ

### ຊຶ່ງຊົງສະແດງຕໍ່

### ໂຢຮັນ

## ບົດທີ 1

1 [໑]ການຊົງສະແດງຂອງອົງພຣະເຢຊູຄຣິດ ຊຶ່ງພຣະເຈົ້າໄດ້ຊົງ
ປະທານແກ່ພຣະອົງ ເພື່ອຊົງຊີ້ແຈງໃຫ້ບັນດາຂ້ອຍໃຊ້ຂອງ
ພຣະອົງຮູ້ເຖິງເຫດການທັງຫຼາຍທີ່ຕ້ອງບັງເກີດຂຶ້ນໃນບໍ່ຊ້າ
ນີ້ ພຣະຄຣິດໄດ້ຊົງໃຊ້ເທວະດາຂອງພຣະອົງໄປສະແດງ
2 ໝາຍສຳຄັນແກ່ໂຢຮັນຂ້ອຍໃຊ້ຂອງພຣະອົງ. [໒]ໂຢຮັນເປັນ
ພະຍານຝ່າຍພຣະທຳຂອງພຣະເຈົ້າ ແລະຝ່າຍຄຳພະຍານ
ຂອງພຣະເຢຊູຄຣິດ ທ່ານເປັນພະຍານໃນເຫດການທັງສິ້ນ
3 ຊຶ່ງທ່ານໄດ້ເຫັນນັ້ນ. [໓]ບັນດາຜູ້ອ່ານແລະຜູ້ຟັງຄຳທຳນວາຍ
ເຫຼົ່ານີ້ ແລະບັນດາຜູ້ທີ່ຖືຮັກສາຂໍ້ຄວາມທີ່ຂຽນໄວ້ນີ້ກໍເປັນ
ສຸກ* ເພາະວ່າເວລານັ້ນໃກ້ເຂົ້າມາແລ້ວ.
4 ຈາກ ໂຢຮັນ [໔]ຮຽນຄຣິສຕະຈັກ*ທັງເຈັດທີ່ຢູ່ໃນແຂວງ
ອາເຊຍ: ຂໍໃຫ້ທ່ານທັງຫຼາຍຈົ່ງໄດ້ຮັບພຣະຄຸນແລະສັນຕິ
ສຸກຈາກພຣະອົງ ຜູ້ຊົງດຳລົງຢູ່ໃນປັດຈຸບັນ, ຜູ້ຊົງດຳລົງຢູ່ໃນ
ອະດີດ, ຜູ້ຈະສະເດັດມາໃນອະນາຄົດ ແລະຈາກວິນຍານທັງ
5 ເຈັດທີ່ເຝົ້າຢູ່ໜ້າລາຊະບັນລັງຂອງພຣະອົງ, [໕]ແລະຈາກພຣະ
ເຢຊູຄຣິດຜູ້ຊົງເປັນພະຍານທີ່ສັດຊື່ ແລະຊົງເປັນຜູ້ທຳອິດທີ່
ໄດ້ຄືນມາຈາກຄວາມຕາຍ ແລະຊົງເປັນຜູ້ຄອບຄອງກະສັດ
ທັງຫຼາຍໃນໂລກ. ແດ່ພຣະອົງຜູ້ຊົງໄດ້ຮັກເຮົາທັງຫຼາຍ ແລະ
ໄດ້ຊົງຊຳລະລ້າງພວກເຮົາຈາກການຜິດບາບຂອງເຮົາດ້ວຍ

6 ພຣະໂລຫິດຂອງພຣະອົງເອງ, [໖]ແລະພຣະອົງຊົງຕັ້ງເຮົາທັງ-
ຫຼາຍ ໄວ້ ໃຫ້ ເປັນ ກະສັດ ແລະ ເປັນ ປະໂລຫິດ ຂອງ ພຣະເຈົ້າ
ແລະພຣະບິດາຂອງພຣະອົງ; ພຣະກຽດແລະພຣະອານຸພາບ
7 ຈົ່ງມີແດ່ພຣະອົງສືບໆໄປເປັນນິດ ອາແມນ*. [໗]ເບິ່ງແມ, ພຣະ
ອົງຈະສະເດັດມາມີເມກເປັນຂະບວນແຫ່ ຕາທຸກໜ່ວຍຈະ
ເຫັນພຣະອົງ ແລະຄົນເຫຼົ່ານັ້ນທີ່ໄດ້ແທງພຣະອົງກໍຈະເຫັນ
ເໝືອນກັນ ມະນຸດທຸກຊາດທົ່ວໂລກຈະຮ້ອງໄຫ້ຮໍ່າໄຮເພາະ
8 ພຣະອົງ. ຈະເປັນໄປຢ່າງນັ້ນ ອາແມນ. [໘]ອົງພຣະຜູ້ເປັນເຈົ້າ
ຊົງກ່າວວ່າ, “ຝ່າຍເຮົາຄືອາລະຟາແລະໂອເມຄາ*, ຜູ້ຊົງເປັນ
ຜູ້ຕົ້ນແລະເປັນຜູ້ປາຍ, ຜູ້ຊົງດຳລົງຢູ່ໃນປັດຈຸບັນ, ຜູ້ຊົງດຳ-
ລົງຢູ່ໃນອະດີດ, ຜູ້ຈະສະເດັດມາໃນອະນາຄົດ, ແລະພຣະຜູ້
9 ຊົງລິດທານຸພາບສູງສຸດ.” [໙]ຂ້າພະເຈົ້າ, ຄືໂຢຮັນ ພີ່ນ້ອງຂອງ
ທ່ານທັງຫຼາຍ ຜູ້ເປັນເພື່ອນຮ່ວມການຍາກລຳບາກ, ຮ່ວມ
ລາຊະອານາຈັກ, ແລະຮ່ວມຄວາມພຽນອົດທົນໃນພຣະເຢຊູ
ຄຣິດ; ຂ້າພະເຈົ້າໄດ້ມາຢູ່ທີ່ເກາະປັດໂມເນື່ອງດ້ວຍພຣະ
ທຳຂອງພຣະເຈົ້າ ແລະເນື່ອງດ້ວຍການເປັນພະຍານຝ່າຍ
10 ພຣະເຢຊູຄຣິດ. [໑໐]ໃນວັນຂອງອົງພຣະຜູ້ເປັນເຈົ້າຂ້າພະເຈົ້າ
ປະກອບໄປດ້ວຍພຣະວິນຍານ ແລ້ວໄດ້ຍິນພຣະສຸລະສຽງ
11 ດັງມາເບື້ອງຫຼັງຂ້າພະເຈົ້າເໝືອນດັ່ງສຽງແກ, [໑໑]ຊົງກ່າວວ່າ,
“ເຮົາເປັນອາລະຟາແລະໂອເມຄາ, ເປັນເບື້ອງຕົ້ນແລະເປັນ
ເບື້ອງປາຍ: ອັນທີ່ທ່ານໄດ້ເຫັນນັ້ນຈົ່ງຂຽນໄວ້ໃນໜັງສືມ້ວນ
ແລ້ວຝາກໄປໃຫ້ຄຣິສຕະຈັກທັງເຈັດທີ່ຢູ່ແຄວ້ນອາເຊຍ ຄື
ຄຣິສຕະຈັກທີ່ເມືອງເອເຟໂຊ, ເມືອງຊະມີນາ, ເມືອງເປຄາ
ໂມ, ເມືອງທົວເຕຣາ, ເມືອງຊາເດ, ເມືອງຟີລາເດັນເຟຍ,
12 ແລະທີ່ເມືອງລາວດີເກອາ.” [໑໒]ຂ້າພະເຈົ້າຈຶ່ງຫຼຽວຫຼັງເບິ່ງ
ທາງພຣະສຸລະສຽງທີ່ຊົງກ່າວແກ່ຂ້າພະເຈົ້ານັ້ນ ແລ້ວຂ້າພະ-
13 ເຈົ້າກໍເຫັນເຄື່ອງຮອງຕີນທຽນທອງຄຳເຈັດອັນ. [໑໓]ແລະໃນ



**ເອຊາຢາ 55:12–13** [12]ເຫດວ່າພວກທ່ານຈະອອກໄປດ້ວຍຄວາມຍິນດີແລະຈະເປັນທີ່ນຳໜ້າໄປດ້ວຍຄວາມສຸກສຳລານ ພູກັບດອນທັງຫຼາຍຈະຕື່ນຮ້ອງລຳເພງຊະນະຕໍ່ໜ້າພວກທ່ານ ແລະກົກໄມ້ທັງປວງໃນທົ່ງນາຈະຕົບມື. [13]ກົກໄມ້ແປກຈະງອກຂຶ້ນຕາງກົກໜາມ ແລະຕົ້ນຫອມຈະງອກຂຶ້ນແທນເຄືອໜາມ ແລະການນີ້ຈະເປັນຊື່ສຽງສຳລັບພຣະເຢໂຮວາແມ່ນສຳລັບລັດສະໝີອັນຕະຫຼອດໄປເປັນ-ນິດທີ່ຈະບໍ່ຖືກທຳລາຍ.

**ດານຽນ 7:13–14** [13]ຂ້ອຍໄດ້ເຫັນນິມິດໃນກາງຄືນແລະເບິ່ງແມ ມີທ່ານຜູ້ໜຶ່ງຄືພຣະບຸດມະນຸດໄດ້ມາດ້ວຍກັນກັບເມກທັງຫຼາຍຈາກຟ້າສະຫວັນແລະໄດ້ມາຫາພຣະອົງຜູ້ຊົງພຣະຊົນຢູ່ເປັນນິດ ເຂົາໄດ້ໃຫ້ທ່ານຫຍັບເຂົ້າໄປໃກ້ພຣະອົງ. [14]ແລະເຂົາໄດ້ເອົາການຄຸ້ມຄອງກັບຄວາມນັບຖືແລະລາຊະການກະສັດໃຫ້ແກ່ທ່ານຜູ້ນີ້ຈົ່ງໃຫ້ຊາວປະເທດກັບຕະກຸນກັບພາສາທັງປວງບົວລະບັດທ່ານ ການຄຸ້ມຄອງຂອງທ່ານເປັນການຄຸ້ມຄອງສືບໆໄປເປັນນິດທີ່ຈະບໍ່ກາຍໄປ ແລະພຣະລາຊະອານາຈັກຂອງທ່ານຈະບໍ່ຖືກທຳລາຍ.

**ເສກາລິຢາ 8:2-5** [2]ພຣະເຢໂຮວາແຫ່ງກອງທັບທັງຫຼາຍກ່າວດັ່ງນີ້ວ່າ "ເຮົາຫວງແຫນດ້ວຍຄວາມຫວງແຫນອັນໃຫຍ່ຂອງຊີໂອນ ແລະເຮົາຫວງແຫນດ້ວຍຄວາມຄຽດອັນເຜົາຮ້ອນຍ້ອນເມືອງນັ້ນ". [3]ພຣະເຢໂຮວາກ່າວດັ່ງນີ້ວ່າ "ເຮົາໄດ້ຫຼີບມາອີກທີ່ຊີໂອນແລະເຮົາຈະ ສະຖິດ ຢູ່ ກາງ ເມືອງ ເຢຣູຊາເລັມ ແລະ ເຢຣູຊາເລັມ ຈະ ມີ ຊື່ວ່າເມືອງ ແຫ່ງຄວາມ ຈິງ ແລະ ພູ ຂອງພຣະເຢໂຮວາ ແຫ່ງກອງທັບ ທັງຫຼາຍ ຈະ ມີຊື່ວ່າພູບໍລິສຸດ". [4]ພຣະເຢໂຮວາ ແຫ່ງກອງທັບ ທັງຫຼາຍກ່າວດັ່ງນີ້ວ່າ "ພວກຄົນ ເຖົ້າ ແລ້ວ ແລະຜູ້ຍິງ ເຖົ້າ ແລ້ວ ຈະຍັງນັ່ງຢູ່ໃນຖະໜົນທັງຫຼາຍໃນເຢຣູຊາເລັມທຸກຄົນຖືໄມ້ເທົ້າໃນມືຍ້ອນອາຍຸສູງຫຼາຍ. [5]ແລະຖະໜົນກວ້າງຂວາງທັງຫຼາຍ ໃນ ເມືອງຈະ ເຕັມດ້ວຍພວກເດັກນ້ອຍຊາຍຍິງພວມຫຼິ້ນໃນກາງຖະໜົນກວ້າງນັ້ນ".

**ມັດທາຍ 19:27-30** [27]ແລ້ວເປໂຕທູນຕອບວ່າ, "ເບິ່ງແມ, ຂ້ານ້ອຍທັງຫຼາຍໄດ້ສະຫຼະໝົດທຸກສິ່ງແລ້ວແລະໄດ້ຕິດຕາມທ່ານມາ ພວກຂ້ານ້ອຍຈະໄດ້ຫຍັງແດ່?" [28]ພຣະເຢຊູຊົງກ່າວກັບເຂົາວ່າ, "ເຮົາບອກພວກທ່ານຕາມຄວາມຈິງວ່າ ໃນໂລກໃໝ່ຄາວເມື່ອບຸດມະນຸດຈະນັ່ງເທິງພຣະທີ່ນັ່ງອັນຮຸ່ງເຮືອງຂອງຕົນນັ້ນຝ່າຍພວກທ່ານທີ່ຕິດຕາມ ເຮົາມາ ກໍຈະໄດ້ນັ່ງເທິງບັນລັງສິບສອງບ່ອນພິພາກສາພວກອິດສາຣາເອັນສິບສອງຕະກຸນເໝືອນກັນ. [29]ຜູ້ໃດສະຫຼະເຮືອນ, ຫຼືອ້າຍ ເອື້ອຍນ້ອງ, ຫຼືບິດາມານດາ, ຫຼືລູກຫຼືໄຮ່ນາເພາະເຫັນແກ່ນາມຂອງເຮົາ ຜູ້ນັ້ນຈະໄດ້ຮັບຜົນຕອບແທນຮ້ອຍທໍ່ແລະຈະໄດ້ຮັບມໍລະດົກຄືຊີວິດອັນຕະຫຼອດໄປເປັນນິດ. [30]ແຕ່ມີຫຼາຍຄົນທີ່ເປັນຕົ້ນຈະກັບເປັນປາຍແລະຜູ້ທີ່ເປັນປາຍຈະກັບເປັນຕົ້ນ."

**ມັດທາຍ 8:11** ເຮົາບອກທ່ານທັງຫຼາຍວ່າຈະມີຫຼາຍຄົນຈາກທິດຕາເວັນອອກ ແລະທິດຕາເວັນຕົກມານັ່ງຮ່ວມ ໂຕະກັບອັບຣາຮາມ, ອີຊາກ, ແລະຢາໂຄບໃນແຜ່ນດິນສະຫວັນ.





ຖ້າມກາງເຄື່ອງຮອງຕີນທຽນເຫຼົ່ານັ້ນມີຜູ້ໜຶ່ງເໝືອນບຸດມະ-
ນຸດ ຊົງສວມເຄື່ອງສະຫຼອງກວມພຣະບາດ ແລະຊົງຮັດສາຍ
14 ປະຄົດທອງຄຳທີ່ພຣະອຸລະ*ຂອງພຣະອົງ. [໑໔]ພຣະສຽນ*ແລະ
ພຣະເກສາ*ຂອງພຣະອົງຂາວເໝືອນຂົນແກະສີຂາວ ແລະ
ຂາວ ເໝືອນດັ່ງຫິມະ ພຣະເນດ*ຂອງພຣະອົງເໝືອນດັ່ງ
15 ແປວໄຟ. [໑໕]ພຣະບາດຂອງພຣະອົງເໝືອນດັ່ງທອງເຫຼືອງ
ກັ່ງງ ເໝືອນກັບວ່າໄດ້ຫຼອມໃຫ້ບໍລິສຸດແລ້ວ ພຣະສຸລະສຽງ
16 ຂອງພຣະອົງເໝືອນດັ່ງສຽງນ້ຳຢ່າງຫຼວງຫຼາຍ. [໑໖]ພຣະຫັດ
ກຳ້ຂວາຂອງພຣະອົງຊົງຖືດາວເຈັດດວງ ມີພຣະແສງ*ສອງ
ຄົມອອກມາຈາກພຣະໂອດ* ແລະພຣະພັກຂອງພຣະອົງ
17 ເໝືອນດັ່ງດວງອາທິດທີ່ສ່ອງແສງກ້າ. [໑໗]ເມື່ອຂ້າພະເຈົ້າໄດ້
ເຫັນພຣະອົງ ຂ້າພະເຈົ້າກົ້ມລົງແທບພຣະບາດຂອງພຣະອົງ
ເໝືອນດັ່ງຄົນທີ່ຕາຍແລ້ວ ແຕ່ພຣະອົງຊົງຢຽດພຣະຫັດກຳ້
ຂວາບາຍຂ້າພະເຈົ້າ ແລ້ວຊົງກ່າວວ່າ, "ຢ່າຊູ່ຢ້ານ ຝ່າຍເຮົາ
18 ເປັນຜູ້ຕົ້ນແລະເປັນຜູ້ປາຍ: [໑໘]ແລະເປັນຜູ້ມີຊີວິດຢູ່ ເຮົາໄດ້
ຕາຍແລ້ວ ແຕ່ເບິ່ງແມ, ເຮົາກໍມີຊີວິດຢູ່ຕະຫຼອດໄປເປັນນິດ
ອາແມນ, ແລະເຮົາຖືລູກກະແຈແຫ່ງນະຮົກແລະແຫ່ງຄວາມ
19 ຕາຍ. [໑໙]ເຫດສະນັ້ນຈົ່ງຂຽນເຫດການທັງຫຼາຍທີ່ເຈົ້າໄດ້ເຫັນ
ຄືເຫດການທີ່ເປັນຢູ່ດຽວນີ້ ກັບທັງເຫດການທີ່ຈະເກີດຂຶ້ນໃນ
20 ພາຍໜ້າເໝືອນກັນ. [໒໐]ສ່ວນຄວາມເລິກລັບຂອງດວງດາວ
ທັງເຈັດທີ່ເຈົ້າໄດ້ເຫັນໃນມືເບື້ອງຂວາຂອງເຮົາ ແລະເຄື່ອງ
ຮອງຕີນທຽນທອງຄຳທັງເຈັດນັ້ນ ກໍຄືດາວເຈັດດວງນັ້ນໄດ້-
ແກ່ ທູດ*ຂອງ ພຣະເຈົ້າ ໃນ ຄຣິສຕະຈັກ ທັງ ເຈັດ ແລະ ເຄື່ອງ
ຮອງຕີນທຽນທັງເຈັດນັ້ນໄດ້ແກ່ຄຣິສຕະຈັກທັງເຈັດ.

* 1:3 ພາສາອັງກິດ "blessed" ກໍແປອອກວ່າ "ເປັນສຸກ" ທັງ "ໄດ້ຮັບພຣະພອນ" ກໍໄດ້

1:4 "ຄຣິສຕະຈັກ" ໝາຍຄວາມວ່າ "ຊຸມນຸມ" ແຫ່ງພຣະຄຣິດ

1:6 "ອາແມນ" ເປັນພາສາເຮັບເຣີ ແປວ່າ "ເປັນຢ່າງນັ້ນ" "ຂໍໃຫ້ເປັນຢ່າງນັ້ນ" ຫຼື

ອາດແປວ່າ “ຈິງແທ້“ “ຢ່າງແນ່ນອນ”
1:8 “ອາລະຟາແລະໂອເມຄາ” ເປັນຕົວອັກສອນທຳອິດແລະສຸດທ້າຍຂອງພາສາກຣີກ ຊຶ່ງມີຮູບຮ່າງຄື: A ແລະ Ω
1:13 “ພຣະອຸລະ” ເປັນລາຊາສັບທີ່ໝາຍຄວາມວ່າ “ເອິກ”
1:14 “ພຣະສຽນ” ກັບ “ພຣະເກສາ” ເປັນລາຊາສັບທີ່ໝາຍຄວາມວ່າ “ຫົວ” ກັບ “ຜົມ” “ພຣະເນດ” ໝາຍຄວາມວ່າ “ຕາ”
1:16 “ພຣະແສງ” ຄື “ດາບ” ແລະ “ພຣະໂອດ” ຄື “ປາກ”
1:20 “ທູດຂອງພຣະເຈົ້າ” ໝາຍຄວາມວ່າ “ເທວະດາຂອງພຣະເຈົ້າ” ກໍໄດ້

# ບົດທີ 2

1 [໑]“ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງເອ
ເຟໂຊວ່າ, ພຣະອົງຜູ້ຊົງຖືດາວທັງເຈັດໄວ້ໃນພຣະຫັດເບື້ອງ
ຂວາ ແລະສະເດັດໄປມາໃນຖ້າມກາງເຄື່ອງຮອງຕີນທຽນ
2 ທອງຄຳທັງເຈັດນັ້ນ ຊົງກ່າວດັ່ງນີ້ວ່າ, [໒]“ເຮົາຮູ້ຈັກການກະທຳ
ຂອງເຈົ້າ, ຮູ້ຈັກການໜັກໜ່ວງແລະຄວາມພຽນອົດທົນຂອງ
ເຈົ້າ ແລະຮູ້ຈັກວ່າເຈົ້າບໍ່ສາມາດທົນຕໍ່ຄົນຊົ່ວ: ເຈົ້າໄດ້ລອງ
ໃຈຄົນເຫຼົ່ານັ້ນທີ່ອວດວ່າເປັນອັກຄະສາວົກ ແຕ່ເຂົາບໍ່ເປັນ
3 ແລະເຈົ້າເຫັນວ່າເຂົາເປັນຄົນຂີ້ຕົວະ. [໓]ເຮົາຮູ້ວ່າເຈົ້າໄດ້ອົດ-
ທົນ, ມີຄວາມພຽນ, ແລະໄດ້ຍາກລຳບາກ ເພາະເຫັນແກ່
4 ນາມຂອງເຮົາ, ແລະບໍ່ໄດ້ເມື່ອຍລ້າໄປ. [໔]ແຕ່ເຮົາມີຂໍ້ຕໍ່ວ່າ
5 ເຈົ້າ ຄືເຈົ້າໄດ້ປະຖິ້ມຄວາມຮັກເດີມຂອງເຈົ້າເສຍ.[໕]ເຫດສະ-
ນັ້ນຈົ່ງລະນຶກວ່າເຈົ້າໄດ້ຕົກຈາກສະພາບໃດ ແລ້ວຈົ່ງກັບໃຈ
ເສຍໃໝ່ແລະເຮັດຕາມຢ່າງເດີມ; ຖ້າບໍ່ດັ່ງນັ້ນເຮົາຈະມາຫາ
ເຈົ້າ ແລະຈະຍົກເຄື່ອງຮອງຕີນທຽນຂອງເຈົ້າອອກຈາກບ່ອນ
6 ມັນ ເວັ້ນໄວ້ແຕ່ເຈົ້າຈະກັບໃຈເສຍໃໝ່. [໖]ດີແຕ່ເຈົ້າຍັງມີສິ່ງ
ນີ້ ຄືເຈົ້າກຽດຊັງກິດຈະການຂອງພວກນີໂກລາຍເຕ ຊຶ່ງເຮົາ
7 ເອງກໍກຽດຊັງເໝືອນກັນ. [໗]ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະ
ວິນຍານຊົງກ່າວແກ່ຄຣິສຕະຈັກທັງຫຼາຍ ຜູ້ໃດມີໄຊຊະນະ



ຢາໂຄບໃນບ່ອນທີ່ປູ່ຍ່າຕານາຍຂອງທ່ານໄດ້ອາໄສຢູ່ແລະເຂົາຈະຕັ້ງຢູ່ທີ່ນັ້ນ ທັງເຂົາເອງກັບລູກຫຼານທັງຫຼາຍຕະຫຼອດໄປເປັນນິດ ແລະທ່ານດາວິດຂ້າໃຊ້ຂອງເຮົາຈະເປັນເຈົ້ານາຍຂອງເຂົາສືບໆໄປເປັນນິດ. [26]ແລະເຮົາຈະຕັ້ງຄຳສັນຍາແຫ່ງຄວາມສຸກສຳລານກັບເຂົາຊຶ່ງເປັນຄຳສັນຍາອັນຕະຫຼອດໄປເປັນນິດແລະເຮົາຈະຕັ້ງເຂົາໄວ້ແລະໃຫ້ເຂົາມາກທະວີຂຶ້ນແລະເຮົາຈະຕັ້ງບ່ອນບໍລິສຸດຂອງເຮົາໄວ້ໃນທ່າມກາງເຂົາຢູ່ຕະຫຼອດໄປເປັນນິດ. [27]ແລະພຳໜັກອາໄສຂອງເຮົາຈະຢູ່ນຳເຂົາແລະເຮົາຈະເປັນພຣະເຈົ້າຂອງເຂົາແລະເຂົາຈະເປັນພວກຂອງເຮົາ. [28]ແລະພວກຕ່າງປະເທດຈະຮູ້ຈັກວ່າຝ່າຍເຮົາ ເຮົາເປັນພຣະເຢໂຮວາຜູ້ຕັ້ງພວກອິດສະຣາເອນໄວ້ເປັນຊາດບໍລິສຸດໃນ ເມື່ອບ່ອນບໍລິສຸດຂອງເຮົາຈະຢູ່ໃນທ່າມກາງເຂົາສືບໆໄປເປັນນິດ”.

**ເສກາລິຢາ14:16–20**[16]ແລະຢູ່ມາຄົນທັງປວງທີ່ເຫຼືອຢູ່ຈາກຊາວປະເທດທັງປວງທີ່ໄດ້ມາຕໍ່ສູ້ເຢຣູຊາເລັມກໍຈະໄດ້ຂຶ້ນໄປທຸກປີໆເພື່ອຈະຂາບໄຫວ້ຕໍ່ໜ້າພຣະມະຫາກະສັດພຣະເຢໂຮວາແຫ່ງກອງທັບທັງຫຼາຍແລະເພື່ອຈະໄດ້ຖືເທດສະການປຸກຕູບຢູ່. [17]ແລະຢູ່ມາຄອບຄົວໃດຈາກແຜ່ນດິນໂລກທີ່ບໍ່ຂຶ້ນໄປເຢຣູຊາເລັມເພື່ອຂາບໄຫວ້ຕໍ່ໜ້າພຣະມະຫາກະສັດພຣະເຢໂຮວາແຫ່ງກອງທັບທັງຫຼາຍຝົນຈະບໍ່ຕົກເທິງຄອບຄົວນັ້ນ. [18]ແລະຖ້າຄອບຄົວເອຢິບຊຶ່ງຂາດຝົນແລ້ວບໍ່ຂຶ້ນໄປແລະບໍ່ມາເຂົາຈະຖືກໂຣຄາໄພທີ່ພຣະເຢໂຮວາຈະໃຊ້ຖືກຊາວປະເທດທັງຫຼາຍທີ່ບໍ່ຂຶ້ນໄປຖືເທດສະການປຸກຕູບຢູ່ທັງຫຼາຍ. [19]ອັນນີ້ຈະເປັນໂທດບາບຂອງຊາວເອຢິບແລະໂທດບາບຂອງຊາວປະເທດທັງປວງທີ່ບໍ່ຂຶ້ນໄປຖືເທດສະການປຸກຕູບຢູ່ທັງຫຼາຍນັ້ນ. [20]ໃນວັນນັ້ນເທິງໝາກກະດິງຂອງມ້າທັງຫຼາຍເຂົາຈະຄວັດວ່າ “ຄວາມບໍລິສຸດສຳລັບພຣະເຢໂຮວາ” ແລະໝໍ້ໃຫຍ່ທັງຫຼາຍໃນວິຫານຂອງພຣະເຢໂຮວາຈະເປັນຄືຊາມທັງຫຼາຍຕໍ່ໜ້າແທ່ນບູຊາ.

ບໍ່ມີຜູ້ໃດຈະໃຫ້ເຂົາຢ້ານຕໍ່ໄປ. 29ແລະເຮົາຈະຕັ້ງພືນລະໄມ້ຕົ້ນໜຶ່ງທີ່ມີຊື່ສຽງໄວ້ສຳລັບເຂົາແລະເຂົາຈະບໍ່ເປັນທີ່ຍົກເອົາໄປດ້ວຍຄວາມອຶດເຂົ້າໃນປະເທດແລະເຂົາຈະບໍ່ຖືກຄວາມປະຈານຂາຍ-ໜ້າຈາກພວກຕ່າງປະເທດຕໍ່ໄປ. 30ແລະເຂົາຈະຮູ້ຈັກວ່າເຮົາແມ່ນພຣະເຢໂຮວາພຣະເຈົ້າຂອງເຂົາສະຖິດຢູ່ກັບເຂົາແລະເຂົາຄືຄອບ-ຄົວອິດສະຣາເອນເປັນພວກຂອງເຮົາ" ພຣະອົງເຈົ້າພຣະເຢໂຮວາກ່າວດັ່ງນັ້ນ. 31"ແລະຝ່າຍພວກທ່ານຜູ້ເປັນຝູງແກະຂອງເຮົາຝູງແກະໃນປ່າຫຍ້າຂອງເຮົາເປັນຄົນຝ່າຍເຮົາ ເຮົາເປັນພຣະເຈົ້າຂອງພວກທ່ານ" ພຣະອົງເຈົ້າພຣະເຢໂຮວາກ່າວດັ່ງນັ້ນ.

**ເອເສກຽນ 37:21-28** 21ແລະຈົ່ງບອກເຂົາວ່າອົງພຣະເຈົ້າພຣະເຢໂຮວາກ່າວດັ່ງນີ້ວ່າ "ເບິ່ງເຖີດເຮົາຈະເອົາລູກຫຼານອິດສະຣາເອນອອກມາຈາກທ່າມກາງພວກຕ່າງປະເທດບ່ອນເຂົາໄດ້ໄປນັ້ນແລະເຮົາຈະໂຮມເຂົາໄວ້ມາຈາກທຸກທິດແລະເຮົາຈະໃຫ້ເຂົາເຂົ້າໄປໃນແຜ່ນດິນຂອງເຂົາ. 22ແລະເຮົາຈະໃຫ້ເຂົາເປັນພວກອັນດຽວເທິງພູທັງຫຼາຍໃນປະເທດອິດສະຣາເອນ ກະສັດອົງດຽວຈະເປັນກະສັດຂອງເຂົາທັງປວງແລະເຂົາຈະບໍ່ເປັນພວກສອງຄົວຕໍ່ໄປແລະເຂົາຈະບໍ່ແຍກຈາກກັນເປັນນະຄອນສອງຕອນ. 23ແລະເຂົາຈະບໍ່ໃຫ້ຕົວເປັນຖ່ອຍຮ້າຍດ້ວຍຮູບພະທັງຫຼາຍກັບສິ່ງຂອງໜ້າກຽດຊັງທັງຫຼາຍກັບການຜິດລ່ວງທັງປວງຂອງເຂົາແລະເຮົາຈະຊ່ອຍເຂົາໃຫ້ພົ້ນຈາກບ່ອນຢູ່ທັງປວງທີ່ເຂົາໄດ້ເຮັດບາບນັ້ນແລະເຮົາຈະຊຳລະລ້າງເຂົາແລະເຂົາຈະເປັນພວກຂອງເຮົາແລະຝ່າຍເຮົາ ເຮົາຈະເປັນພຣະເຈົ້າຂອງເຂົາ. 24ແລະຂ້າໃຊ້ຂອງເຮົາແມ່ນດາວິດຈະເປັນກະສັດຂອງເຂົາແລະຈະມີຜູ້ລ້ຽງຜູ້ດຽວສຳລັບເຂົາທັງປວງແລະເຂົາຈະທຽວໄປຕາມຂໍ້ບັງຄັບທັງຫຼາຍຂອງເຮົາແລະເຂົາຈະຖືຮັກສາກົດເກນຕາມກຳນົດກົດໝາຍຂອງເຮົາ. 25ແລະເຂົາຈະອາໄສຢູ່ໃນປະເທດທີ່ເຮົາໄດ້ປະທານໃຫ້ແກ່ຂ້າໃຊ້ຂອງເຮົາຄື





ເຮົາຈະໃຫ້ຜູ້ນັ້ນກິນພືນຈາກຕົ້ນໄມ້ສຳລັບຊີວິດຊຶ່ງຢູ່ໃນທີ່ສຸ
8 ຂະເສີມຂອງພຣະເຈົ້າ." ໘"ຈົ່ງຂຽນໄປຍັງທູດຂອງພຣະເຈົ້າ
ໃນຄຣິສຕະຈັກທີ່ເມືອງຊະມີນາວ່າ 'ພຣະອົງຜູ້ຊົງເປັນຜູ້ຕົ້ນ
ແລະເປັນຜູ້ປາຍ, ຜູ້ຊົງສິ້ນພຣະຊົນແລ້ວແລະກັບຄືນມາອີກ
9 ໄດ້ຊົງກ່າວດັ່ງນີ້ວ່າ, ໙"ເຮົາຮູ້ຈັກການກະທຳຂອງເຈົ້າ ແລະຮູ້
ວ່າພວກເຈົ້າມີຄວາມທຸກລຳບາກແລະຍາກຈົນ (ແຕ່ວ່າເຈົ້າ
ກໍຮັ່ງມີ) ແລະຮູ້ຄວາມໝິ່ນປະໝາດຂອງຄົນເຫຼົ່ານັ້ນທີ່ເວົ້າ
ວ່າເຂົາເປັນພວກຢິວ ແລະເຂົາບໍ່ເປັນ ແຕ່ພວກເຂົາເປັນຂອງ
10 ໂຮງທຳມະເທດສະໜາແຫ່ງຊາຕານ.໑໐ຢ່າຊູ່ຢ້ານຄວາມທຸກ-
ທໍລະມານທີ່ເຈົ້າຈະໄດ້ຮັບນັ້ນ ເບິ່ງແມ, ພະຍາມານຈະຈັບ
ພວກເຈົ້າບາງຄົນຖິ້ມໃສ່ຄຸກເພື່ອທົດລອງໃຈພວກເຈົ້າ ແລະ
ພວກ ເຈົ້າ ຈະ ໄດ້ ຮັບ ຄວາມທຸກ ຍາກ ລຳບາກ ໃນ ລະຫວ່າງ
ສິບວັນ ແຕ່ເຈົ້າຈົ່ງມີໃຈຊື່ສັດສຸດຈະລິດຈົນເຖິງຄວາມຕາຍ
11 ແລ້ວເຮົາຈະເອົາມົງກຸດແຫ່ງຊີວິດໃຫ້ແກ່ເຈົ້າ. ໑໑ຜູ້ໃດມີຫູ
ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງ-
ຫຼາຍ ຜູ້ທີ່ມີໄຊຊະນະຈະບໍ່ຖືກອັນຕະລາຍຈາກຄວາມຕາຍ
12 ຄັ້ງທີ່ສອງ'." ໑໒"ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະ
ຈັກທີ່ເມືອງເປຄາໂມວ່າ 'ພຣະອົງຜູ້ຊົງຖືພຣະແສງສອງຄົມ
13 ນັ້ນ ຊົງກ່າວດັ່ງນີ້ວ່າ, ໑໓"ເຮົາຮູ້ຈັກການກະທຳຂອງເຈົ້າ ແລະ
ທີ່ຢູ່ຂອງເຈົ້າ ຮູ້ວ່າທີ່ນັ້ນເປັນບັນລັງຂອງຊາຕານ ເຈົ້າຍັງຍຶດ
ຖືນາມຂອງເຮົາໄວ້ໝັ້ນ ແລະບໍ່ໄດ້ປະຕິເສດຄວາມເຊື່ອໃນ
ເຮົາ ແມ່ນວ່າໃນເວລາທີ່ ອັນຕິປາ ຜູ້ເປັນພະຍານທີ່ຊື່ສັດ
ຂອງເຮົາ ໄດ້ຖືກຂ້າເສຍໃນທ່າມກາງພວກເຈົ້າໃນບ່ອນທີ່
14 ຊາຕານຢູ່ກໍຕາມ. ໑໔ແຕ່ເຮົາມີຂໍ້ທີ່ຈະຕໍ່ວ່າເຈົ້າບາງຂໍ້ ທີ່ນັ້ນ
ມີບາງຄົນໃນພວກເຈົ້າທີ່ຖືຕາມຄຳສອນຂອງບາລາອາມ ຜູ້
ໄດ້ສອນໃຫ້ກະສັດບາລາກ ກໍ່ເຫດຕໍ່ໜ້າພວກອິສະຣາເອນ
ເພື່ອໃຫ້ເຂົາຫຼົງຜິດ ຄືໃຫ້ເຂົາກິນຂອງທີ່ໄດ້ບູຊາແກ່ພະທຽມ

15 ແລ້ວ ແລະໃຫ້ເຂົາລ່ວງປະເວນີຜິດຊາຍຍິງ. [໑໕]ຢ່າງດຽວກັນ
ໃນພວກເຈົ້າມີບາງຄົນທີ່ໄດ້ຖືຕາມຄຳສອນແຫ່ງພວກນີໂກ
16 ລາຍເຕ ຊຶ່ງເຮົາເອງກໍກຽດຊັງ. [໑໖]ເຫດສະນັ້ນຈົ່ງກັບໃຈເສຍ
ໃໝ່ ຖ້າບໍ່ດັ່ງນັ້ນເຮົາຈະຮີບມາຫາເຈົ້າ ແລະຈະສູ້ຮົບກັບເຂົາ
17 ເຫຼົ່ານັ້ນດ້ວຍດາບຈາກປາກຂອງເຮົາ. [໑໗]ຜູ້ໃດມີຫູ ຈົ່ງຟັງຂໍ້-
ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫຼາຍ ເຮົາ
ຈະໃຫ້ມານາ*ທີ່ເຊື່ອງໄວ້ແກ່ຜູ້ທີ່ມີໄຊຊະນະ ແລະຈະໃຫ້
ຫີນຂາວແກ່ຜູ້ນັ້ນ ໃນຫີນນັ້ນມີຊື່ໃໝ່ຈາລຶກໄວ້ ຊຶ່ງບໍ່ມີຜູ້ໃດ
18 ຮູ້ນອກຈາກຜູ້ທີ່ຮັບເທົ່ານັ້ນ'." [໑໘]"ຈົ່ງຂຽນໄປຍັງທູດຂອງພຣະ
ເຈົ້າໃນຄຣິສຕະຈັກທີ່ເມືອງທົວເຕຣາວ່າ 'ພຣະບຸດຂອງພຣະ
ເຈົ້າ ຜູ້ຊົງມີພຣະເນດເໝືອນດັ່ງແປວໄຟ ແລະມີພຣະບາດ
19 ເໝືອນດັ່ງທອງເຫຼືອງກັ່ງ ຊົງກ່າວດັ່ງນີ້ວ່າ, [໑໙]"ເຮົາຮູ້ຈັກການ
ກະທຳຂອງເຈົ້າ ຮູ້ຄວາມຮັກ, ການປະຕິບັດ, ຄວາມເຊື່ອ,
ແລະຄວາມພຽນອົດທົນຂອງເຈົ້າ, ແລະການໜັກໜ່ວງຂອງ
ເຈົ້າ; ຮູ້ວ່າການເບື້ອງປາຍຂອງເຈົ້າມີຫຼາຍກວ່າເບື້ອງຕົ້ນ.
20 [໒໐]ແຕ່ເຮົາມີຂໍ້ທີ່ຈະຕໍ່ວ່າເຈົ້າບາງສິ່ງ ຄືເຈົ້າຍອມທົນຟັງຜູ້ຍິງ
ຊື່ເຢຊາເບັນ ທີ່ອ້າງຕົວເປັນຜູ້ປະກາດພຣະທຳ ຍິງນັ້ນສອນ
ແລະລໍ້ລວງພວກຂ້ອຍໃຊ້ຂອງເຮົາໃຫ້ລ່ວງປະເວນີຜິດຊາຍ
21 ຍິງ ແລະໃຫ້ກິນຂອງທີ່ບູຊາແກ່ພະທຽມແລ້ວ. [໒໑]ເຮົາໄດ້ໃຫ້
ຍິງນັ້ນມີໂອກາດທີ່ຈະກັບໃຈໃໝ່ ແຕ່ນາງບໍ່ຢາກກັບໃຈຈາກ
22 ການລ່ວງປະເວນີຜິດຊາຍຍິງຂອງຕົນ. [໒໒]ເບິ່ງແມ ເຮົາຈະຖິ້ມ
ຍິງນັ້ນໄວ້ເທິງບ່ອນນອນ ແລະຄົນທັງຫຼາຍທີ່ລ່ວງປະເວນີ
ຜິດຊາຍຍິງກັບຍິງນັ້ນ ເຮົາຈະຖິ້ມໄວ້ໃນຄວາມທຸກລຳບາກ
ອັນໜັກ ເວັ້ນໄວ້ແຕ່ຄົນເຫຼົ່ານັ້ນຈະກັບໃຈເສຍໃໝ່ຈາກບັນ-
23 ດາການກະທຳຂອງພວກເຂົາ. [໒໓]ຝ່າຍລູກຂອງຍິງນັ້ນ ເຮົາ
ຈະປະຫານໃຫ້ພວກເຂົາຕາຍເສຍ ແລະຄຣິສຕະຈັກທັງປວງ
ຈະໄດ້ຮູ້ວ່າເຮົານີ້ເປັນຜູ້ຊົງສືບຄົ້ນຈິດໃຈ ເຮົາຈະໃຫ້



ຂຶ້ນ ໄປ ພູ ແຫ່ງ ພຣະເຢໂຮວາ ແລະ ໄປ ວິຫານ ແຫ່ງ ພຣະເຈົ້າ ຂອງ ຢາໂຄບ ແລະ ພຣະອົງ ຈະ ສັ່ງສອນ ພວກ ເຮົາ ໃຫ້ ຮູ້ຈັກ ຮີດຄອງ ທັງ-ຫຼາຍ ຂອງ ພຣະອົງ ແລະ ພວກ ເຮົາ ຈະ ທຽວ ໄປ ທາງ ທັງຫຼາຍ ຂອງ ພຣະອົງ" ເຫດວ່າພະບັນຍັດຈະອອກມາຈາກຊີໂອນແລະພຣະຄຳຂອງພຣະເຢໂຮວາຈະອອກມາຈາກເຢຣູຊາເລັມ. [3]ແລະພຣະອົງຈະຕັດສິນໃນລະຫວ່າງປະເທດທັງຫຼາຍແລະຈະບອກຄວາມຍຸຕິທຳແກ່ພວກປະເທດອັນໃຫຍ່ທີ່ຫ່າງໄກແລະເຂົາຈະເອົາດາບຂອງເຂົາຕີເປັນໝາກສິບ ແລະເອົາຫອກຕີເປັນພ້າ ປະເທດນີ້ຈະບໍ່ຍົກດາບຕໍ່ສູ້ປະເທດນັ້ນແລະເຂົາຈະບໍ່ເຝິກຫັດຕົວສຳລັບການເສິກຕໍ່ໄປ.

**ເອເສກຽນ 34:23–31** [23]ແລະເຮົາຈະຕັ້ງຜູ້ລ້ຽງແກະຜູ້ໜຶ່ງທີ່ຈະລ້ຽງເຂົາຄືດາວິດຜູ້ຂ້າໃຊ້ຂອງເຮົາ ຜູ້ນີ້ຈະລ້ຽງເຂົາ ຜູ້ນີ້ຈະເປັນຜູ້ລ້ຽງຂອງເຂົາ. [24]ແລະຝ່າຍເຮົາພຣະເຢໂຮວາເຮົາຈະເປັນພຣະເຈົ້າຂອງເຂົາແລະດາວິດຂ້າໃຊ້ຂອງເຮົາຈະເປັນເຈົ້ານາຍໃນທ່າມກາງເຂົາ ຝ່າຍເຮົາພຣະເຢໂຮວາເຮົາໄດ້ບອກໄວ້ແລ້ວ. [25]ແລະເຮົາຈະຕັ້ງຄຳສັນຍາເປັນໄມຕີກັນໄວ້ກັບເຂົາ ແລະສັດຮ້າຍທັງຫຼາຍເຮົາຈະໃຫ້ດັບເສຍຈາກປະເທດນີ້ ແລະເຂົາຈະຢູ່ໃນປ່າດ້ວຍຄວາມປອດໄພແລະຈະນອນຫຼັບໃນດົງທັງຫຼາຍ. [26]ແລະເຮົາຈະຕັ້ງເຂົາໄວ້ເປັນສາຍເຫດຄວາມພອນກັບທັງບ່ອນແວດລ້ອມພູນ້ອຍຂອງເຮົາແລະເຮົາຈະໃຫ້ຝົນຕົກໃນລະດູຝົນໃຫ້ເປັນຝົນແຫ່ງຄວາມພອນ. [27]ແລະກົກໄມ້ໃນທົ່ງນາຈະເກີດໝາກແລະດິນຈະເກີດຜົນລະປູກແລະເຂົາຈະອາໄສຢູ່ໃນດິນຂອງເຂົາດ້ວຍຄວາມປອດໄພແລະເຂົາຈະຮູ້ຈັກວ່າເຮົາແມ່ນພຣະເຢໂຮວາເມື່ອເຮົາຈະໄດ້ໃຫ້ເຄື່ອງຜູກແອກຂອງເຂົາຂາດແລ້ວແລະເມື່ອເຮົາຈະໄດ້ຊ່ອຍເຂົາໃຫ້ພົ້ນຈາກເງື້ອມມືຂອງຄົນທັງຫຼາຍທີ່ໄດ້ບັງຄັບເຂົາໃຫ້ເປັນທາດ. [28]ແລະເຂົາຈະບໍ່ເປັນຂອງຮິບເອົາສຳລັບພວກຕ່າງປະເທດຕໍ່ໄປແລະສັດປ່າທັງຫຼາຍຈະບໍ່ກັດກິນເຂົາຕໍ່ໄປ ແຕ່ວ່າເຂົາຈະຢູ່ດ້ວຍຄວາມປອດໄພແລະ

ຊຳລຸດນັ້ນຂຶ້ນໃໝ່ແລະເຮົາຈະກໍ່ສ້າງອີກເໝືອນດັ່ງໃນຄາວບູຮານ. [12]ເພື່ອເຂົາຈະມີໄວ້ຍັງສິ່ງທີ່ເຫຼືອຢູ່ແຕ່ເອດອມກັບຊາວປະເທດທັງປວງທີ່ຮ້ອງອອກນາມຊື່ຂອງເຮົາ" ພຣະເຢໂຮວາທີ່ກະທຳການນັ້ນໄດ້ກ່າວດັ່ງນັ້ນ. [13]ພຣະເຢໂຮວາກ່າວວ່າ "ເບິ່ງເຖີດວັນເວລາກໍມາເຖິງເມື່ອຄົນທີ່ໄຖນາຈະທັນຄົນທີ່ກ່ຽວເຂົ້າແລະຄົນທີ່ຢຽບໝາກອາງຸ່ນຈະທັນຄົນທີ່ຫວ່ານກ້າ ແລະນ້ຳອາງຸ່ນໃໝ່ຈະໄຫຼລົງຈາກພູທັງຫຼາຍ ແລະພູທັງປວງຈະເປື່ອຍລົງ." [14]ແລະເຮົາຈະໃຫ້ຄົນຂ້າທາດທັງຫຼາຍຈາກພວກຂອງເຮົາພວກອິດສະຣາເອນຄືນມາອີກແລະເຂົາຈະກໍ່ສ້າງເມືອງທີ່ຊຳລຸດທັງຫຼາຍ ແລະຈະຢູ່ທີ່ນັ້ນ ເຂົາຈະປູກສວນອາງຸ່ນແລະກິນນ້ຳອາງຸ່ນນັ້ນ ເຂົາຈະປູກສວນທັງຫຼາຍ ແລະກິນຜົນລະປູກຈາກສວນນັ້ນ. [15]ແລະເຮົາຈະປູກເຂົາເທິງດິນຂອງເຂົາແລະເຂົາຈະບໍ່ເປັນທີ່ກິ່ນອີກຈາກດິນຂອງເຂົາທີ່ເຮົາໄດ້ປະທານໃຫ້ແກ່ເຂົາ" ພຣະເຢໂຮວາພຣະເຈົ້າຂອງເຈົ້າກ່າວດັ່ງນັ້ນ.

**ເອຊາຢາ 11:6-9** [6]ໝາໄນຈະອາໄສຢູ່ນຳລູກແກະແລະເສືອດາວຈະນອນຢູ່ນຳລູກແບ້ ລູກງົວກັບລູກສິງກັບສັດອ້ວນພີຈະຢູ່ນຳກັນ ແລະເດັກນ້ອຍຈະນຳສັດນັ້ນໄປ. [7]ງົວຕົວແມ່ຈະກິນຫຍ້າດ້ວຍກັນກັບໝີຕົວແມ່ ລູກສັດນັ້ນຈະນອນຕິດກັນ ແລະສິງຈະກິນເຟືອງຄືງົວ. [8]ເດັກນ້ອຍທີ່ກິນນົມຈະຫຼິ້ນເທິງຮູງູຮ້າຍ ແລະເດັກນ້ອຍທີ່ຢ່ານົມແລ້ວຈະຢຽດມືຈົກຮູງູຮ້າຍ. [9]ເຂົາຈະບໍ່ເຮັດຜິດ ແລະຈະບໍ່ທຳລາຍສິ່ງໃດຢູ່ພູບໍລິສຸດຂອງເຮົາທົ່ວໄປ ເຫດວ່າແຜ່ນດິນຈະເຕັມດ້ວຍຄວາມຮູ້ຈັກພຣະເຢໂຮວາຄືນ້ຳທັງຫຼາຍທີ່ຖ້ວມພື້ນນ້ຳທະເລ.

**ມີກາ 4:1-3** [1]ແລະຢູ່ມາໃນຄາວທີ່ສຸດພູແຫ່ງວິຫານຂອງພຣະເຢໂຮວາຈະຕັ້ງຢູ່ເທິງຍອດພູທັງຫຼາຍ ແລະຈະສູງກວ່າພູນ້ອຍທັງຫຼາຍ ແລະຊາວປະເທດທັງຫຼາຍຈະໄປໂຮມຢູ່ທີ່ນັ້ນ. [2]ແລະພວກຕ່າງປະເທດທັງຫຼາຍຈະໄປແລະກ່າວວ່າ "ຈົ່ງມາແລະຈົ່ງພາກັນ





ລາງວັນແກ່ເຈົ້າທັງຫຼາຍທຸກຄົນຕາມການກະທຳຂອງຕົນ.
24 ໒໔"ແຕ່ພວກເຈົ້າແລະຄົນອື່ນທີ່ຍັງເຫຼືອຢູ່ທີ່ເມືອງທົວເຕຣາ ຄື
ຜູ້ທີ່ບໍ່ໄດ້ຖືຄຳສອນນີ້ ແລະບໍ່ຮູ້ຈັກສິ່ງທີ່ເຂົາເອີ້ນວ່າຄວາມ
ເລິກລັບຂອງຊາຕານນັ້ນ ເຮົາຂໍບອກວ່າເຮົາບໍ່ເອົາພາລະ
25 ອື່ນໃດວາງໃສ່ພວກເຈົ້າ. ໒໕ແຕ່ສິ່ງທີ່ເຈົ້າທັງຫຼາຍມີຢູ່ແລ້ວ
26 ນັ້ນ ຈົ່ງຍຶດຖືໄວ້ໃຫ້ໝັ້ນຈົນກວ່າເຮົາຈະມາ. ໒໖ຜູ້ທີ່ມີໄຊຊະ-
ນະແລະຖືຮັກສາກິດຈະການຂອງເຮົາໄວ້ຈົນເຖິງທີ່ສຸດ ເຮົາ
27 ຈະໃຫ້ຜູ້ນັ້ນມີອຳນາດປົກຄອງບັນດາປະຊາຊາດ: ໒໗ແລະ
ຜູ້ນັ້ນຈະບັງຄັບບັນຊາເຂົາດ້ວຍຄ້ອນເຫຼັກ ເໝືອນດັ່ງຊ່າງ
ໝໍ້ທຳລາຍໝໍ້ດິນໃຫ້ແຕກໝຸ່ນເສຍ ຕາມທີ່ເຮົານີ້ໄດ້ຮັບອຳ-
28 ນາດຈາກພຣະບິດາຂອງເຮົາເໝືອນກັນ. ໒໘ແລະເຮົາຈະປະ-
29 ທານດາວຮຸ່ງອະລຸນໃຫ້ແກ່ຜູ້ນັ້ນ. ໒໙ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມ
ທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫຼາຍ'."

2:17 "ມານາ" ຄືອາຫານທິບທີ່ພຣະເຈົ້າຊົງປະທານໃຫ້ພວກອິສຣາເອນໄດ້ຮັບກິນຂະນະເຂົາເຈົ້າເດີນທາງໄປມາທີ່ຖິ່ນທຸລະກັນດານຫຼັງຈາກການອົບພະຍົບມາຈາກປະເທດເອຢິບ ມານາມີສີຂາວ ມີຮູບເໝືອນເມັດພືດ ແລະມີຣົດເໝືອນເຂົ້າໜົມແຜ່ນປະສົມນ້ຳເຜິ້ງ.

# ບົດທີ 3

1 ໑"ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງ
ຊາເດວ່າ 'ພຣະອົງຜູ້ຊົງມີພຣະວິນຍານທັງເຈັດຂອງພຣະ
ເຈົ້າ ແລະຊົງມີດາວທັງເຈັດດວງນັ້ນ ຊົງກ່າວດັ່ງນີ້ວ່າ "ເຮົາ
ຮູ້ຈັກການກະທຳຂອງເຈົ້າ ເຈົ້າຜູ້ຊື່ວ່າມີຊີວິດຢູ່ ແຕ່ວ່າເຈົ້າ
2 ຕາຍເສຍແລ້ວ. ໒ເຈົ້າຈົ່ງຕື່ນຂຶ້ນແລະເຊີດຊູສ່ວນທີ່ເຫຼືອ ຊຶ່ງ
ໃກ້ຈະຕາຍແລ້ວນັ້ນໃຫ້ແຂງແຮງຂຶ້ນ ເພາະວ່າເຮົາບໍ່ພົບ
3 ການກະທຳຂອງເຈົ້າສຳເລັດດີຕໍ່ພຣະພັກພຣະເຈົ້າ. ໓ເຫດ
ສະນັ້ນເຈົ້າຈົ່ງຈຳໄວ້ວ່າເຈົ້າໄດ້ຮັບແລະໄດ້ຍິນຢ່າງໃດ ຈົ່ງຖື

ຮັກສາແລະກັບໃຈເສຍໃໝ່ ຖ້າເຈົ້າບໍ່ຕື່ນຂຶ້ນ ເຮົາຈະມາຫາ
ເຈົ້າເໝືອນດັ່ງຂະໂມຍ ແລະເຈົ້າຈະບໍ່ຮູ້ວ່າຍາມໃດເຮົາຈະ
4 ມາຫາເຈົ້າ. ໔ແຕ່ວ່າໃນເມືອງຊາເດເຈົ້າກໍຍັງມີຄົນຈຳນວນ
ໜ້ອຍທີ່ບໍ່ໄດ້ເຮັດເສື້ອຜ້າຂອງຕົນເປື້ອນເປິ ຄົນເຫຼົ່ານັ້ນຈະ
ນຸ່ງເຄື່ອງຂາວຍ່າງໄປກັບເຮົາ ເພາະເຂົາເປັນຄົນສົມຄວນຢູ່
5 ແລ້ວ. ໕ຜູ້ທີ່ມີໄຊຊະນະ ຜູ້ນັ້ນຈະຫົ່ມເຄື່ອງຂາວແລະເຮົາຈະ
ບໍ່ລຶບຊື່ຂອງຜູ້ນັ້ນອອກເສຍຈາກທະບຽນແຫ່ງຊີວິດຈັກເທື່ອ
ແຕ່ເຮົາຈະຮັບຮອງຊື່ຂອງຜູ້ນັ້ນຕໍ່ພຣະພັກພຣະບິດາຂອງ
6 ເຮົາ ແລະຕໍ່ໜ້າຝູງເທວະດາຂອງພຣະອົງ. ໖ຜູ້ໃດມີຫູ ຈົ່ງຟັງ
ຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສຕະຈັກທັງຫຼາຍ’.”
7 ໗“ຈົ່ງຂຽນໄປຍັງທູດຂອງພຣະເຈົ້າໃນຄຣິສຕະຈັກທີ່ເມືອງ
ຟີລາເດັນເຟຍວ່າ ‘ພຣະອົງຜູ້ບໍລິສຸດ, ຜູ້ສັດທ່ຽງຈິງ, ຜູ້ຖືລູກ
ກະແຈຂອງດາວິດ, ຜູ້ຊົງໄຂແລ້ວຈະບໍ່ມີຜູ້ໃດອັດ, ຜູ້ຊົງອັດ
8 ແລ້ວຈະບໍ່ມີຜູ້ໃດໄຂ, ຊົງກ່າວດັ່ງນີ້ວ່າ, ໘“ເຮົາຮູ້ຈັກການ
ກະທຳຂອງເຈົ້າ ເບິ່ງແມ, ເຮົາໄດ້ໃຫ້ມີປະຕູໄຂຢູ່ຕໍ່ໜ້າເຈົ້າ
ຊຶ່ງບໍ່ມີຜູ້ໃດອັດໄດ້ ເຮົາຮູ້ວ່າເຈົ້າມີກຳລັງພຽງເລັກນ້ອຍ ແຕ່
ກໍຍັງໄດ້ຖືຮັກສາພຣະຄຳຂອງເຮົາແລະບໍ່ໄດ້ປະຕິເສດນາມ
9 ຂອງເຮົາ.໙ເບິ່ງແມ, ເຮົາຈະໃຫ້ພັກພວກຂອງໂຮງທຳມະເທດ
ສະໜາແຫ່ງຊາຕານທີ່ຕົວະວ່າເຂົາເອງເປັນຊາດຢິວ ແຕ່ບໍ່
ໄດ້ເປັນນັ້ນ ມາຂາບລົງແທບຕີນຂອງເຈົ້າ ແລະຈະໃຫ້ເຂົາ
10 ຮູ້ວ່າຝ່າຍເຮົາໄດ້ຮັກເຈົ້າ. ໑໐ເພາະວ່າເຈົ້າໄດ້ຖືຮັກສາພຣະ
ຄຳຂອງເຮົາຊຶ່ງໃຫ້ມີຄວາມພຽນອົດທົນ ຝ່າຍເຮົາຈະປ້ອງ
ກັນເຈົ້າເໝືອນກັນໃຫ້ພົ້ນຈາກການທົດລອງທີ່ຈວນຈະມີມາ
ທົ່ວໂລກ ເພື່ອຈະລອງໃຈຄົນທັງປວງທີ່ຢູ່ເໜືອໜ້າແຜ່ນດິນ.
11 ໑໑ເບິ່ງແມ ເຮົາຈະມາໃນໄວໆນີ້ ຈົ່ງຍຶດໝັ້ນຢູ່ໃນສິ່ງທີ່ເຈົ້າມີ
12 ນັ້ນ ເພື່ອບໍ່ໃຫ້ຜູ້ໃດຍາດຊິງເອົາມົງກຸດຂອງເຈົ້າໄປໄດ້. ໑໒ຜູ້
ທີ່ມີໄຊຊະນະ ເຮົາຈະໃຫ້ຜູ້ນັ້ນເປັນເສົາໃນພຣະວິຫານພຣະ



# ລາຊະອານາຈັກ 1000 ປີຂອງອົງພຣະເຢຊູຄຣິດ ຈະເປັນແບບໃດ?

**ເສກາລີຢາ 14:8-9** 8ແລະຢູ່ມາໃນວັນນັ້ນມີນໍ້າແຫ່ງຊີວິດທີ່ຈະອອກມາຈາກເຢຣູຊາເລັມ ເຄິ່ງໜຶ່ງໄຫຼໄປສູ່ນໍ້າທະເລທິດຕາເວັນ-ອອກ ແລະ ເຄິ່ງ ໜຶ່ງ ໄຫຼ ໄປ ສູ່ ນໍ້າ ທະເລ ທິດຕາເວັນຕົກ ນໍ້າ ນັ້ນ ຈະໄຫຼໃນລະດູຮ້ອນແລະໄຫຼໃນລະດູໜາວ, 9ແລະພຣະເຢໂຮວາຈະເປັນພຣະມະຫາກະສັດເທິງແຜ່ນດິນໂລກທົ່ວໄປ ໃນວັນນັ້ນຈະມີພຣະເຢໂຮວາອົງດຽວແລະນາມຊື່ຂອງພຣະອົງຈະເປັນອັນດຽວ.

**ເຢເລມີຢາ 31:33-34** 33ພຣະເຢໂຮວາກ່າວວ່າ “ເຫດວ່າພາຍຫຼັງວັນທັງຫຼາຍນັ້ນເຮົາຈະຕັ້ງຄຳສັນຍາໄວ້ດ້ວຍກັນກັບຄອບຄົວອິດສະຣາເອນເປັນດັ່ງນີ້ ເຮົາຈະເອົາພຣະບັນຍັດຂອງເຮົາວາງໄວ້ພາຍໃນເຂົາແລະຈະຂຽນໄວ້ທີ່ຫົວໃຈຂອງເຂົາ ເຮົາຈະເປັນພຣະເຈົ້າຂອງເຂົາແລະເຂົາຈະເປັນພວກຂອງເຮົາ. 34ແລະເຂົາທຸກຄົນຈະບໍ່ສອນຊາວບ້ານບໍ່ສອນພີ່ນ້ອງຂອງຕົນວ່າ “ຈົ່ງຮູ້ຈັກພຣະເຢໂຮວາ” ເຫດວ່າເຂົາທັງປວງຈະຮູ້ຈັກເຮົາຕັ້ງແຕ່ຜູ້ນ້ອຍໃນພວກນັ້ນຈົນຜູ້ໃຫຍ່” ພຣະເຢໂຮວາກ່າວດັ່ງນີ້ “ເຫດວ່າເຮົາຈະຍົກການອະທຳຂອງເຂົາແລະເຮົາຈະບໍ່ຈື່ການບາບຂອງເຂົາຕໍ່ໄປ”.

**ເອຊາຢາ 16:5** ແລະພຣະທີ່ນັ່ງອັນໜຶ່ງຈະຕັ້ງຢູ່ດ້ວຍຄວາມດີແລະມີພຣະອົງທີ່ຈະນັ່ງຢູ່ຫັ້ນດ້ວຍຄວາມຈິງໃນເຕັນອາໄສຂອງດາວິດ ຜູ້ນັ້ນຈະຕັດສິນແລະຊອກຫາຄວາມສັດຊື່ແລະຈະໃຫ້ຄວາມຊອບທຳມາໂດຍໄວ.

**ອາໂມດ 9:11-15** 11“ໃນວັນນັ້ນເຮົາຈະຍົກພຳໜັກຂອງດາວິດທີ່ຕົກແລ້ວໃຫ້ຕັ້ງໃໝ່ອີກ ເຮົາຈະອັດປ່ອງທັງຫຼາຍແລະຈະກໍ່ສ້າງສິ່ງ

ຮ້ອງທຸກ ຍ້ອນ ລູກ ຊາຍ ໂທນ ແລະ ເຂົາ ຈະ ມີ ຄວາມ ຂື່ນ ໃຈ ຍ້ອນ ພຣະອົງເໝືອນດັ່ງມີຄວາມຂື່ນໃຈຍ້ອນລູກກົກ.

**ເສກາລິຢາ 13:6** ແລະເຂົາຈະຖາມເພິ່ນວ່າ “ເຈົ້າບາດມືຍ້ອນສິ່ງໃດ” ແລະເພິ່ນຈະຕອບວ່າ “ຂ້ອຍໄດ້ບາດໃນເຮືອນຂອງພວກສ່ຽວ”.

**ເສກາລິຢາ 14:2-4** [2]ແລະເຮົາຈະໂຮມພວກຕ່າງປະເທດທັງປວງໄວ້ຕໍ່ສູ້ເຢຣູຊາເລັມເພື່ອເຮັດເສິກ ເຂົາຈະຍຶດເມືອງແລະປຸ້ນເຮືອນທັງຫຼາຍ ແລະ ຂົ່ມຂືນ ທຳສຳເລົາ ຜູ້ຍິງ ທັງຫຼາຍ ແລະ ເຄິ່ງ ເມືອງ ຈະໄປ ເປັນທາດ ແລະລາຊະດອນທີ່ ເຫຼືອ ຈະບໍ່ ຈິບຫາຍ ໄປ ຈາກ ເມືອງ. [3]ແລະພຣະເຢໂຮວາຈະສະເດັດອອກໄປເຮັດເສິກຕໍ່ສູ້ຊາວປະເທດທັງຫຼາຍນັ້ນເໝືອນດັ່ງໃນວັນທີ່ພຣະອົງໄດ້ເຮັດເສິກໃນວັນເສິກສົງຄາມ. [4]ແລະໃນວັນນັ້ນຕີນຂອງພຣະອົງຈະຢືນຢູ່ເທິງພູກົກໝາກກອກທີ່ຢູ່ຖັດເຢຣູຊາເລັມທິດຕາເວັນອອກແລະພູກົກໝາກກອກຈະແຍກ ອອກ ທາງ ກາງ ຈາກ ທິດຕາເວັນອອກ ໄປ ທາງ ທິດຕາເວັນຕົກເປັນຮ່ອມອັນກວ້າງໃຫຍ່ ແລະ ເຄິ່ງພູນັ້ນຈະຖອຍໄປທາງທິດເໜືອແລະເຄິ່ງໜຶ່ງໄປທາງທິດໃຕ້.

**ເສກາລິຢາ 14:12** ແລະຊາວປະເທດທັງປວງທີ່ຈະໄດ້ເຮັດເສິກຕໍ່ສູ້ເມືອງເຢລູຊາເລມພຣະເຢໂຮວາຈະຕີເຂົາດ້ວຍໂຣຄາໄພນີ້: ເນື້ອໜັງຂອງເຂົາຈະເປື່ອຍໄປທັງຢືນ ຕາຂອງເຂົາຈະເປື່ອຍໄປໃນຮູຕາ ແລະລີ້ນຂອງເຂົາຈະເປື່ອຍໄປໃນປາກ.





ເຈົ້າຂອງເຮົາ ແລະຜູ້ນັ້ນຈະບໍ່ອອກໄປນອກພຣະວິຫານຈັກ
ເທື່ອ ເຮົາຈະຈາລຶກພຣະນາມແຫ່ງພຣະເຈົ້າຂອງເຮົາໃສ່ຕົວ
ຜູ້ນັ້ນ ກັບທັງຊື່ມະຫານະຄອນແຫ່ງພຣະເຈົ້າຂອງເຮົາ ຄືກຸງ
ເຢຣູຊາເລັມໃໝ່ ຊຶ່ງລົງມາແຕ່ສະຫວັນຈາກພຣະເຈົ້າຂອງ
ເຮົາ ແລະ ເຮົາ ຈະ ຈາລຶກ ນາມ ໃໝ່ ຂອງ ເຮົາ ໃສ່ ຜູ້ ນັ້ນ ເໝືອນ
13 ກັນ. [໑໓]ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່
14 ຄຣິສຕະຈັກທັງຫຼາຍ’.” [໑໔]“ຈົ່ງຂຽນໄປຍັງທູດຂອງພຣະເຈົ້າ
ໃນຄຣິສຕະຈັກທີ່ເມືອງລາວດີເກອາວ່າ ‘ພຣະອົງຜູ້ຊົງເປັນ
ອາແມນນັ້ນ, ຊົງເປັນພະຍານທີ່ສັດຊື່ແລະທ່ຽງທຳ, ຊົງເປັນ
ປະຖົມເຫດແຫ່ງສິ່ງສາລະພັດຊຶ່ງພຣະເຈົ້າໄດ້ຊົງສ້າງ ໄດ້ຊົງ
15 ກ່າວດັ່ງນີ້ວ່າ, [໑໕]“ເຮົາຮູ້ຈັກການກະທຳຂອງເຈົ້າ ເຈົ້າບໍ່ເຢັນ
16 ບໍ່ຮ້ອນ ເຮົາຢາກໃຫ້ເຈົ້າເຢັນຫຼືຮ້ອນ. [໑໖]ເພາະເຈົ້າພຽງແຕ່
ອຸ່ນໆ ບໍ່ເຢັນບໍ່ຮ້ອນ ດັ່ງນັ້ນເຮົາຈະຄາຍເຈົ້າອອກຈາກປາກ
17 ຂອງເຮົາ. [໑໗]ເພາະເຈົ້າເວົ້າວ່າ, “ຂ້ອຍຮັ່ງມີແລ້ວ, ໄດ້ຊັບສິ່ງ
ຂອງທະວີຂຶ້ນ ຂ້ອຍບໍ່ຕ້ອງການສິ່ງໃດ” ເຈົ້າບໍ່ຮູ້ວ່າເຈົ້າເປັນ
ຄົນທຸກໄຮ້ເຂັນໃຈ, ເປັນຄົນໜ້າສົງສານ, ເປັນຄົນຂັດສົນ,
18 ເປັນ ຄົນ ຕາບອດ ແລະ ເປືອຍ ກາຍ ຢູ່, [໑໘]ເຫດ ນັ້ນ ເຮົາ ເຕືອນ
ສະຕິເຈົ້າໃຫ້ຊື້ຄຳທີ່ຫຼອມໃຫ້ບໍລິສຸດແລ້ວຈາກເຮົາ ເພື່ອເຈົ້າ
ຈະໄດ້ເປັນຄົນຮັ່ງມີ ແລະໃຫ້ເຈົ້າຊື້ເສື້ອຜ້າຂາວນຸ່ງຫົ່ມຕົວ
ເພື່ອ ປົກ ບັງ ຄວາມ ລະອາຍ ຂອງ ການ ເປືອຍ ກາຍ ຂອງ ເຈົ້າ
ບໍ່ໃຫ້ປາກົດ ແລະຊື້ຢາໃສ່ຕາຂອງເຈົ້າເພື່ອເຈົ້າຈະໄດ້ເຫັນ-
19 ຮຸ່ງ. [໑໙]ຝ່າຍເຮົາ, ເຮົາຮັກຜູ້ໃດເຮົາກໍຕິຕຽນຂ້ຽນສອນຜູ້ນັ້ນ
20 ເຫດສະນັ້ນ ຈົ່ງມີໃຈຮ້ອນຮົນແລະຕັ້ງໃຈເສຍໃໝ່. [໒໐]ເບິ່ງ
ແມ, ເຮົາຢືນເຄາະຢູ່ທີ່ປະຕູ ຖ້າຜູ້ໃດໄດ້ຍິນສຽງຂອງເຮົາ
ແລະໄຂປະຕູ ເຮົາຈະເຂົ້າໄປຫາຜູ້ນັ້ນ ເຮົາຈະຮັບປະທານ
ອາຫານຮ່ວມກັບຜູ້ນັ້ນ ແລະຜູ້ນັ້ນຈະຮັບປະທານອາຫານ
21 ຮ່ວມກັບເຮົາ. [໒໑]ຜູ້ທີ່ມີໄຊຊະນະເຮົາຈະໃຫ້ຜູ້ນັ້ນນັ່ງກັບເຮົາ

ເທິງບັນລັງຂອງເຮົາ ເໝືອນກັບທີ່ເຮົາມີໄຊຊະນະແລ້ວ ແລະ
ໄດ້ນັ່ງກັບພຣະບິດາຂອງເຮົາເທິງລາຊະບັນລັງຂອງພຣະອົງ.
22 “‘ຜູ້ໃດມີຫູ ຈົ່ງຟັງຂໍ້ຄວາມທີ່ພຣະວິນຍານຊົງກ່າວແກ່ຄຣິສ
ຕະຈັກທັງຫຼາຍ’.”

## ບົດທີ 4

1 [໑]ພາຍຫຼັງເຫດການທັງຫຼາຍນີ້ຂ້າພະເຈົ້າໄດ້ເບິ່ງ ແລະເຫັນ
ດັ່ງນີ້, ມີປະຕູໄຂຢູ່ໃນສະຫວັນ ແລະພຣະສຸລະສຽງທຳອິດ
ທີ່ຂ້າພະເຈົ້າໄດ້ຍິນ ຊົງກ່າວກັບຂ້າພະເຈົ້າເໝືອນດັ່ງສຽງ
ແກວ່າ, “ຈົ່ງລຸກຂຶ້ນມາທີ່ນີ້ ແລະເຮົາຈະສະແດງໃຫ້ເຈົ້າເຫັນ
2 ເຫດການທີ່ຕ້ອງເກີດຂຶ້ນໃນພາຍໜ້າ.” [໒]ໃນທັນໃດນັ້ນຂ້າ-
ພະເຈົ້າໄດ້ປະກອບໄປດ້ວຍພຣະວິນຍານ ແລະເບິ່ງແມ, ມີ
ລາຊະບັນລັງຕັ້ງຢູ່ໃນສະຫວັນ, ມີທ່ານອົງໜຶ່ງປະທັບຢູ່ເທິງ
3 ບັນລັງນັ້ນ. [໓]ທ່ານຜູ້ປະທັບເທິງລາຊະບັນລັງນັ້ນມີລັກສະນະ
ເໝືອນແກ້ວມະນີໂຊດແລະແກ້ວພິລາ ມີຮຸ້ງກິນນ້ຳອ້ອມ
4 ຮອບລາຊະບັນລັງນັ້ນຄ້າຍຄືແສງແກ້ວມໍລະກົດ. [໔]ອ້ອມ
ຮອບລາຊະບັນລັງນັ້ນມີບັນລັງອີກຊາວສີ່ອັນ ແລະມີຜູ້ອາ-
ວຸໂສຊາວສີ່ທ່ານນັ່ງເທິງບັນລັງເຫຼົ່ານັ້ນ ທຸກທ່ານນຸ່ງເຄື່ອງ
5 ຂາວ ແລະມີມົງກຸດທອງຄຳສວມຫົວ. [໕]ມີຟ້າແມບຟ້າຮ້ອງ
ແລະສຽງຕ່າງໆ ດັງອອກມາຈາກລາຊະບັນລັງນັ້ນ ແລະມີ
ໂຄມໄຟເຈັດໜ່ວຍໄຕ້ໄວ້ຕໍ່ໜ້າລາຊະບັນລັງນັ້ນ ໂຄມໄຟ
6 ເຫຼົ່ານັ້ນຄືວິນຍານທັງເຈັດຂອງພຣະເຈົ້າ.[໖]ຢູ່ຕໍ່ໜ້າລາຊະບັນ-
ລັງມີທະເລແກ້ວເໝືອນແກ້ວມະນີ ຢູ່ຖ້າມກາງແລະອ້ອມ
ຮອບລາຊະບັນລັງທຸກດ້ານມີສັດໂລກສີ່ໂຕ ຊຶ່ງມີຕາເຕັມທັງ
7 ຂ້າງໜ້າແລະຂ້າງຫຼັງ . [໗]ສັດໂຕທີໜຶ່ງເໝືອນສິງ, ໂຕທີສອງ
ເໝືອນງົວນ້ອຍ, ໂຕທີສາມມີໜ້າເໝືອນມະນຸດ, ແລະຕົວທີ



**ເສຟານີຢາ 1:14–18** [14]ວັນອັນໃຫຍ່ຂອງພຣະເຢໂຮວາໄດ້ມາໃກ້ແລ້ວ ວັນນັ້ນຫຍັບມາໂດຍໄວ ສຽງແຫ່ງວັນຂອງພຣະເຢໂຮວາຄົນໃຈກ້າຫານຈະຮ້ອງສຽງຂົມຂື່ນໃນທີ່ນັ້ນ. [15]ເປັນວັນແຫ່ງຄວາມຄຽດຮ້ອນ ເປັນວັນຂັດສົນກັບຄວາມລຳຄານໃຈ ເປັນວັນແຫ່ງການທຳລາຍກັບສິ່ງຊຳລຸດ ເປັນວັນມືດມົວເປັນວັນເມກບົດບັງດຳໜາ. [16]ວັນນັ້ນມີສຽງແກອັນດັງຕໍ່ສູ້ເມືອງແຂງແຮງທັງຫຼາຍແລະຕໍ່ສູ້ປ້ອມປ້ອງກັນສູງໆ. [17]ແລະເຮົາຈະໃຫ້ຄວາມຂັດສົນມາເຖິງຄົນທັງ-ຫຼາຍແລະເຂົາຈະຫຍ່ວໄປຄືຄົນຕາບອດ ເຫດວ່າເຂົາໄດ້ເຮັດບາບຕໍ່ສູ້ພຣະເຢໂຮວາແລະເລືອດຂອງເຂົາຈະຖອກລົງຄືຂີ້ຝຸ່ນດິນແລະເນື້ອເຂົາຈະກາຍເປັນຄືອາຈົມ. [18]ເງິນຄຳຂອງເຂົາຈະຊ່ອຍເຂົາບໍ່ໄດ້ໃນວັນແຫ່ງຄວາມຄຽດຮ້ອນຂອງພຣະເຢໂຮວາ ແລະດ້ວຍໄຟແຫ່ງຄວາມຫວງແຫນຂອງພຣະອົງບັນດາປະເທດຈະໄໝ້ເສຍເຫດວ່າພຣະອົງຈະຈູດ ແມ່ນແລ້ວຈະທຳລາຍຊາວປະເທດທັງປວງຢ່າງໄວວາ.

**ເສຟານີຢາ 3:8** ພຣະເຢໂຮວາກ່າວວ່າ “ເຫດສະນັ້ນຈົ່ງຄອຍຖ້າເຮົາຈົນວັນທີ່ເຮົາໄດ້ລຸກຂຶ້ນ ຈົ່ງຈັບເອົາເຂົ້າຂອງ ເຫດວ່າເຮົາໄດ້ໝາຍໃຈຈະໂຮມພວກຕ່າງປະເທດໄວ້ ຈະໃຫ້ລາຊະອານາຈັກທັງ-ຫຼາຍມາໂຮມກັນ ຈົ່ງໃຫ້ຄວາມເຄືອງໃຈຂອງເຮົາຖອກໃສ່ເທິງເຂົາກັບຄວາມຄຽດອັນເຜົາຮ້ອນຂອງເຮົາ ເຫດວ່າບັນດາແຜ່ນດິນໂລກຈະໄໝ້ໃນໄຟແຫ່ງຄວາມຫວງແຫນຂອງເຮົາ.”

**ເສກາລີຢາ 12:9–10** [9]ແລະຢູ່ມາໃນວັນນັ້ນເຮົາຈະຊອກຫາທຳ-ລາຍພວກຕ່າງປະເທດທັງປວງທີ່ມາຕໍ່ສູ້ເຢຣູຊາເລັມ. [10]ແລະເຮົາຈະຖອກວິນຍານແຫ່ງພຣະຄຸນ ແລະການອ້ອນວອນເທິງຄອບຄົວດາວິດ ເທິງຊາວເມືອງເຢຣູຊາເລັມ ແລະ ເຂົາຈະຫຼຽວເບິ່ງເຮົາຜູ້ທີ່ເຂົາໄດ້ແທງແລ້ວ ແລະ ເຂົາຈະຮ້ອງທຸກຍ້ອນພຣະອົງ ເໝືອນດັ່ງ

ຂອງພຣະອົງລົງໄປທີ່ນັ້ນ. 12ພວກຕ່າງປະເທດຈົ່ງຕື່ນ ແລະຂຶ້ນໄປຮ່ວມ ໂຢຊາຟາດ ເພາະວ່າເຮົາຈະນັ່ງທີ່ນັ້ນຈົ່ງຕັດສິນພວກຕ່າງປະເທດທັງປວງຈາກທົ່ວທຸກບ່ອນ. 13ຈົ່ງເອົາເຫຼັກກ່ຽວໄປກ່ຽວເພາະວ່າເຂົ້ານາສຸກແລ້ວ ຈົ່ງລົງໄປເພາະວ່າທີບທືນເຕັງໝາກອາງຸ່ນກໍເຕັມແລ້ວ ທີບທັງຫຼາຍກໍລົ້ນແລ້ວເພາະວ່າຄວາມອະທຳຂອງເຂົາມີຫຼວງຫຼາຍ. 14ຝູງຄົນຫຼາຍ, ຝູງຄົນຈຳນວນຫຼາຍໃນຮ່ອມແຫ່ງການຕັດສິນເພາະວ່າວັນຂອງພຣະເຢໂຮວາມາໃກ້ແລ້ວໃນຮ່ອມແຫ່ງການຕັດສິນ. 15ຕາເວັນກັບເດືອນຈະມືດມົວໄປແລະດາວທັງຫຼາຍຈະບໍ່ສ່ອງແຈ້ງ. 16ແລະພຣະເຢໂຮວາຈະຮ້ອງທະນາດຈາກຊີໂອນແລະຈາກເຢລູຊາເລມພຣະອົງຈະເປັ່ງສຽງຮ້ອງແລະຟ້າທັງຫຼາຍກັບແຜ່ນດິນໂລກຈະຫວັ່ນໄຫວ ແລະພຣະເຢໂຮວາຈະເປັນບ່ອນທີ່ເພິ່ງສຳລັບພວກຂອງພຣະອົງ ແລະຈະເປັນທີ່ເພິ່ງຂອງພວກລູກຫຼານອິດສະຣາເອນ. 17ແລະພວກທ່ານຈະຮູ້ຈັກວ່າຝ່າຍເຮົາຄືພຣະເຢໂຮວາເຮົາແມ່ນພຣະເຈົ້າຂອງພວກທ່ານ ຜູ້ສະຖິດຢູ່ຊີໂອນພູບໍລິສຸດຂອງເຮົາ ແລະເຢຣູຊາເລັມຈະເປັນເມືອງບໍລິສຸດ ແລະຄົນແຂກທັງຫຼາຍຈະບໍ່ກາຍໄປໃນເມືອງນັ້ນອີກຕໍ່ໄປ.

**ມີກາ 5:10-15** 10ພຣະເຢໂຮວາກ່າວວ່າ "ແລະຢູ່ມາໃນວັນນັ້ນເຮົາຈະກຳຈັດມ້າຂອງເຈົ້າຈາກທ່າມກາງເຈົ້າ ແລະເຮົາຈະທຳລາຍລົດທັງຫຼາຍຂອງເຈົ້າ. 11ເຮົາຈະທຳລາຍເມືອງທັງຫຼາຍໃນປະເທດເຈົ້າແລະຈະມ້າງຄ້າຍອັນເຂັ້ມແຂງທັງປວງຂອງເຈົ້າ. 12ເຮົາຈະທຳລາຍວິຊາອາຄົມຈາກມືຂອງເຈົ້າແລະເຈົ້າຈະບໍ່ມີໝໍຜີອີກຕໍ່ໄປ. 13ເຮົາຈະທຳລາຍຮູບຄວັດກັບຮູບຄົນທັງຫຼາຍຈາກທ່າມກາງເຈົ້າເພື່ອເຈົ້າຈະບໍ່ຂາບໄຫວ້ສິ່ງທີ່ມືຂອງເຈົ້າໄດ້ສ້າງນັ້ນອີກ. 14ແລະຮູບພະຍິງທັງຫຼາຍຂອງເຈົ້າເຮົາຈະກິ່ນຈາກທ່າມກາງເຈົ້າແລະເຮົາຈະທຳລາຍເມືອງທັງຫຼາຍຂອງເຈົ້າ. 15ເຮົາຈະແກ້ແຄ້ນພວກຕ່າງປະເທດດ້ວຍຄວາມຄຽດແລະດ້ວຍຄວາມໂກດຮ້າຍຢ່າງທີ່ເຂົາບໍ່ເຄີຍໄດ້ຍິນຂ່າວຈັກເທື່ອ.





8 ສີ່ເໝືອນນົກອິນຊີກຳລັງບິນ. ໘ສັດທັງສີ່ໂຕ ທຸກໂຕມີປີກຫົກ
ປີກ ແລະຂ້າງໃນເຕັມໄປດ້ວຍຕາ ສັດເຫຼົ່ານັ້ນຮ້ອງຕະຫຼອດ
ເວັນຕະຫຼອດຄືນ ບໍ່ຢຸດບໍ່ເຊົາວ່າ, "ບໍລິສຸດ, ບໍລິສຸດ, ບໍລິສຸດ
ອົງພຣະຜູ້ເປັນເຈົ້າຜູ້ຊົງລິດທານຸພາບສູງສຸດ, ຜູ້ຊົງດຳລົງ
ຢູ່ໃນອະດີດ, ຜູ້ຊົງດຳລົງຢູ່ໃນປັດຈຸບັນ, ແລະຜູ້ຈະສະເດັດ
9 ມາ." ໙ແລະເວລາສັດເຫຼົ່ານັ້ນຖວາຍຄຳສັນລະເສີນ, ຖວາຍ
ພຣະກຽດ, ແລະໂມທະນາພຣະຄຸນແດ່ພຣະອົງ, ຜູ້ປະທັບ
ເທິງລາຊະບັນລັງ, ຜູ້ຊົງມີພຣະຊົນດຳລົງຢູ່ຕະຫຼອດໄປເປັນ-
10 ນິດເມື່ອໃດ, ໑໐ເມື່ອນັ້ນບັນດາຜູ້ອາວຸໂສຊາວສີ່ທ່ານກໍຂາບ
ລົງຖວາຍບັງຄົມພຣະອົງຜູ້ປະທັບເທິງລາຊະບັນລັງນັ້ນ ນະ-
ມັດສະການພຣະອົງ ຜູ້ຊົງພຣະຊົນຢູ່ຕະຫຼອດໄປເປັນນິດ
ແລ້ວຖອດມົງກຸດອອກວາງລົງຕໍ່ໜ້າລາຊະບັນລັງຮ້ອງວ່າ,
11 ໑໑"*ຂ້າແດ່ອົງພຣະຜູ້ເປັນເຈົ້າ, ພຣະອົງຊົງສົມຄວນທີ່ຈະໄດ້ຮັບ*
*ຄຳສັນລະເສີນ, ພຣະກຽດ, ແລະລິດເດດ ເພາະວ່າພຣະອົງ*
*ໄດ້ຊົງສ້າງສັບພະສິ່ງທັງປວງ ແລະສັບພະສິ່ງທັງປວງນັ້ນກໍຊົງ*
*ສ້າງຂຶ້ນແລ້ວແລະດຳລົງຢູ່ຕາມຊອບພຣະໄທພຣະອົງ.*"

# ບົດທີ 5

1 ໑ໃນພຣະຫັດເບື້ອງຂວາຂອງພຣະອົງ, ຜູ້ຊົງປະທັບເທິງພຣະ
ລາຊະບັນລັງນັ້ນ ຂ້າພະເຈົ້າໄດ້ເຫັນໜັງສືມ້ວນໜຶ່ງຂຽນໄວ້
2 ທັງຂ້າງໃນແລະຂ້າງນອກ ຕິຕາປະທັບໄວ້ເຈັດດວງ. ໒ແລະ
ຂ້າພະເຈົ້າໄດ້ເຫັນເທວະດາຜູ້ມີລິດຕົນໜຶ່ງປະກາດດ້ວຍ
ສຽງອັນດັງວ່າ, "ຜູ້ໃດໜໍເປັນຜູ້ສົມຄວນຈະແກະຕາປະທັບ
3 ແລະມາຍມ້ວນໜັງສືມ້ວນນີ້ອອກ?" ໓ບໍ່ມີຜູ້ໃດໃນສະຫວັນ,
ເທິງແຜ່ນດິນໂລກ, ຫຼືໃຕ້ແຜ່ນດິນກໍດີ ທີ່ສາມາດມາຍໜັງສື
4 ມ້ວນນັ້ນອອກ ຫຼືເບິ່ງໜັງສືນັ້ນໄດ້. ໔ຂ້າພະເຈົ້າໄດ້ຮ້ອງໄຫ້

ຮ່ຳໄຮຫຼາຍ ເພາະບໍ່ມີຜູ້ໃດສົມຄວນຈະມາຍແລະອ່ານໜັງສື
5 ນັ້ນຫຼືເບິ່ງໄດ້.[໕]ແລ້ວມີຜູ້ໜຶ່ງໃນພວກອາວຸໂສນັ້ນບອກຂ້າພະ-
ເຈົ້າວ່າ, “ຢ່າຮ້ອງໄຫ້ ເບິ່ງແມ, ສິງແຫ່ງຕະກຸນຢູດາ, ໜໍ່ແໜງ
ແຫ່ງເຊື້ອສາຍຂອງດາວິດ ໄດ້ໄຊຊະນະແລ້ວ ຈຶ່ງສາມາດ
ແກະຕາປະທັບທັງເຈັດ ແລະມາຍໜັງສືມ້ວນນັ້ນອອກໄດ້.
6 [໖]ໃນລະຫວ່າງລາຊະບັນລັງກັບສັດທັງສີ່ ແລະໃນຖ້າມກາງ
ພວກອາວຸໂສເຫຼົ່ານັ້ນ ຂ້າພະເຈົ້າໄດ້ເຫັນພຣະເມສານ້ອຍ
ປະທັບຢືນຢູ່ ເໝືອນຖືກຂ້າເພື່ອບູຊາແລ້ວ ພຣະເມສານ້ອຍ
ນັ້ນມີເຂົາເຈັດອັນ, ມີຕາເຈັດໜ່ວຍຊຶ່ງເປັນວິນຍານທັງເຈັດ
7 ຂອງພຣະເຈົ້າທີ່ຊົງໃຊ້ອອກໄປທົ່ວແຜ່ນດິນໂລກ.[໗]ແລະພຣະ
ເມສານ້ອຍນັ້ນໄດ້ເຂົ້າມາຮັບໜັງສືມ້ວນນັ້ນຈາກພຣະຫັດ
ເບື້ອງຂວາຂອງພຣະອົງ ຜູ້ຊົງປະທັບເທິງລາຊະບັນລັງນັ້ນ.
8 [໘]ເມື່ອພຣະອົງຊົງຮັບໜັງສືມ້ວນນັ້ນແລ້ວ ສັດທັງສີ່ກັບພວກ
ອາວຸໂສຊາວສີ່ທ່ານນັ້ນກໍຂາບລົງຖວາຍບັງຄົມພຣະເມສາ
ນ້ອຍ ທຸກທ່ານຖືພິນແລະຂັນຄຳເຕັມດ້ວຍເຄື່ອງຫອມຊຶ່ງ
9 ເປັນຄຳໄຫວ້ວອນຂອງໄພ່ພົນທັງປວງຂອງພຣະເຈົ້າ. [໙]ເຂົາ
ໄດ້ຮ້ອງເພງໃໝ່ວ່າ, “ພຣະອົງຊົງເປັນຜູ້ສົມຄວນຈະຊົງຮັບ
ມ້ວນໜັງສືແລະແກະຕາມ້ວນໜັງສືອອກ ເພາະວ່າພຣະອົງ
ຊົງຖືກຂ້າເພື່ອບູຊາແລ້ວ ແລະດ້ວຍພຣະໂລຫິດຂອງພຣະ
ອົງນັ້ນ ພຣະອົງໄດ້ຊົງໄຖ່ເຮົາທັງຫຼາຍຈາກທຸກເຜົ່າ ທຸກພາ-
10 ສາ ທຸກຊາດ ແລະທຸກປະເທດ ໃຫ້ໄປເຖິງພຣະເຈົ້າ. [໑໐]ພຣະ
ອົງໄດ້ຊົງບັນດານໃຫ້ພວກເຮົາເປັນກະສັດແລະເປັນປະໂລ-
ຫິດແຫ່ງພຣະເຈົ້າຂອງເຮົາ: ແລະພວກເຮົາຈະໄດ້ປົກຄອງ
11 ແຜ່ນດິນໂລກ.” [໑໑]ແລ້ວຂ້າພະເຈົ້າໄດ້ຫຼຽວເບິ່ງ ແລະໄດ້ຍິນ
ສຽງເທວະດາ ເປັນຈຳນວນຫຼວງຫຼາຍນັບເປັນໂກດໆ ແສນໆ
ຊຶ່ງຢູ່ອ້ອມຮອບພຣະລາຊະບັນລັງ, ຮອບສັດ, ແລະຮອບຜູ້
12 ອາວຸໂສທັງຫຼາຍນັ້ນ. [໑໒]ຮ້ອງສຽງດັງວ່າ, “*ພຣະເມສານ້ອຍຜູ້*



ຈະເຂົ້າຊຳລະຕັດສິນກັບເນື້ອໜັງທຸກຢ່າງດ້ວຍໄຟແລະດ້ວຍດາບຂອງພຣະອົງ ແລະຄົນທີ່ພຣະເຢໂຮວາຈະປະຫານຊີວິດກໍຈະມີຫຼາຍຄົນແທ້.

**ເອຊາຢາ 63:1-6** ຜູ້ນີ້ທີ່ມາຈາກປະເທດເອດອມຈາກເມືອງໂບດເຊຣາຖືເສື້ອຜ້າສີແດງຜູ້ນີ້ມີຍົດສັກງາມໃນເສື້ອຜ້າທີ່ຫຽວໄປດ້ວຍລິດເດດອັນໃຫຍ່ຂອງຕົນແມ່ນຜູ້ໃດ? ແມ່ນເຮົາຜູ້ກ່າວດ້ວຍຄວາມຊອບທຳ ຜູ້ມີລິດເດດຊ່ອຍໃຫ້ພົ້ນໄດ້. [2]ເຫດໃດເສື້ອຜ້າຂອງທ່ານມີສີແດງແລະເປັນຄືເສື້ອຜ້າຂອງຄົນທີ່ຢຽບຫີບນ້ຳອາງຸ່ນ? [3]ເຮົາໄດ້ຢຽບຫີບເຕັງນ້ຳອາງຸ່ນແຕ່ຜູ້ດຽວ ແລະພວກຕ່າງປະເທດບໍ່ມີຄົນດຽວໄດ້ຢູ່ຝ່າຍເຮົາ ແລະເຮົາໄດ້ຢຽບເຂົາດ້ວຍຄວາມຄຽດຂອງເຮົາ ແລະເຮົາໄດ້ທັບເຂົາໄວ້ດ້ວຍຄວາມຄຽດອັນເຜົາຮ້ອນຂອງເຮົາ ແລະເລືອດຂອງເຂົາໄດ້ຊິດອອກຖືກເສື້ອຜ້າຂອງເຮົາ ແລະເຮົາຈະໄດ້ໃຫ້ເສື້ອຜ້າທັງປວງນັ້ນເປື້ອນເປີໄປ. [4]ເຫດວ່າວັນຕອບແທນໄດ້ຢູ່ໃນໃຈເຮົາ ແລະປີຂອງຄົນທັງຫຼາຍທີ່ເຮົາໄດ້ໄຖ່ແລ້ວກໍໄດ້ມາແລ້ວ. [5]ເຮົາໄດ້ເບິ່ງແລະບໍ່ມີຄວາມຊິດຊ່ອຍ ແລະເຮົາໄດ້ປະຫຼາດໃຈຍ້ອນບໍ່ມີຜູ້ໃດທີ່ໄດ້ຄ້ຳຊູເຮົາ ແລະແຂນຂອງເຮົາໄດ້ຊ່ອຍເຮົາແລະຄວາມຄຽດຮ້ອນຂອງເຮົາໄດ້ຄ້ຳຊູເຮົາ. [6]ແລະເຮົາໄດ້ຢຽບຢ່ຳພວກຕ່າງປະເທດໃນຄວາມຄຽດຂອງເຮົາແລະໄດ້ໃຫ້ເຂົາເມົາມົວໄປໃນຄວາມຄຽດຮ້ອນຂອງເຮົາແລະເລືອດຂອງເຂົານັ້ນເຮົາໄດ້ໃຫ້ໄຫຼລົງທີ່ດິນ.

**ໂຢເອນ 3:9-17** [9]ຈົ່ງປ່າວປະກາດຄວາມນີ້ໃນທ່າມກາງພວກຕ່າງ-ປະເທດ ຈົ່ງຈັດແຈງການເສິກ ຈົ່ງປຸກຄົນແຮງທັງຫຼາຍໃຫ້ຕື່ນໃຫ້ທະຫານທັງປວງຫຍັບຂຶ້ນມາໃກ້ເຖີ້ນ. [10]ຈົ່ງເອົາໝາກສິບຂອງຕົນຕີເປັນດາບ ແລະຈົ່ງເອົາເຫຼັກກ່ຽວຕີເປັນຫອກ ຄົນອ່ອນແຮງຈົ່ງກ່າວວ່າ “ຂ້ອຍມີແຮງ”. [11]ຊາວປະເທດທັງປວງຈົ່ງແລ່ນມາຈາກທົ່ວທຸກບ່ອນແລະຈົ່ງໂຮມກັນ: ໂອພຣະເຢໂຮວາ ໃຫ້ຄົນແຂງແຮງທັງຫຼາຍ

# ເວລາອົງພຣະເຢຊູຄຣິດຈະມາຕັ້ງ ລາຊະອານາຈັກຂອງພຣະອົງ ເທິງແຜ່ນດິນໂລກນີ້ຈະເປັນແບບໃດ?

**2 ເທຊະໂລນິກ 1:7-9** [7]ແລະທີ່ຈະຊົງໂຜດໃຫ້ເຈົ້າທັງຫຼາຍຜູ້ຖືກຄວາມ ຍາກ ລຳບາກ ນັ້ນ ໄດ້ ຮັບ ຄວາມ ບັນເທົາ ດ້ວຍ ກັນ ກັບ ພວກເຮົາ ເມື່ອ ເວລາ ພຣະເຢຊູ ເຈົ້າ ຈະ ຊົງ ປາກົດ ຈາກ ຟ້າ ສະຫວັນ ພ້ອມດ້ວຍໝູ່ເທວະດາຕົນມີລິດຂອງພຣະອົງ, [8]ໃນແປວໄຟອັນຮ້ອນກ້າເພື່ອຈະລົງໂທດຕອບແທນຄົນທັງປວງທີ່ບໍ່ຮູ້ຈັກພຣະເຈົ້າ ແລະແກ່ຄົນ ທີ່ ບໍ່ ຍອມ ເຊື່ອ ຟັງ ຂ່າວ ປະເສີດ ເລື່ອງ ພຣະເຢຊູຄຣິດ ເຈົ້າ ຂອງເຮົາທັງຫຼາຍ. [9]ຄົນພວກນັ້ນຈະໄດ້ຖືກໂທດຄືຄວາມວິນາດຈິບຫາຍເປັນນິດ ແລະ ແຍກ ຫ່າງ ຈາກ ພຣະພັກ ຂອງ ພຣະຜູ້ ເປັນ ເຈົ້າ ແລະຈາກລິດທານຸພາບອັນຮຸ່ງເຮືອງຂອງພຣະອົງ.

**ຢູດາ 14–15** [14]ດ້ວຍວ່າເອໂນກຜູ້ທີເຈັດນັບຈາກອາດາມໄດ້ທຳນວາຍເຖິງຄົນເຫຼົ່ານີ້ເໝືອນກັນວ່າ, "ເບິ່ງແມ, ອົງພຣະຜູ້ເປັນເຈົ້າໄດ້ສະເດັດມາພ້ອມກັບໄພ່ພົນຂອງພຣະອົງນັບເປັນໝື່ນໆ. [15]ເພື່ອຊົງພິພາກສາລົງໂທດຄົນທັງປວງ ແລະ ຊົງບັນດານໃຫ້ຝູງຄົນທີ່ບໍ່ຢຳເກງ ພຣະເຈົ້າ ຮູ້ສຶກ ຕົວ ເຖິງ ບັນດາ ການ ອະທຳ ທີ່ ເຂົາ ໄດ້ ເຮັດໃນ ການ ບໍ່ ຢຳເກງ ພຣະເຈົ້າ ນັ້ນ ແລະ ຮູ້ສຶກ ຕົວ ເຖິງ ຄຳ ຫຍາບຊ້າ ທີ່ຄົນບາບ ເຫຼົ່ານັ້ນຜູ້ບໍ່ຢຳເກງພຣະເຈົ້າໄດ້ກ່າວໃສ່ຮ້າຍຕໍ່ພຣະອົງ."

**ເອຊາຢາ 66:15–16** [15]ເຫດວ່າເບິ່ງເຖີດ ພຣະເຢໂຮວາຈະສະເດັດມາໃນໄຟແລະລົດທັງຫຼາຍຂອງພຣະອົງເໝືອນດັ່ງລົມຫົວກຸດເພື່ອຈະໄດ້ໃຫ້ຄວາມຄຽດຂອງພຣະອົງກາຍເປັນໄຟອັນໃຫຍ່ແລະຄວາມຕິຕຽນຈາກພຣະອົງຈະກາຍເປັນແປວໄຟ. [16]ພຣະເຢໂຮວາ





*ຖືກຂ້າແລ້ວນັ້ນ ເປັນຜູ້ສົມຄວນໄດ້ຮັບລິດເດດ, ຊັບສົມບັດ,*
*ສະຕິປັນຍາ, ອານຸພາບ, ກຽດຕິຍົດ, ສະຫງ່າລາສີແລະຄຳ*
23 *ສັນລະເສີນ.*" [໑໓]ແລະຂ້າພະເຈົ້າໄດ້ຍິນສຽງສິ່ງທີ່ມີຊີວິດທັງ
ໝົດ ທັງໃນສະຫວັນ, ເທິງແຜ່ນດິນໂລກ, ໃຕ້ແຜ່ນດິນ, ແລະ
ໃນມະຫາສະໝຸດ ຄືສິ່ງທັງປວງຊຶ່ງຢູ່ໃນທີ່ນັ້ນຮ້ອງວ່າ, "*ຂໍ*
*ໃຫ້ຄຳພຣະພອນ, ກຽດຕິຍົດ, ສະຫງ່າລາສີ, ແລະລິດທານຸ*
*ພາບຈົ່ງມີແດ່ພຣະອົງ ຜູ້ຊົງປະທັບເທິງພຣະລາຊະບັນລັງ*
24 *ແລະແດ່ພຣະເມສານ້ອຍ ຕະຫຼອດໄປເປັນນິດ.*" [໑໔]ສັດທັງສີ່
ນັ້ນກໍຮ້ອງວ່າ, "ອາແມນ" ແລະຜູ້ອາວຸໂສທັງຊາວສີ່ຄົນນັ້ນ
ກໍຂາບລົງນະມັດສະການພຣະອົງຜູ້ຊົງດຳລົງຢູ່ຕະຫຼອດໄປ
ເປັນນິດ.

## ບົດທີ 6

1 [໑]ເມື່ອພຣະເມສານ້ອຍຊົງແກະຕາປະທັບດວງທີໜຶ່ງໃນເຈັດ
ດວງນັ້ນອອກແລ້ວ ຂ້າພະເຈົ້າໄດ້ເບິ່ງແລະໄດ້ຍິນສັດໂຕ
ໜຶ່ງໃນສີ່ໂຕນັ້ນຮ້ອງສຽງດັງເໝືອນສຽງຟ້າຮ້ອງວ່າ, "ມາ
2 ເບິ່ງເທາະ." [໒]ຂ້າພະເຈົ້າໄດ້ເບິ່ງແລະເຫັນດັ່ງນີ້, ມີມ້າສີ-
ຂາວໂຕໜຶ່ງອອກມາ ຜູ້ທີ່ຂີ່ມ້ານັ້ນຖືທະນູ ແລະໄດ້ຮັບພຣະ
ລາຊະທານມົງກຸດ ແລ້ວກໍຂີ່ມ້າອອກໄປຢ່າງມີໄຊເພື່ອຈະ
3 ໄຊຊະນະ. [໓]ເມື່ອ ພຣະອົງ ຊົງ ແກະ ຕາ ປະທັບ ດວງ ທີ ສອງ
ນັ້ນແລ້ວ ຂ້າພະເຈົ້າໄດ້ຍິນສຽງສັດໂຕທີສອງຮ້ອງວ່າ, "ມາ
4 ເບິ່ງເທາະ." [໔]ແລະມີມ້າສີແດງເຂັ້ມໂຕໜຶ່ງອອກມາອີກ ຜູ້ທີ່
ຂີ່ມ້າຕົວນີ້ໄດ້ຮັບພຣະລາຊະອານຸຍາດໃຫ້ນຳສັນຕິສຸກໄປ
ຈາກໂລກ ເພື່ອໃຫ້ຄົນທັງປວງຮົບຮາຂ້າຟັນກັນ ແລະທັງ
5 ໄດ້ພຣະລາຊະທານດາບໃຫຍ່ດວງໜຶ່ງໃຫ້ແກ່ຜູ້ນັ້ນ. [໕]ເມື່ອ
ພຣະອົງຊົງແກະຕາປະທັບດວງທີ່ສາມນັ້ນແລ້ວ ຂ້າພະເຈົ້າ

ໄດ້ຍິນສຽງສັດໂຕທີສາມຮ້ອງວ່າ, “ມາເບິ່ງເທາະ” ຂ້າພະ-
ເຈົ້າໄດ້ເບິ່ງ ແລະມີມ້າສີດຳໂຕໜຶ່ງອອກມາ ຜູ້ທີ່ຂີ່ມ້ານັ້ນຖື
6 ຄັນຊັ່ງ. [໖]ຂ້າພະເຈົ້າໄດ້ຍິນສຽງທີ່ດັງອອກມາຈາກຖ້າມກາງ
ສັດທັງສີ່ນັ້ນວ່າ, “ເຂົ້າວິດລາຄາລິດໜຶ່ງຕໍ່ໜຶ່ງເດນາຣິອົນ*
ເຂົ້າບະເລສາມລິດຕໍ່ໜຶ່ງເດນາຣິອົນ ແຕ່ຢ່າເຮັດອັນຕະລາຍ
7 ຕໍ່ນ້ຳມັນແລະເຫຼົ້າແວງ.” [໗]ເມື່ອພຣະອົງຊົງແກະຕາປະທັບ
ດວງທີສີ່ນັ້ນແລ້ວ ຂ້າພະເຈົ້າໄດ້ຍິນສຽງສັດໂຕທີສີ່ຮ້ອງວ່າ,
8 “ມາເບິ່ງເທາະ.” [໘]ຂ້າພະເຈົ້າໄດ້ເບິ່ງ, ແລະເຫັນມີມ້າສີຂຽວ
ອ່ອນໂຕໜຶ່ງອອກມາ ຜູ້ທີ່ຂີ່ມ້ານັ້ນມີຊື່ວ່າ ‘ຄວາມຕາຍ’
ແລະນະຣົກກໍຕິດຕາມມານຳ ເຂົາທັງສອງໄດ້ຮັບພຣະລາ-
ຊະທານອຳນາດລ້າງຜານແຜ່ນດິນໂລກໄດ້ໜຶ່ງສ່ວນສີ່ດ້ວຍ
ຄົມດາບ, ດ້ວຍຄວາມອຶດຢາກ, ດ້ວຍຄວາມຕາຍ, ແລະ
9 ດ້ວຍສັດຮ້າຍຕ່າງໆໃນແຜ່ນດິນໂລກ. [໙]ເມື່ອພຣະອົງຊົງ
ແກະຕາປະທັບດວງທີຫ້ານັ້ນແລ້ວ ຂ້າພຣະເຈົ້າໄດ້ເຫັນດວງ
ວິນຍານຢູ່ໃຕ້ແທ່ນບູຊາ ເປັນວິນຍານຂອງຄົນທັງຫຼາຍທີ່
ຖືກຂ້າເພາະພຣະທຳຂອງພຣະເຈົ້າ ແລະເພາະຄຳພະຍານ
10 ທີ່ເຂົາຍຶດຖືນັ້ນ. [໑໐]ເຂົາເຫຼົ່ານັ້ນໄດ້ຮ້ອງທູນຂຶ້ນວ່າ, “ຂ້າແດ່
ອົງພຣະຜູ້ເປັນເຈົ້າ ຜູ້ບໍລິສຸດແລະທ່ຽງແທ້ ຍັງດົນປານໃດໜໍ
ພຣະອົງຈຶ່ງຈະຊົງພິພາກສາ ຕອບສະໜອງຄົນທັງຫຼາຍທີ່ຢູ່
11 ເທິງແຜ່ນດິນໂລກທີ່ໄດ້ຂ້າພວກຂ້າພຣະອົງນັ້ນ?” [໑໑]ແລ້ວ
ເຂົາທຸກຄົນໄດ້ຮັບພຣະລາຊະທານເສື້ອສີຂາວ ແລະຊົງສັ່ງ
ໃຫ້ເຂົາລໍໄປຈັກໜ້ອຍ ຈົນກວ່າຈຳນວນເພື່ອນຂ້ອຍໃຊ້ແລະ
ພີ່ນ້ອງຂອງເຂົາຈະຄົບຖ້ວນແລ້ວ ຄືພວກທີ່ຈະຖືກຂ້າເໝືອນ
12 ກັບເຂົານັ້ນ. [໑໒]ແລະຂ້າພະເຈົ້າໄດ້ເຫັນເມື່ອພຣະອົງຊົງແກະ
ຕາປະທັບດວງທີຫົກນັ້ນແລ້ວ ແລະເບິ່ງແມ, ເກີດມີແຜ່ນດິນ
ຫວັ່ນໄຫວອັນໃຫຍ່, ດວງອາທິດກໍເກີດມືດດຳເໝືອນດັ່ງຜ້າ
13 ຂົນສັດຫຍາບ, ດວງຈັນວັນເພັງກໍເກີດເປັນສີເລືອດ. [໑໓]ດວງ



ປາກົດ. [8]ພຣະອົງຜູ້ທີ່ທ່ານຍັງບໍ່ໄດ້ເຫັນ ແຕ່ພວກທ່ານກໍຍັງຮັກ
ພຣະອົງຢູ່ ເຖິງແມ່ນວ່າຂະນະນີ້ພວກທ່ານບໍ່ເຫັນພຣະອົງແຕ່ຍັງ
ເຊື່ອ ແລະຊື່ນຊົມຍິນດີດ້ວຍຄວາມຍິນດີອັນຮຸ່ງເຮືອງຊຶ່ງເຫຼືອທີ່ຈະ
ອະທິບາຍໄດ້.

**ໂກໂລຊາຍ 3:4** ເມື່ອໃດພຣະຄຣິດຜູ້ຊົງເປັນຊີວິດທີ່ແທ້ຈິງຂອງ
ເຮົາທັງຫຼາຍຊົງປາກົດ ເມື່ອນັ້ນເຈົ້າທັງຫຼາຍກໍຈະປາກົດພ້ອມກັນ
ກັບພຣະອົງໃນສະຫງ່າລາສີເໝືອນກັນ.

**ເຮັບເຣີ 9:28** ພຣະຄຣິດກໍສັນນັ້ນ ຄືພຣະອົງຊົງຖວາຍພຣະອົງເອງ
ເປັນເຄື່ອງບູຊາເທື່ອດຽວເພື່ອແບກບາບຂອງຄົນຈຳນວນຫຼາຍໄວ້
ພຣະອົງຈະຊົງປາກົດເປັນເທື່ອທີ່ສອງໂດຍບໍ່ກ່ຽວກັບບາບ ແຕ່ເພື່ອ
ໂຜດບັນດາຜູ້ທີ່ລໍຄອຍພຣະອົງດ້ວຍໃຈຮ້ອນຮົນໃຫ້ໄດ້ຮັບຄວາມ
ພົ້ນ.

ທັງຫຼາຍຈະເປັນເໝືອນພຣະອົງ ເພາະວ່າພວກເຮົາຈະເຫັນພຣະອົງຢ່າງທີ່ພຣະອົງຊົງເປັນຢູ່ນັ້ນ. [3]ທຸກຄົນທີ່ມີຄວາມຫວັງໃນພຣະອົງດັ່ງກ່າວ ມາ ນີ້ ກໍ ຊໍາລະ ຕົນ ໃຫ້ ບໍລິສຸດ ເໝືອນ ພຣະຄຣິດ ຊົງ ບໍລິສຸດ.

**1 ຕີໂມທຽວ 6:13–15** [13]ເຮົາສັ່ງເຈົ້າຕໍ່ພຣະພັກພຣະເຈົ້າຜູ້ຊົງບັນດານໃຫ້ສິ່ງທັງປວງມີຊີວິດ ແລະຕໍ່ພຣະພັກພຣະເຢຊູຄຣິດຜູ້ໄດ້ຊົງເປັນພະຍານ ເຖິງຄໍາປະຕິຍານອັນດີຕໍ່ໜ້າປົນທຽວປີລາດ. [14]ໃຫ້ເຈົ້າຮັກສາຄໍາສັ່ງນີ້ໄວ້, ຢ່າໃຫ້ດ່າງພ້ອຍ, ຢ່າໃຫ້ມີທີ່ຕິໄດ້ຈົນເຖິງເວລາທີ່ພຣະເຢຊູຄຣິດ ເຈົ້າ ຂອງ ເຮົາ ທັງຫຼາຍ ຈະ ສະເດັດ ສ່ອງສະຫວ່າງມາປາກົດ. [15]ຊຶ່ງພຣະເຈົ້າຜູ້ສະເຫວີຍສຸກແລະຊົງລິດສູງສຸດ ແຕ່ ພຣະອົງ ດຽວ ຊົງ ເປັນ ພຣະມະຫາ ກະສັດ ເໜືອ ກະສັດ ທັງ ປວງ ແລະ ຊົງ ເປັນ ເຈົ້າ ເໜືອ ເຈົ້າ ທັງປວງ ຈະ ຊົງສະແດງ ໃຫ້ປະກົດ ຕາມເວລາກໍານົດ.

**2 ຕີໂມທຽວ 4:8** ແຕ່ນີ້ຕໍ່ໄປມົງກຸດຄືລາງວັນແຫ່ງຄວາມຊອບທໍາຊົງຈັດໄວ້ຖ້າເຮົາແລ້ວ ຊຶ່ງອົງພຣະຜູ້ເປັນເຈົ້າຜູ້ພິພາກສາອັນຍຸດຕິທໍາຈະຊົງປະທານແກ່ເຮົາໃນວັນນັ້ນ ແລະບໍ່ແມ່ນແກ່ເຮົາຜູ້ດຽວ ແຕ່ ຈະ ຊົງ ປະທານ ແກ່ ຄົນ ທັງ ປວງ ທີ່ ມີໃຈ ຍິນດີ ໃນ ການ ຊົງ ສ່ອງສະຫວ່າງມາປະກົດຂອງພຣະອົງ.

**1 ເປໂຕ 1:6–8** [6]ໃນສິ່ງນີ້ແຫຼະ, ຈົ່ງຊົມຊື່ນຍິນດີຫຼາຍ ເຖິງແມ່ນວ່າດຽວນີ້ ຈໍາເປັນ ທີ່ ພວກ ທ່ານ ຈະ ຕ້ອງ ທົນ ຄວາມທຸກ ໂສກ ດ້ວຍ ການຖືກທົດລອງຕ່າງໆ ໃນຊົ່ວເວລາໜຶ່ງ. [7]ເຖິງແມ່ນວ່າຄໍາກໍຍັງຖືກລອງເບິ່ງດ້ວຍ ໄຟ ແຕ່ຄວາມ ເຊື່ອທີ່ຖືກລອງກໍປະເສີດກວ່າຄໍາທີ່ຍ່ອມຮູ້ສູນຫາຍ ໄປ ດັ່ງນັ້ນການທົດລອງຕ່າງໆກໍ ເກີດຂຶ້ນ ເພື່ອ ໃຫ້ຄວາມເຊື່ອທີ່ລອງແລ້ວນັ້ນປາກົດວ່າຄວນຮັບຄວາມສັນລະເສີນ, ສະຫງ່າລາສີ, ແລະກຽດຕິຍົດ ໃນ ເວລາ ທີ່ ພຣະເຢຊູຄຣິດ ຈະ ສະເດັດ ມາ





ດາວທັງຫຼາຍ ໃນທ້ອງຟ້າກໍຕົກລົງ ເທິງ ແຜ່ນດິນ ເໝືອນກັບ
ຕົ້ນ ເດື່ອ ເທດທີ່ຖືກລົມ ແຮງພັດ ຈົນໝາກທີ່ຍັງບໍ່ທັນສຸກຫຼົ່ນ
14 ລົງໝົດ. [໑໔]ທ້ອງຟ້າ ກໍ ຫົດ ເຂົ້າ ເສຍ ເໝືອນ ດັ່ງ ໜັງສື ທີ່ ເຂົາ
ມ້ວນ ພູ ທຸກ ໜ່ວຍ ແລະ ເກາະ ທຸກ ເກາະ ກໍ ເຄື່ອນ ໄປ ຈາກ
15 ບ່ອນ ເດີມ. [໑໕]ແລ້ວກະສັດທັງຫຼາຍ ໃນ ແຜ່ນດິນ ໂລກ, ພວກ
ເຈົ້ານາຍ, ພວກນາຍພັນນາຍພົນ, ພວກເສດຖີ, ພວກຜູ້ມີ
ອໍານາດ, ແລະທຸກຄົນທັງທີ່ເປັນຂ້ອຍຂ້າແລະມີເສລີກໍພາ-
16 ກັນໄປລີ້ຊ່ອນຢູ່ໃນຖໍ້າແລະໃນຫວ່າງຫີນຕາມພູ. [໑໖]ເຂົາຮ້ອງ
ບອກພູ ແລະ ໂຫງ່ນຫີນວ່າ, “ຂໍໃຫ້ ເນີ້ງມາບັງພວກເຮົາໄວ້
ໃຫ້ພົ້ນຈາກພຣະພັກຂອງພຣະອົງ ຜູ້ຊົງປະທັບ ເທິງພຣະລາ-
ຊະບັນລັງ ແລະຈາກພຣະພິໂລດ*ຂອງພຣະເມສານ້ອຍນັ້ນ.
17 [໑໗]ເພາະວ່າວັນ ສໍາຄັນ ແຫ່ງ ພຣະພິໂລດ ຂອງພຣະອົງ ໄດ້ ມາ
ເຖິງແລ້ວ ແລະຜູ້ໃດໜໍ ຈະອາດທົນຢູ່ໄດ້?”

6:6 “ເດນາຣິອົນ” ຄືເງິນຫຼຽນຂອງຊາວໂຣມທີ່ມີຄ່າທໍ່ກັບຄ່າຈ້າງກໍາມະກອນມື້ໜຶ່ງ
6:16 “ພຣະພິໂລດ” ເປັນລາຊະສັບໝາຍຄວາມວ່າ “ຄວາມຄຽດຮ້ອນ” ຫຼື “ຄວາມຮ້າຍໂມໂຫ”ຂອງພຣະເຈົ້າ

# ບົດທີ 7

1 [໑]ຫຼັງຈາກນັ້ນຂ້າພະເຈົ້າໄດ້ເຫັນ ເທວະດາສີ່ຕົນ ຢືນຢູ່ໃນ
ທິດທັງສີ່ຂອງແຜ່ນດິນໂລກ ຫ້າມລົມໃນແຜ່ນດິນທັງສີ່ທິດ
2 ໄວ້ບໍ່ໃຫ້ພັດມາໃສ່ບົກ, ໃສ່ທະເລ, ຫຼືຕົ້ນໄມ້ໃດໆ .[໒]ແລ້ວ
ຂ້າພະເຈົ້າໄດ້ເຫັນ ເທວະດາອີກຕົນໜຶ່ງ ປາກົດຂຶ້ນມາຈາກ
ທິດຕາເວັນອອກ ຖືຕາປະທັບຂອງພຣະເຈົ້າຜູ້ຊົງພຣະຊົນ
ຢູ່ ເທວະດາຕົນນັ້ນປະກາດສຽງດັງແກ່ເທວະດາທັງສີ່ ຜູ້
ຊຶ່ງໄດ້ຮັບພຣະລາຊະທານອໍານາດ ໃຫ້ ເຮັດອັນຕະລາຍ ແກ່
3 ແຜ່ນດິນແລະທະເລນັ້ນ,[໓]ວ່າ,“ຢ່າເຮັດອັນຕະລາຍແກ່ແຜ່ນ-
ດິນ, ແກ່ທະເລ, ຫຼືຕົ້ນໄມ້ ຈົນກວ່າເຮົາຈະໄດ້ປະທັບຕາໄວ້

ທີ່ໜ້າຜາກບັນດາຂ້າໃຊ້ຂອງພຣະເຈົ້າຂອງເຮົາເສຍກ່ອນ.”
4 ໔ແລະຂ້າພະເຈົ້າໄດ້ຍິນຈຳນວນຂອງຜູ້ທີ່ໄດ້ຮັບປະທັບຕາ
ແລ້ວ ຄືຜູ້ທີ່ມາຈາກທຸກຕະກຸນໃນພວກອິສະຣາເອນ ມີແສນ
5 ສີ່ໝື່ນສີ່ພັນຄົນ, ໕*ຈາກຕະກຸນຢູດາ ມີໝື່ນສອງພັນຄົນ, ຈາກ*
*ຕະກຸນຣູເບັນ ໝື່ນສອງພັນຄົນ, ຈາກຕະກຸນຄາດ ໝື່ນສອງ*
6 *ພັນຄົນ.* ໖*ຈາກຕະກຸນອາເຊັນ ໝື່ນສອງພັນຄົນ, ຈາກຕະກຸນ*
*ເນັບທາລີ ໝື່ນສອງພັນຄົນ, ຈາກຕະກຸນມານາເຊ ໝື່ນສອງ*
7 *ພັນຄົນ.* ໗*ຈາກຕະກຸນຊີເມໂອນ ໝື່ນສອງພັນຄົນ, ຈາກຕະ-*
*ກຸນເລວີ ໝື່ນສອງພັນຄົນ, ຈາກຕະກຸນອີຊາຂາ ໝື່ນສອງພັນ*
8 *ຄົນ.* ໘*ຈາກຕະກຸນຊາບູໂລນ ໝື່ນສອງພັນຄົນ, ຈາກຕະກຸນ*
*ໂຢເຊບ ໝື່ນສອງພັນຄົນ, ຈາກຕະກຸນເບັນຢາມິນ ໝື່ນສອງ*
9 *ພັນຄົນ.* ໙ຫຼັງຈາກນັ້ນຂ້າພະເຈົ້າເບິ່ງ ແລະເບິ່ງແມ, ມີຝູງ
ຄົນຫຼວງຫຼາຍເຫຼືອຈົນນັບບໍ່ໄດ້ ມາຈາກທຸກປະເທດ, ທຸກຕະ-
ກຸນ, ທຸກຊາດ, ແລະທຸກພາສາ ຄົນເຫຼົ່ານັ້ນນຸ່ງເຄື່ອງສີຂາວ,
ຖືກ້ານຕານ, ຢືນຢູ່ຕໍ່ໜ້າພຣະລາຊະບັນລັງແລະຕໍ່ພຣະພັກ
10 ພຣະເມສານ້ອຍນັ້ນ, ໑໐ຮ້ອງສຽງດັງວ່າ, “ຄວາມລອດພົ້ນຂຶ້ນ
ຢູ່ກັບພຣະເຈົ້າຂອງພວກເຮົາ ຜູ້ຊົງປະທັບເທິງພຣະລາຊະ
11 ບັນລັງ ແລະຂຶ້ນຢູ່ກັບພຣະເມສານ້ອຍ.” ໑໑ແລະເທວະດາ
ທັງປວງທີ່ຢືນຢູ່ອ້ອມພຣະລາຊະບັນລັງ, ອ້ອມຜູ້ອາວຸໂສ,
ແລະອ້ອມສັດທັງສີ່ນັ້ນ ກົ້ມລົງຕໍ່ໜ້າພຣະລາຊະບັນລັງ ນະ-
12 ມັດສະການພຣະເຈົ້າ, ໑໒ໂດຍກ່າວວ່າ, “ອາແມນ: ຄຳພຣະ
ພອນ, ສະຫງ່າລາສີ, ສະຕິປັນຍາ, ຄຳໂມທະນາ, ພຣະກຽດ-
ຕິຍົດ, ອຳນາດ, ແລະລິດເດດ, ຈົ່ງມີແດ່ພຣະເຈົ້າຂອງພວກ
13 ຂ້າພະອົງຕະຫຼອດໄປເປັນນິດ ອາແມນ.” ໑໓ແລ້ວຜູ້ໜຶ່ງໃນ
ພວກອາວຸໂສນັ້ນຖາມຂ້າພະເຈົ້າວ່າ, “ຄົນທີ່ນຸ່ງເຄື່ອງສີຂາວ
14 ເຫຼົ່ານັ້ນແມ່ນໃຜ ແລະມາແຕ່ໃສ?” ໑໔ຂ້າພະເຈົ້າໄດ້ຕອບຜູ້
ນັ້ນວ່າ, “ທ່ານເອີຍ, ທ່ານກໍຊາບຢູ່ແລ້ວ” ຜູ້ນັ້ນຈຶ່ງບອກຂ້າ-



**2 ເທຊະໂລນິກ 3:5** ຂໍໃຫ້ອົງພຣະຜູ້ເປັນເຈົ້າຊົງນຳໃຈເຈົ້າທັງ-ຫຼາຍໄປເຖິງຄວາມຮັກຂອງພຣະເຈົ້າ ແລະອົດທົນໃນການລໍຄອຍພຣະຄຣິດ.

**1 ເທຊະໂລນິກ 1:9–10** [9]ດ້ວຍວ່າຄົນເຫຼົ່ານັ້ນເອງກໍໄດ້ລາຍງານເຖິງເລື່ອງພວກເຮົາວ່າ ເຮົາໄດ້ເຂົ້າມາຫາເຈົ້າທັງຫຼາຍເປັນຢ່າງໃດ ແລະພວກເຈົ້າໄດ້ຫັນໜີຈາກພະທຽມມາຫາພຣະເຈົ້າດ້ວຍຢ່າງໃດ ເພື່ອຮັບໃຊ້ພຣະເຈົ້າຜູ້ຊົງພຣະຊົນຢູ່ແລະຜູ້ທ່ຽງແທ້, [10]ແລະຄອຍຖ້າພຣະບຸດຂອງພຣະອົງຈາກສະຫວັນຊຶ່ງພຣະອົງໄດ້ຊົງບັນດານໃຫ້ພຣະບຸດນັ້ນຄືນຂຶ້ນມາຈາກຕາຍ ຄືພຣະເຢຊູຜູ້ໄດ້ຊົງໂຜດເຮົາທັງຫຼາຍໃຫ້ພົ້ນຈາກພຣະພິໂລດທີ່ຈະມີມານັ້ນ.

**ຕີໂຕ 2:11–14** [11]ເພາະວ່າພຣະຄຸນຂອງພຣະເຈົ້າໄດ້ສ່ອງມາປາ-ກົດແລ້ວເພື່ອນຳຄວາມພົ້ນມາໃຫ້ຄົນທັງປວງ. [12]ແລະສອນເຮົາທັງຫຼາຍ ໃຫ້ລະຖິ້ມຄວາມຊົ່ວອະທຳ ແລະກິເລດຕັນຫາຝ່າຍໂລກ ແລະໃຫ້ດຳເນີນຊີວິດຢູ່ໃນສະໄໝນີ້ຢ່າງມີສະຕິອັນດີຮອບຄອບດ້ວຍຄວາມຊອບທຳ ແລະນັບຖືພຣະເຈົ້າຢ່າງຖືກຕ້ອງ. [13]ໃຫ້ຄອຍຖ້າຄວາມສຸກທີ່ສົມກັບຄວາມຫວັງຂອງເຮົາຄືການສ່ອງມາປາກົດອັນຮຸ່ງເຮືອງຂອງພຣະເຈົ້າອົງໃຫຍ່ແລະພຣະເຢຊູຄຣິດພຣະຜູ້ຊ່ວຍຂອງເຮົາທັງຫຼາຍ. [14]ຜູ້ຊົງສະຫຼະພຣະອົງເອງແທນເຮົາທັງຫຼາຍເພື່ອຊົງໄຖ່ພວກເຮົາໃຫ້ພົ້ນຈາກການຊົ່ວອະທຳທັງໝົດ ແລະຊົງຊຳລະພວກເຮົາໃຫ້ສະອາດ ເພື່ອໃຫ້ເປັນພົນລະເມືອງຈຳພວກໜຶ່ງຂອງພຣະອົງຄືເປັນຄົນມີໃຈຮ້ອນຮົນສຳລັບເຮັດການດີ.

**1 ໂຢຮັນ 3:2–3** [2]ພວກທີ່ຮັກເອີຍ, ບັດນີ້ເຮົາເປັນບຸດຂອງພຣະເຈົ້າແລ້ວ ແລະຍັງບໍ່ໄດ້ຊົງສະແດງໃຫ້ຮູ້ຄັກວ່າຕໍ່ໄປພວກເຮົາຈະເປັນຢ່າງໃດ ແຕ່ພວກເຮົາຮູ້ວ່າເມື່ອພຣະອົງຈະສະເດັດມາປາກົດນັ້ນເຮົາ

ຕາຍ ແລ້ວ ຈະ ຖືກຊົງບັນດານ ໃຫ້ ເປັນ ຄືນ ຂຶ້ນ ມາ ໂດຍ ບໍ່ ເປື່ອຍ ເນົ່າ ແລະຝ່າຍ ພວກ ເຮົາກໍ ຈະ ຖືກຊົງປ່ຽນແປງໃໝ່. [53]ເພາະວ່າກາຍທີ່ ເປື່ອຍ ເນົ່ານີ້ຕ້ອງສວມ ກາຍ ທີ່ບໍ່ ຮູ້ຈັກ ເປື່ອຍ ເນົ່າ ແລະກາຍ ທີ່ຕາຍ ເປັນ ນີ້ ຕ້ອງ ສວມ ກາຍ ທີ່ ຕາຍ ບໍ່ ເປັນ.[54]ແລະ ເມື່ອ ໃດ ກາຍ ທີ່ ຮູ້ຈັກ ເປື່ອຍ ເນົ່ານີ້ຈະ ໄດ້ສວມກາຍທີ່ບໍ່ ຮູ້ຈັກ ເປື່ອຍ ເນົ່າ ແລະກາຍທີ່ຕາຍ ເປັນ ນີ້ ຈະ ໄດ້ ສວມ ກາຍ ທີ່ ຕາຍ ບໍ່ ເປັນ ເມື່ອນັ້ນ ແຫຼະ ຄວາມ ທີ່ ຂຽນ ໄວ້ໃນພຣະຄຳພີຈະສຳເລັດຄືວ່າ “ຄວາມຕາຍ ໄດ້ຕົກເຖິງປະລາໄຊ ແລ້ວ.” [55]“ໂອຄວາມຕາຍ ເອີຍ ໄລພິດຂອງມຶງຢູ່ໃສ? ໂອຂຸມຝັງສົບ ເອີຍ ໄຊຊະນະຂອງມຶງຢູ່ໃສ?”

**ລູກາ 17:34-36** [34]ເຮົາບອກທ່ານທັງຫຼາຍວ່າ ໃນຄືນວັນນັ້ນຈະມີ ຊາຍສອງຄົນນອນຢູ່ຕຽງດຽວຈະຊົງຮັບຄົນໜຶ່ງໄປຈະຊົງປະຄົນໜຶ່ງ ໄວ້. [35]ຈະມີຍິງສອງຄົນກຳລັງໂມ້ແປ້ງຢູ່ນຳກັນຈະຊົງຮັບຄົນໜຶ່ງໄປ ຈະຊົງປະຄົນໜຶ່ງໄວ້. [36]ຈະມີຊາຍສອງຄົນຢູ່ທົ່ງນາຈະຊົງຮັບຄົນ ໜຶ່ງໄປຈະຊົງປະຄົນໜຶ່ງໄວ້.”

**ຟີລິບປອຍ 3:20-21** [20]ແຕ່ບ້ານ ເມືອງ ຂອງ ເຮົາ ທັງຫຼາຍ ນັ້ນ ຢູ່ ໃນ ສະຫວັນ ພວກ ເຮົາ ລໍຄອຍ ພຣະຜູ້ ໂຜດ ໃຫ້ພົ້ນ ຊຶ່ງ ຈະ ສະເດັດ ມາ ຈາກ ສະຫວັນ ຄື ພຣະເຢຊູຄຣິດເຈົ້າ. [21]ພຣະອົງ ຈະ ຊົງ ປ່ຽນແປງ ຮ່າງກາຍ ອັນ ຕ່ຳ ຕ້ອຍ ຂອງ ພວກ ເຮົາ ໃຫ້ ເປັນ ເໝືອນ ພຣະກາຍ ອັນ ຊົງ ສະຫງ່າລາສີ ຂອງ ພຣະອົງ ດ້ວຍ ລິດທານຸພາບ ຊຶ່ງ ເຮັດ ໃຫ້ ພຣະອົງ ຊົງ ປາບ ສາລະພັດ ລົງ ໃຕ້ ບັງຄັບ ຂອງ ພຣະອົງ.

**1ໂກລິນໂທ 1:7** ຈົນ ເຈົ້າທັງຫຼາຍບໍ່ ໄດ້ຂາດເຂີນຂອງພຣະລາຊະ ທານ ຈັກຢ່າງ ໃນ ຂະນະ ທີ່ ເຈົ້າ ທັງຫຼາຍ ຄອຍ ຖ້າ ການ ສະເດັດ ມາ ປາກົດຂອງພຣະເຢຊູຄຣິດເຈົ້າຂອງພວກເຮົາ.





ພະເຈົ້າວ່າ, “ຄົນເຫຼົ່ານີ້ແຫຼະ, ທີ່ມາຈາກຄວາມທຸກຂະເວທະ-
ນາອັນໃຫຍ່ ເຂົາໄດ້ຊຳລະລ້າງເສື້ອຜ້າຂອງເຂົາໃຫ້ຂາວ
15 ສະອາດດ້ວຍພຣະໂລຫິດຂອງພຣະເມສານ້ອຍນັ້ນ. ໑໕ເພາະ
ເຫດ ນັ້ນ ເຂົາ ຈຶ່ງ ໄດ້ ຢູ່ ຕໍ່ໜ້າ ພຣະລາຊະບັນລັງ ຂອງ ພຣະ
ເຈົ້າ ແລະປະຕິບັດພຣະອົງໃນພຣະວິຫານຂອງພຣະອົງທັງ
ກາງເວັນ ແລະ ກາງຄືນ ແລະພຣະອົງຜູ້ຊົງປະທັບ ເທິງພຣະ
ລາຊະບັນລັງນັ້ນ ຈະຊົງສະຖິດຢູ່ນຳ ແລະປົກປ້ອງຄຸ້ມຄອງ
16 ເຂົາ. ໑໖ຕໍ່ໄປເຂົາຈະບໍ່ອຶດເຂົ້າຢາກນ້ຳອີກຈັກເທື່ອ ແສງແດດ
17 ແລະຄວາມຮ້ອນຢ່າງໜຶ່ງຢ່າງໃດຈະບໍ່ສ່ອງຖືກເຂົາ. ໑໗ເພາະ
ພຣະເມສານ້ອຍ ທີ່ປະທັບຢູ່ຖ້າມກາງພຣະລາຊະບັນລັງນັ້ນ
ຈະ ຊົງ ເປັນຜູ້ດູແລ ເຂົາ ແລະ ຈະ ຊົງ ນຳ ເຂົາ ໄປ ເຖິງ ນ້ຳພຸອັນ
ປະກອບດ້ວຍຊີວິດ ແລະພຣະເຈົ້າຈະຊົງເຊັດນ້ຳຕາທຸກຢົດ
ຈາກຕາຂອງເຂົາ.”

# ບົດທີ 8

1 ໑ເມື່ອພຣະອົງແກະຕາປະທັບດວງທີເຈັດ ຄວາມສະຫງັດ
2 ງຽບກໍເກີດຂຶ້ນໃນສະຫວັນປະມານເຄິ່ງຊົ່ວໂມງ. ໒ແລ້ວຂ້າ-
ພະເຈົ້າກໍເຫັນ ເທວະດາເຈັດຕົນທີ່ຢືນຢູ່ຕໍ່ພຣະພັກພຣະເຈົ້າ
3 ນັ້ນ ໄດ້ຮັບພຣະລາຊະທານແກເຈັດອັນ. ໓ມີເທວະດາອີກຕົນ
ໜຶ່ງຖືໝໍ້ຄຳໜ່ວຍໜຶ່ງອອກມາຢືນຢູ່ຕໍ່ໜ້າແທ່ນ ໄດ້ຮັບພຣະ
ລາຊະທານ ເຄື່ອງຫອມ ຈຳນວນຫຼາຍ ເພື່ອຈະຖວາຍຮ່ວມ
ກັບຄຳໄຫວ້ວອນຂອງໄພ່ພົນທັງປວງຂອງພຣະເຈົ້າ ເທິງ
4 ແທ່ນຄຳທີ່ຢູ່ຕໍ່ໜ້າພຣະລາຊະບັນລັງນັ້ນ. ໔ແລະຄວັນເຄື່ອງ
ຫອມນັ້ນກໍລອຍຂຶ້ນໄປ ພ້ອມກັບຄຳໄຫວ້ວອນຂອງພວກ
ໄພ່ພົນຂອງພຣະເຈົ້າ ຈາກມືເທວະດາຊຶ່ງຢືນຢູ່ຕໍ່ພຣະພັກ
5 ພຣະເຈົ້າ. ໕ແລ້ວ ເທວະດາຕົນນັ້ນໄດ້ຖືໝໍ້ໄປ ເອົາໄຟຈາກ

ແທ່ນໃສ່ໃຫ້ເຕັມ ໂຍນໜໍ້ນັ້ນລົງເທິງແຜ່ນດິນໂລກ ກໍເກີດ
ມີສຽງຕ່າງໆ, ສຽງຟ້າຮ້ອງ, ມີຟ້າແມບ ແລະ ແຜ່ນດິນຫວັ່ນ-
6 ໄຫວ. ໖ແລະເທວະດາທັງເຈັດທີ່ຖືແກທັງເຈັດນັ້ນ ຕ່າງກໍຕຽມ
7 ພ້ອມທີ່ຈະເປົ່າ. ໗ເມື່ອເທວະດາຕົນທຳອິດເປົ່າແກຂຶ້ນ ໝາກ-
ເຫັບ ແລະ ໄຟປົນເລືອດຖືກຖິ້ມລົງມາຍັງແຜ່ນດິນ: ຕົ້ນໄມ້ກໍ
ຖືກໄໝ້ເສຍໜຶ່ງສ່ວນສາມ, ແລະຫຍ້າຂຽວສົດຖືກໄໝ້ເສຍ
8 ທັງໝົດ. ໘ເມື່ອເທວະດາຕົນທີສອງເປົ່າແກຂຶ້ນ ກໍມີສິ່ງໜຶ່ງ
ເໝືອນພູໜ່ວຍໃຫຍ່ທີ່ໄຟກຳລັງໄໝ້ຢູ່ ຖືກຖິ້ມລົງໃນທະເລ
9 ແລະທະເລນັ້ນໄດ້ກາຍເປັນເລືອດເສຍໜຶ່ງສ່ວນສາມ. ໙ສິ່ງ
ສາລະພັດ ໃນ ທະເລ ທີ່ ມີ ຊີວິດ ຢູ່ ກໍ ຕາຍ ເສຍ ໜຶ່ງ ສ່ວນ ສາມ
ແລະ ບັນດາ ເຮືອ ສະເພົາ ກໍ ຖືກ ທຳລາຍ ເສຍ ໜຶ່ງ ສ່ວນ ສາມ.
10 ໑໐ເມື່ອເທວະດາຕົນທີສາມເປົ່າແກຂຶ້ນ ກໍມີດາວໃຫຍ່ດວງ
ໜຶ່ງລຸກເປັນໄຟເໝືອນກະບອງຕົກຈາກທ້ອງຟ້າ ດາວນັ້ນຕົກ
11 ໃສ່ແມ່ນ້ຳໜຶ່ງສ່ວນສາມ ແລະຕົກໃສ່ນ້ຳພຸທັງຫຼາຍ. ໑໑ດາວ
ດວງນີ້ມີຊື່ວ່າ 'ອັບຊິນໂຕ'* ລົດຂອງນ້ຳຈຶ່ງກາຍເປັນລົດຂົມ
ໜຶ່ງສ່ວນສາມ ແລະຄົນຈຳນວນຫຼວງຫຼາຍໄດ້ຕາຍເພາະນ້ຳ
12 ນັ້ນມີລົດຂົມ. ໑໒ເມື່ອເທວະດາຕົນທີສີ່ເປົ່າແກຂຶ້ນ ດວງອາ-
ທິດກໍຖືກທຳລາຍເສຍໜຶ່ງສ່ວນສາມ ດວງຈັນແລະດວງດາວ
ທັງຫຼາຍກໍເໝືອນກັນ ຈຶ່ງມືດໄປເຖິງໜຶ່ງສ່ວນສາມ ກາງເວັນ
13 ບໍ່ສະຫວ່າງໜຶ່ງສ່ວນສາມ ແລະກາງຄືນກໍເໝືອນກັນ. ໑໓ແລ້ວ
ຂ້າພະເຈົ້າກໍເບິ່ງ ແລະໄດ້ຍິນເທວະດາອົງໜຶ່ງທີ່ບິນຢູ່ໃນ
ທ້ອງຟ້າ ຮ້ອງປະກາດສຽງດັງຂຶ້ນວ່າ, "ວິບັດ, ວິບັດ, ວິບັດຈະ
ມີແກ່ຄົນທັງຫຼາຍທີ່ຢູ່ເທິງແຜ່ນດິນໂລກ ເພາະສຽງແກຂອງ
ເທວະດາສາມຕົນກຳລັງຈະເປົ່າຢູ່ແລ້ວ."

8:11 'ອັບຊິນໂຕ' ເປັນພາສາກຣີກທີ່ແປວ່າ ບໍຣະເພັດ ຫຼື ເຄືອເຂົາຮໍ ຊຶ່ງເປັນພືດຊະ-ນິດໜຶ່ງທີ່ຂົມທີ່ສຸດ



# ການສະເດັດມາຄັ້ງທີ 2 ຂອງອົງພຣະເຢຊູຄຣິດ ເພື່ອຮັບພວກຂອງພຣະອົງໄປທີ່ຟ້າສະຫວັນ ຈະເປັນແບບໃດ?

**1 ເທຊະໂລນິກ 4:13–18** [13]ພີ່ນ້ອງທັງຫຼາຍເອີຍ, ພວກເຮົາຢາກໃຫ້ເຈົ້າທັງຫຼາຍຮູ້ຄວາມຈິງເລື່ອງຄົນທີ່ຫຼັບໄປນັ້ນ ເພື່ອພວກເຈົ້າຈະບໍ່ໂສກເສົ້າ ເໝືອນດັ່ງຄົນອື່ນທີ່ບໍ່ມີຄວາມຫວັງ.[14]ເພາະ ໃນ ເມື່ອ ເຮົາເຊື່ອ ວ່າ ພຣະເຢຊູ ຊົງ ສິ້ນ ພຣະຊົນ ແລະ ຊົງ ຄືນ ພຣະຊົນ ແລ້ວ ໂດຍພຣະເຢຊູນັ້ນ ແຫຼະ, ພຣະເຈົ້າ ຈະ ຊົງນຳບັນດາຄົນທີ່ຫຼັບ ໄປ ແລ້ວນັ້ນໃຫ້ມາກັບພຣະອົງ.[15]ໃນຂໍ້ນີ້ເຮົາບອກເຈົ້າທັງຫຼາຍຕາມພຣະທຳຂອງອົງພຣະຜູ້ເປັນເຈົ້າວ່າ ພວກເຮົາຜູ້ຍັງເປັນຢູ່ແລະຄອຍຖ້າການສະເດັດມາຂອງອົງພຣະຜູ້ເປັນເຈົ້າ ເຮົາຈະລ່ວງໜ້າໄປກ່ອນພວກຄົນທີ່ຫຼັບໄປແລ້ວນັ້ນກໍບໍ່ໄດ້ແທ້.[16]ດ້ວຍວ່າຈະມີຄຳສັ່ງອັນດັງ, ຈະມີສຽງຂອງອັກຄະເທວະດາ, ແລະສຽງແກຂອງພຣະເຈົ້າ ແລ້ວອົງພຣະຜູ້ເປັນເຈົ້າຈະສະເດັດລົງມາຈາກສະຫວັນ ພວກຄົນທີ່ເຊື່ອໃນພຣະຄຣິດທີ່ຕາຍໄປ ແລ້ວກໍຈະຄືນຂຶ້ນມາກ່ອນ.[17]ຫຼັງຈາກນັ້ນເຮົາທັງຫຼາຍຜູ້ມີຊີວິດຍັງເປັນຢູ່ກໍຈະຖືກຮັບຂຶ້ນໄປໃນເມກພ້ອມກັນກັບຄົນພວກນັ້ນ ແລະ ຈະພົບອົງພຣະຜູ້ເປັນເຈົ້າໃນຟ້າອາກາດ: ຢ່າງນັ້ນ ແຫຼະ, ພວກເຮົາກໍຈະຢູ່ນຳພຣະຜູ້ເປັນເຈົ້າເປັນນິດ.[18]ເຫດສະ-ນັ້ນຈຶ່ງເລົ້າໂລມອອຍໃຈກັນແລະກັນດ້ວຍຂໍ້ຄວາມທັງຫຼາຍນີ້ເຖີ້ນ.

**1 ໂກລິນໂທ 15:51–55** [51]ນີ້ແຫຼະເຮົາມີຂໍ້ເລິກລັບບອກພວກເຈົ້າວ່າ: ເຮົາທັງຫຼາຍ ຈະ ບໍ່ ລ່ວງລັບ ໄປ ໝົດ ທຸກ ຄົນ ແຕ່ ເຮົາທັງຫຼາຍ ຈະຖືກຊົງປ່ຽນແປງໃໝ່ໝົດທຸກຄົນ. [52]ໃນຊົ່ວຂະນະດຽວ ໃນພັບຕາດຽວ ເມື່ອ ເປົ່າ ແກຄັ້ງສຸດທ້າຍນັ້ນດ້ວຍວ່າຈະມີສຽງແກ ແລະຄົນທີ່

17 ຮຸ່ງອະລຸນ.” ໑໗ຝ່າຍພຣະວິນຍານແລະເຈົ້າສາວຊົງກ່າວວ່າ,
“ເຊີນມາ” ໃຫ້ຜູ້ໄດ້ຍິນນັ້ນທູນວ່າ, “ເຊີນມາ” ໃຫ້ຜູ້ຫິວນ້ຳ
ເຂົ້າມາ ຜູ້ໃດມີໃຈປາດຖະໜາກໍໃຫ້ຜູ້ນັ້ນມາຮັບນ້ຳສຳລັບ
18 ຊີວິດໂດຍບໍ່ຕ້ອງເສຍຄ່າ. ໑໘ເພາະຂ້າພະເຈົ້າເປັນພະຍານ
ແກ່ທຸກຄົນທີ່ໄດ້ຍິນຄຳທຳນວາຍທັງຫຼາຍໃນໜັງສືມ້ວນນີ້
ວ່າ ຖ້າຜູ້ໃດຈະເພີ່ມເຕີມຂໍ້ຄວາມໃດໃສ່ໜັງສືນີ້ ພຣະເຈົ້າ
ຈະຊົງເອົາໄພອັນຕະລາຍທີ່ຂຽນໄວ້ໃນໜັງສືມ້ວນນີ້ ເພີ່ມ
19 ເຕີມແກ່ຜູ້ນັ້ນ. ໑໙ແລະຖ້າຜູ້ໃດຕັດຂໍ້ຄວາມໃດອອກຈາກໜັງ-
ສືທຳນວາຍນີ້ ພຣະເຈົ້າກໍຈະຊົງຕັດສ່ວນແບ່ງຂອງຜູ້ນັ້ນທີ່ມີ
ຢູ່ໃນທະບຽນແຫ່ງຊີວິດ ແລະສ່ວນແບ່ງໃນນະຄອນສັກສິດ
20 ທີ່ຂຽນໄວ້ໃນໜັງສືມ້ວນນີ້ອອກເສຍ. ໒໐ພຣະອົງຜູ້ຊົງເປັນພະ-
ຍານໃນເຫດການເຫຼົ່ານີ້ຊົງກ່າວວ່າ, “ແນ່ນອນ, ເຮົາຈະມາ
ໃນໄວໆນີ້.” “ອາແມນ, ພຣະເຢຊູເຈົ້າ ເຊີນສະເດັດມາເທີນ.”
21 ໒໑ຂໍໃຫ້ພຣະຄຸນແຫ່ງພຣະເຢຊູຄຣິດອົງພຣະຜູ້ເປັນເຈົ້າຂອງ
ເຮົາຈົ່ງສະຖິດຢູ່ນຳທ່ານທັງຫຼາຍເຖີ້ນ. ອາແມນ.

22:3 “ຈະບໍ່ມີສິ່ງໃດຖືກຊົງສາບແຊ່ງອີກຕໍ່ໄປ” ຫຼືວ່າ “ແລະຈະບໍ່ມີການສາບແຊ່ງໃດໆ ອີກຕໍ່ໄປ”

22:13 “ອາລະຟາແລະໂອເມຄາ” ຂໍເຊີນເບິ່ງຂໍ້ 1:8





# ບົດທີ 9

1 ໑ເມື່ອເທວະດາຕົນທີຫ້າເປົ່າແກຂຶ້ນ ຂ້າພະເຈົ້າກໍເຫັນ
ດາວດວງໜຶ່ງຕົກຈາກຟ້າລົງມາຍັງແຜ່ນດິນໂລກ ໄດ້ຮັບ
ພຣະລາຊະທານລູກກະແຈສຳລັບປ່ອງເຫວເລິກທີ່ບໍ່ມີພື້ນ.
2 ໒ເມື່ອດາວດວງນັ້ນໄຂປ່ອງເຫວອອກທີ່ບໍ່ມີພື້ນນັ້ນ ກໍມີ
ຄວັນພຸ່ງຂຶ້ນມາຈາກເຫວນັ້ນເໝືອນຄວັນທີ່ເຕົາໃຫຍ່ ດວງ
ອາທິດແລະອາກາດກໍມືດໄປເພາະເຫດຄວັນທີ່ຂຶ້ນມາຈາກ
3 ເຫວນັ້ນ. ໓ມີຝູງຕັກແຕນບິນອອກມາຈາກຄວັນນັ້ນມາຍັງ
ແຜ່ນດິນໂລກ ພຣະເຈົ້າຊົງພຣະລາຊະທານອຳນາດແກ່ຕັກ-
ແຕນນັ້ນ ເໝືອນກັບອຳນາດຂອງແມງງອດທີ່ແຜ່ນດິນໂລກ.
4 ໔ພຣະເຈົ້າຊົງຫ້າມມັນບໍ່ໃຫ້ທຳຮ້າຍຫຍ້າເທິງແຜ່ນດິນໂລກ,
ສິ່ງຂຽວສົດຫຼືຕົ້ນໄມ້ໃດໆ ແຕ່ໃຫ້ທຳຮ້າຍຄົນເຫຼົ່ານັ້ນທີ່ບໍ່ມີ
5 ປະທັບຕາຂອງພຣະເຈົ້າທີ່ໜ້າຜາກຂອງເຂົາເທົ່ານັ້ນ. ໕ພຣະ
ອົງບໍ່ຊົງອະນຸຍາດໃຫ້ມັນຂ້າຄົນເຫຼົ່ານັ້ນ ແຕ່ໃຫ້ທໍລະມານ
ເຂົາໃນລະຫວ່າງຫ້າເດືອນ ການທໍລະມານນັ້ນເໝືອນກັບ
6 ແມງງອດຕອດ. ໖ໃນລະຫວ່າງນັ້ນຄົນທັງຫຼາຍຈະສະແຫວງ-
ຫາຄວາມຕາຍ ແຕ່ຈະບໍ່ພົບຈັກເທື່ອ ເຂົາປາດຖະໜາຈະ
7 ຕາຍ ແຕ່ຄວາມຕາຍຈະປົບໜີໄປຈາກເຂົາ. ໗ລັກສະນະອາ-
ການຂອງຕັກແຕນເຫຼົ່ານັ້ນເໝືອນມ້າທີ່ຕຽມໄວ້ແລ້ວສຳລັບ
ການເສິກ ເທິງຫົວມັນມີສິ່ງໜຶ່ງເໝືອນມົງກຸດທອງຄຳ ໜ້າ
8 ຂອງມັນເໝືອນໜ້າມະນຸດ. ໘ຜົມມັນເໝືອນຜົມຜູ້ຍິງ ແລະ
9 ແຂ້ວມັນເໝືອນແຂ້ວສິງ. ໙ມັນມີສິ່ງໜຶ່ງເໝືອນເຄື່ອງເຫຼັກ
ປ້ອງກັນໜ້າເອິກ ສຽງປີກຂອງມັນເໝືອນສຽງລົດທຽມມ້າ
10 ຈຳນວນຫຼາຍແລ່ນເຂົ້າຮົບເສິກ. ໑໐ມັນມີຫາງເໝືອນຫາງ
ແມງງອດ ມີໄລຕອດໃນຫາງນັ້ນ ມັນມີອຳນາດທີ່ຈະທຳ-
11 ຮ້າຍມະນຸດຕະຫຼອດຫ້າເດືອນ. ໑໑ມັນມີກະສັດອົງໜຶ່ງຄຸ້ມ

ຄອງ ກະສັດນັ້ນຄືບໍລິວານຂອງເຫວເລິກນັ້ນ ບໍລິວານນັ້ນ
ຕາມພາສາເຮັບເຣີເອີ້ນ ອະບາໂດນ ແລະພາສາກຣີກເອີ້ນ
12 ວ່າ ອາໂປລີໂອນ. [໑໒]ວິບັດອັນຕົ້ນຜ່ານໄປແລ້ວ ເບິ່ງແມ,
ຍັງຈະມີວິບັດອີກສອງປະການທີ່ຈະເກີດຂຶ້ນໃນພາຍໜ້າ.
13 [໑໓]ເມື່ອເທວະດາຕົນທີຫົກເປົ່າແກຂຶ້ນ ຂ້າພະເຈົ້າໄດ້ຍິນສຽງ
ອອກມາຈາກຮູບເຂົາທີ່ແຈທັງສີ່ຂອງແທ່ນຄຳ ຊຶ່ງຢູ່ຕໍ່ພຣະພັກ
14 ພຣະເຈົ້ານັ້ນ, [໑໔]ສັ່ງແກ່ເທວະດາຕົນທີຫົກທີ່ຖືແກນັ້ນວ່າ, “ຈົ່ງ
ແກ້ປ່ອຍເທວະດາທັງສີ່ ຊຶ່ງຖືກມັດໄວ້ທີ່ແມ່ນ້ຳໃຫຍ່ຢູຟາເຕ
15 ນັ້ນເສຍ”. [໑໕]ເທວະດາເຫຼົ່ານັ້ນຖືກປ່ອຍໄປແລ້ວ ຄືເທວະດາ
ທັງສີ່ທີ່ພຣະເຈົ້າຊົງຈັດໄວ້ແລ້ວສຳລັບຊົ່ວໂມງ, ວັນ, ເດືອນ,
16 ແລະປີນັ້ນ ເພື່ອໄປຂ້າມະນຸດໜຶ່ງສ່ວນສາມເສຍ. [໑໖]ມີພົນທະ-
ຫານມ້າສອງຮ້ອຍລ້ານຄົນ ຕາມຈຳນວນທີ່ຂ້າພະເຈົ້າໄດ້ຍິນ.
17 [໑໗]ໃນນິມິດທີ່ຂ້າພະເຈົ້າໄດ້ເຫັນກໍເປັນດັ່ງນີ້ ມີຝູງມ້າ ແລະຜູ້
ທີ່ຂີ່ມ້ານັ້ນມີເຄື່ອງປ້ອງກັນເອິກເປັນສີໄຟ, ສີນ້ຳເງິນ, ແລະມີ
ມາດ; ຫົວມ້າເຫຼົ່ານັ້ນເໝືອນຫົວສິງ ມີໄຟແລະຄວັນກັບມາດ
18 ພຸ່ງອອກມາຈາກປາກມັນ. [໑໘]ມະນຸດຖືກຂ້າເສຍໜຶ່ງສ່ວນສາມ
ດ້ວຍໄພອັນຕະລາຍສາມຢ່າງນີ້ຄື ໄຟ, ຄວັນ, ແລະມາດ ທີ່
19 ພຸ່ງອອກມາຈາກປາກຂອງມ້ານັ້ນ. [໑໙]ເພາະລິດຂອງມ້ານັ້ນມີ
ຢູ່ໃນປາກແລະໃນຫາງຂອງມັນຄືກັບງູ ແລະມີຫົວ ສິ່ງເຫຼົ່ານີ້
20 ເຂົາໃຊ້ທຳລາຍມະນຸດໄດ້. [໒໐]ສ່ວນມະນຸດທັງຫຼາຍທີ່ຍັງເຫຼືອຢູ່
ຊຶ່ງບໍ່ໄດ້ຖືກຂ້າດ້ວຍໄພອັນຕະລາຍເຫຼົ່ານັ້ນກໍບໍ່ໄດ້ກັບໃຈເສຍ
ໃໝ່ຈາກກິດຈະການທີ່ຕົນໄດ້ເຮັດ, ບໍ່ໄດ້ເລີກບູຊາຜີ, ບູຊາພະ
ທຽມທີ່ເຮັດດ້ວຍຄຳ, ເງິນ, ທອງເຫຼືອງ, ດ້ວຍຫີນແລະໄມ້ ຊຶ່ງ
21 ບໍ່ສາມາດຈະເຫັນ, ຈະຍິນ, ຫຼືຈະຍ່າງໄປໄດ້. [໒໑]ເຂົາບໍ່ໄດ້ກັບ
ໃຈເສຍໃໝ່ເລີກຈາກການຂ້າຟັນກັນ, ການເຊື່ອເວດມົນຄາ-
ຖາ, ການລ່ວງປະເວນີຜິດຊາຍຍິງ, ແລະການລັກຂອງຕົນ.





8 ມ້ວນນີ້ ຜູ້ນັ້ນແຫຼະ, ເປັນສຸກ.” [໘]ຝ່າຍຂ້າພະເຈົ້າ, ຄືໂຢຮັນ
ເປັນຜູ້ໄດ້ຍິນແລະໄດ້ເຫັນເຫດການເຫຼົ່ານີ້ ເມື່ອຂ້າພະເຈົ້າ
ໄດ້ຍິນແລະໄດ້ເຫັນແລ້ວ ກໍນ້ອມຕົວລົງຈະນະມັດສະການ
ແທບຕີນຂອງເທວະດາຕົນທີ່ໄດ້ສະແດງເຫດການເຫຼົ່ານີ້
9 ແກ່ຂ້າພະເຈົ້າ. [໙]ເທວະດາຕົນນັ້ນໄດ້ກ່າວກັບຂ້າພະເຈົ້າວ່າ,
“ລະວັງ, ຢ່າເຮັດຢ່າງນັ້ນ ເຮົາເປັນເພື່ອນຂ້ອຍໃຊ້ຢ່າງດຽວ
ກັນກັບທ່ານ ແລະກັບພວກພີ່ນ້ອງຂອງທ່ານຊຶ່ງເປັນຜູ້ປະ-
ກາດພຣະທຳ ແລະກັບພວກທີ່ຖືຮັກສາຖ້ອຍຄຳທັງຫຼາຍໃນ
10 ໜັງສືມ້ວນນີ້ ໃຫ້ທ່ານນະມັດສະການພຣະເຈົ້າສາ.” [໑໐]ແລ້ວ
ເພິ່ນໄດ້ບອກຂ້າພະເຈົ້າວ່າ, “ຢ່າປະທັບຕາອັດຄຳທຳນວາຍ
11 ໃນໜັງສືມ້ວນນີ້ ເພາະວ່າເວລານັ້ນໃກ້ຈະເຖິງແລ້ວ. [໑໑]ຝ່າຍ
ຄົນອະທຳກໍໃຫ້ເຮັດການອະທຳຕໍ່ໄປ ຜູ້ທີ່ເປັນຄົນຊົ່ວຊ້າກໍ
ໃຫ້ເຂົາຊົ່ວຊ້າຕໍ່ໄປ ຝ່າຍຄົນຊອບທຳກໍໃຫ້ເຮັດການຊອບ
ທຳຕໍ່ໄປ ແລະຜູ້ທີ່ເປັນຄົນບໍລິສຸດກໍໃຫ້ເຂົາເປັນບໍລິສຸດຕໍ່
12 ໄປ.” [໑໒]“ເບິ່ງແມ, ເຮົາຈະມາໃນໄວໆນີ້ ເຮົາຈະເອົາບຳເໜັດ
ຂອງເຮົາມານຳ ເພື່ອຕອບແທນການປະຕິບັດຂອງທຸກຄົນ.
13 [໑໓]ຝ່າຍເຮົາ, ຄືອາລະຟາແລະໂອເມຄາ*, ຜູ້ເປັນກົກແລະ
14 ຜູ້ສຸດທ້າຍ, ເປັນເບື້ອງຕົ້ນແລະເປັນເບື້ອງປາຍ.” [໑໔]ຄົນທັງ-
ຫຼາຍທີ່ປະຕິບັດຕາມພຣະບັນຍັດຂອງພຣະອົງກໍເປັນສຸກ,
ເພື່ອວ່າເຂົາຈະມີສິດເຂົ້າໄປເຖິງຕົ້ນໄມ້ທີ່ໃຫ້ມີຊີວິດ ແລະ
15 ເພື່ອເຂົາຈະໄດ້ເຂົ້າໄປໃນນະຄອນນັ້ນທາງປະຕູ. [໑໕]ສ່ວນຝູງ
ໝາກັບຄົນທີ່ໃຊ້ເວດມົນຄາຖາ, ຄົນຫຼິ້ນໂສເພນີ, ຄົນຄາດ
ຕະກຳ, ຄົນໄຫວ້ພະທຽມ, ກັບທຸກໆຄົນທີ່ຮັກຄວາມບໍ່ຈິງ
16 ແລະເຮັດຕາມ ພວກເຫຼົ່ານີ້ແຫຼະ, ຈະຢູ່ພາຍນອກ. [໑໖]“ຝ່າຍ
ເຮົາ, ຄືເຢຊູ, ເຮົາໄດ້ໃຊ້ເທວະດາຂອງເຮົາໄປເປັນພະຍານ
ເພື່ອສະແດງເຫດການເຫຼົ່ານີ້ແກ່ທ່ານສຳລັບຄຣິສຕະຈັກທັງ-
ຫຼາຍ ເຮົານີ້ເປັນຮາກເຄົ້າແລະໜໍ່ເຊື້ອຂອງດາວິດ, ເປັນດາວ

ໜ້າຊັງຫຼືເວົ້າຕົວະ ຈະເຂົ້າໄປໃນນະຄອນນັ້ນບໍ່ໄດ້ເປັນເດັດ-
ຂາດ ມີແຕ່ຄົນທັງຫຼາຍທີ່ມີຊື່ຈົດໄວ້ໃນທະບຽນແຫ່ງຊີວິດ
ຂອງພຣະເມສານ້ອຍເທົ່ານັ້ນຈຶ່ງຈະເຂົ້າໄດ້.

21:2 "ສັກສິດ" ອາດແປວ່າ "ບໍລິສຸດ" ກໍໄດ້

# ບົດທີ 22

1 [໑]ແລ້ວເທວະດາຕົນນັ້ນໄດ້ຊີ້ໃຫ້ຂ້າພະເຈົ້າເຫັນແມ່ນ້ຳທີ່ມີ
ນ້ຳແຫ່ງຊີວິດໃສເໝືອນແກ້ວ ໄຫຼອອກມາຈາກພຣະລາຊະ
2 ບັນລັງຂອງພຣະເຈົ້າ ແລະຂອງພຣະເມສານ້ອຍ. [໒]ນ້ຳນັ້ນ
ໄຫຼຜ່ານຖະໜົນຂອງນະຄອນນັ້ນ ຢູ່ຣິມແມ່ນ້ຳທັງສອງຟາກ
ມີຕົ້ນໄມ້ແຫ່ງຊີວິດຊຶ່ງເກີດຜົນສິບສອງຊະນິດ ເກີດຜົນທຸກ
ເດືອນ ແລະໃບຕົ້ນນັ້ນສຳລັບປົວບັນດາປະຊາຊາດໃຫ້ດີ.
3 [໓]ຈະບໍ່ມີສິ່ງໃດຖືກຊົງສາບແຊ່ງອີກຕໍ່ໄປ* ແຕ່ພຣະລາຊະບັນ-
ລັງຂອງພຣະເຈົ້າ ແລະຂອງພຣະເມສານ້ອຍຈະຕັ້ງຢູ່ທີ່ນັ້ນ
ແລະ ບັນດາ ຂ້ອຍ ໃຊ້ ຂອງ ພຣະອົງ ຈະ ບົວລະບັດ ພຣະອົງ.
4 [໔]ເຂົາຈະເຫັນພຣະພັກຂອງພຣະອົງ ແລະພຣະນາມຂອງ
5 ພຣະອົງຈະຊົງປະທັບຕາໃສ່ໜ້າຜາກຂອງເຂົາ. [໕]ກາງຄືນຈະ
ບໍ່ມີຢູ່ທີ່ນັ້ນເລີຍ, ແລະເຂົາບໍ່ຕ້ອງການແສງທຽນຫຼືແສງອາ-
ທິດ ເພາະວ່າອົງພຣະຜູ້ເປັນເຈົ້າຄືພຣະເຈົ້າຈະຊົງສ່ອງສະ-
ຫວ່າງໃສ່ເຂົາ ແລະເຂົາຈະໄດ້ຄຸ້ມຄອງຢູ່ຕະຫຼອດໄປເປັນ-
6 ນິດ. [໖]ເທວະດາຕົນນັ້ນໄດ້ບອກຂ້າພະເຈົ້າວ່າ, "ຖ້ອຍຄຳເຫຼົ່າ
ນີ້ແຫຼະ ກໍສັດຊື່ແລະທ່ຽງແທ້: ອົງພຣະຜູ້ເປັນເຈົ້າຂອງບັນດາ
ຜູ້ປະກາດພຣະທຳທີ່ບໍລິສຸດ ໄດ້ຊົງໃຫ້ເທວະດາຂອງພຣະ
ອົງສະແດງແກ່ບັນດາຂ້ອຍໃຊ້ຂອງພຣະອົງເພື່ອໃຫ້ຮູ້ເຫດ-
7 ການທັງປວງທີ່ຈຳເປັນຕ້ອງເກີດຂຶ້ນໃນໄວໆນັ້ນ." [໗]"ເບິ່ງແມ,
ເຮົາຈະມາໃນໄວໆນີ້: ຜູ້ໃດທີ່ຖືຮັກສາຄຳທຳນວາຍໃນໜັງສື





# ບົດທີ 10

1 [໑]ຂ້າພະເຈົ້າໄດ້ເຫັນເທວະດາຜູ້ມີລິດອີກຕົນໜຶ່ງລົງມາຈາກ
ສະຫວັນ ມີເມກປົກຄຸມຕົວໄວ້ແລະມີຮຸ້ງກິນນ້ຳຢູ່ເທິງຫົວ
ໜ້າຂອງເພິ່ນເໝືອນດວງອາທິດ ແລະຂາກໍເໝືອນເຕົາໄຟ.
2 [໒]ເພິ່ນຖືໜັງສືນ້ອຍໜຶ່ງມ້ວນທີ່ພີຢູ່ໃນມື ຕີນເບື້ອງຂວາຢຽບ
3 ນ້ຳທະເລແລະຕີນເບື້ອງຊ້າຍຢຽບບົກ. [໓]ເພິ່ນຮ້ອງດັງເໝືອນ
ດັ່ງສິງຮ້ອງ ເມື່ອເພິ່ນຮ້ອງ ສຽງຟ້າຮ້ອງທັງເຈັດກໍດັງຂຶ້ນ.
4 [໔]ເມື່ອສຽງຟ້າຮ້ອງທັງເຈັດດັງຂຶ້ນແລ້ວ ຂ້າພະເຈົ້າກໍລົງມືຈະ
ຂຽນ ແຕ່ຂ້າພະເຈົ້າໄດ້ຍິນພຣະສຸລະສຽງຈາກສະຫວັນຊົງ
ກ່າວວ່າ, "ສິ່ງທີ່ຟ້າຮ້ອງທັງເຈັດໄດ້ຮ້ອງແລ້ວນັ້ນ ຈົ່ງປະທັບ
5 ຕາອັດໄວ້ ຢ່າໄດ້ຂຽນ." [໕]ຝ່າຍເທວະດາຕົນທີ່ຂ້າພະເຈົ້າໄດ້
ເຫັນຢືນຢູ່ເທິງທະເລ ແລະ ເທິງບົກນັ້ນໄດ້ຍໍມືຂວາຂຶ້ນໃສ່
6 ຟ້າ. [໖]ແລະສາບານໂດຍອ້າງອອກພຣະນາມຂອງພຣະອົງ
ຜູ້ຊົງຢູ່ເປັນນິດ, ຜູ້ຊົງສ້າງຟ້າສະຫວັນ ແລະສັບພະສິ່ງທີ່ຢູ່
ໃນສະຫວັນນັ້ນ, ຊົງສ້າງແຜ່ນດິນໂລກແລະສັບພະສິ່ງທີ່ມີຢູ່
ໃນແຜ່ນດິນໂລກນັ້ນ, ແລະຊົງສ້າງທະເລກັບສັບພະສິ່ງທີ່ມີ
7 ຢູ່ໃນທະເລນັ້ນວ່າ ຈະບໍ່ມີການຊ້ານານອີກຕໍ່ໄປແລ້ວ. [໗]ແຕ່
ໃນເວລາເທວະດາຕົນທີເຈັດອອກສຽງ ຄືເວລາເປົ່າແກນັ້ນ
ຄວາມເລິກລັບຂອງພຣະເຈົ້າ ທີ່ພຣະອົງໄດ້ຊົງປະກາດແກ່
ຂ້ອຍໃຊ້ຂອງພຣະອົງຄືພວກຜູ້ທຳນວາຍນັ້ນກໍຈະສຳເລັດ.
8 [໘]ແລ້ວພຣະສຸລະສຽງທີ່ຂ້າພະເຈົ້າໄດ້ຍິນຈາກສະຫວັນນັ້ນ
ຊົງກ່າວກັບຂ້າພະເຈົ້າອີກວ່າ, "ຈົ່ງໄປຮັບເອົາໜັງສືມ້ວນນັ້ນ
ທີ່ພີຢູ່ໃນມືຂອງເທວະດາຕົນທີ່ຢືນຢູ່ເທິງທະເລ ແລະ ເທິງ
9 ບົກນັ້ນ." [໙]ຂ້າພະເຈົ້າຈຶ່ງໄປຫາເທວະດາຕົນນັ້ນ ແລະຂໍເອົາ
ໜັງສືມ້ວນນ້ອຍນັ້ນ ເພິ່ນໄດ້ຕອບຂ້າພະເຈົ້າວ່າ, "ເອົາໄປ
ກິນເສຍ ມັນຈະເຮັດໃຫ້ທ້ອງເຈົ້າຂົມ ແຕ່ໃນປາກຂອງເຈົ້າ

10 ຈະຫວານເໝືອນນ້ຳເຜິ້ງ.” ໑໐ຂ້າພຣະເຈົ້າໄດ້ຮັບເອົາໜັງສື
ມ້ວນນ້ອຍຈາກມືເທວະດາແລ້ວກໍກິນເສຍ ໃນປາກຂອງ
ຂ້າພະເຈົ້າມັນກໍຫວານເໝືອນນ້ຳເຜິ້ງ ແຕ່ເມື່ອກິນແລ້ວທ້ອງ
11 ຂອງຂ້າພະເຈົ້າກໍຂົມ. ໑໑ແລ້ວຂ້າພະເຈົ້າໄດ້ຮັບສັ່ງວ່າ, “ເຈົ້າ
ຕ້ອງທຳນວາຍອີກເຖິງເລື່ອງຊົນຊາດທັງຫຼາຍ, ບັນດາປະຊາ
ຊາດ, ພາສາ, ແລະກະສັດທັງຫຼາຍ.”

# ບົດທີ 11

1 ໑ມີຜູ້ໜຶ່ງໄດ້ເອົາໄມ້ແທກອັນໜຶ່ງເໝືອນໄມ້ຄ້ອນເທົ້າໃຫ້
ຂ້າພະເຈົ້າແລະເທວະດາອົງນັ້ນຢືນຢູ່ ແລ້ວກ່າວວ່າ, “ຈົ່ງ
ລຸກຂຶ້ນ ໄປ ແທກ ພຣະວິຫານ ຂອງ ພຣະເຈົ້າ ກັບ ແທ່ນ ບູຊາ
2 ແລະນັບຈຳນວນຄົນທັງຫຼາຍທີ່ນະມັດສະການຢູ່ທີ່ນັ້ນ. ໒ແຕ່
ບໍລິເວນຂ້າງນອກພຣະວິຫານນັ້ນຈົ່ງເວັ້ນເສຍ ຢ່າໄດ້ແທກ
ເພາະວ່າບ່ອນນັ້ນໄດ້ຊົງມອບໃຫ້ຄົນຕ່າງຊາດແລ້ວ ເຂົາຈະ
3 ຢຽບຢ່ຳນະຄອນສັກສິດໃນລະຫວ່າງສີ່ສິບສອງເດືອນ. ໓ເຮົາ
ຈະໃຫ້ລິດອຳນາດແກ່ພະຍານທັງສອງຂອງເຮົາ ແລະເຂົາຈະ
ນຸ່ງຫົ່ມຜ້າຫຍາບ ແລະປະກາດພຣະທຳໄປຕະຫຼອດພັນສອງ
4 ຮ້ອຍຫົກສິບວັນ.” ໔ພະຍານທັງສອງນັ້ນຄືຕົ້ນກອກເທດສອງ
ຕົ້ນ ແລະເຄື່ອງຮອງຕີນທຽນສອງອັນທີ່ຕັ້ງຢູ່ຕໍ່ພຣະພັກແຫ່ງ
5 ພຣະຜູ້ເປັນເຈົ້າຂອງແຜ່ນດິນໂລກ. ໕ຖ້າຜູ້ໃດຢາກທຳຮ້າຍ
ພະຍານທັງສອງນັ້ນ ໄຟກໍຈະພຸ່ງອອກຈາກປາກຂອງເຂົາ
ເຜົາຜານສັດຕູນັ້ນເສຍ ແມ່ນແລ້ວ, ຖ້າຜູ້ໃດຢາກທຳຮ້າຍ
6 ເຂົາ ຜູ້ນັ້ນກໍຕ້ອງຕາຍຢ່າງນັ້ນ. ໖ຝ່າຍພະຍານທັງສອງນັ້ນ
ມີສິດອຳນາດອັດທ້ອງຟ້າໄວ້ ເພື່ອບໍ່ໃຫ້ຝົນຕົກໃນລະຫວ່າງ
ວັນເຫຼົ່ານັ້ນ ທີ່ເຂົາກຳລັງປະກາດພຣະທຳ ແລະມີສິດອຳນາດ
ໃຫ້ນ້ຳກາຍເປັນເລືອດໄດ້ ທັງມີສິດອຳນາດບັນດານໃຫ້ໄພ





ມີນທີນ ກວ້າງຍາວທໍ່ກັນ ເພິ່ນເອົາໄມ້ແທກນະຄອນນັ້ນໄດ້
17 ລ້ານສອງແສນວາ ກວ້າງຍາວແລະສູງທໍ່ກັນ. ໑໗ເພິ່ນແທກ
ກຳແພງນະຄອນນັ້ນ ໄດ້ຮ້ອຍສີ່ສິບສີ່ສອກຕາມໄມ້ແທກວາ
ທີ່ເທວະດານັ້ນໃຊ້ ຊຶ່ງເປັນເໝືອນໄມ້ແທກວາທີ່ມະນຸດເຄີຍ
18 ໃຊ້. ໑໘ກຳແພງນະຄອນນັ້ນກໍ່ດ້ວຍແກ້ວມະນີໂຊດ ແລະນະ-
19 ຄອນນັ້ນສ້າງດ້ວຍຄຳບໍລິສຸດສຸກໃສເໝືອນແກ້ວ. ໑໙ບັນດາ
ຖານຂອງກຳແພງນະຄອນນັ້ນປະດັບດ້ວຍເພັດພອຍທຸກຊະ-
ນິດ ຖານທີໜຶ່ງເປັນແກ້ວມະນີໂຊດ, ທີສອງໄພທູນ, ທີສາມ
20 ໂມຣາ, ທີສີ່ມໍລະກົດ, ໒໐ທີຫ້າບຸດ, ທີຫົກພິລາ, ທີເຈັດບຸສະ-
ບາຄຳນ້ຳແກ່, ທີແປດເພທາຍ, ທີເກົ້າບຸສະບາຄຳນ້ຳອ່ອນ,
ທີສິບຢົກ, ທີສິບເອັດນິນ, ແລະ ທີສິບສອງເປັນແກ້ວເພທາຍ
21 ສີມ່ວງ.໒໑ປະຕູ ທັງ ສິບ ສອງ ນັ້ນ ເຮັດ ດ້ວຍ ໄຂ່ ມຸກ ສິບ ສອງ
ໜ່ວຍ ປະຕູລະໜ່ວຍ ແລະຖະໜົນໃນນະຄອນນັ້ນເປັນຄຳ
22 ບໍລິສຸດສ່ອງໃສເໝືອນແກ້ວ.໒໒ຂ້າພະເຈົ້າບໍ່ໄດ້ເຫັນມີພຣະວິ-
ຫານໃນນະຄອນນັ້ນ ເພາະອົງພຣະຜູ້ເປັນເຈົ້າ ຄືພຣະເຈົ້າ
ຜູ້ຊົງລິດທານຸພາບສູງສຸດ ແລະພຣະເມສານ້ອຍຊົງເປັນ
23 ພຣະວິຫານໃນນະຄອນນັ້ນ. ໒໓ນະຄອນນັ້ນບໍ່ຕ້ອງການແສງ
ສະຫວ່າງຂອງດວງອາທິດແລະດວງຈັນເພາະພຣະລັດສະໝີ
ຂອງພຣະເຈົ້າຊົງເປັນແສງສະຫວ່າງ ແລະພຣະເມສານ້ອຍ
24 ຊົງເປັນໂຄມໄຟຂອງນະຄອນນັ້ນ. ໒໔ບັນດາປະຊາຊາດທີ່
ພົ້ນແລ້ວຈະທຽວໄປມາໃນຖ້າມກາງແສງສະຫວ່າງຂອງນະ-
ຄອນນັ້ນແລະບັນດາກະສັດໃນແຜ່ນດິນໂລກຈະນຳເອົາສະ-
25 ຫງ່າລາສີແລະກຽດຂອງຕົນເຂົ້າໄປໃນນະຄອນນັ້ນ. ໒໕ປະຕູ
ທັງຫຼາຍໃນນະຄອນນັ້ນຈະບໍ່ອັດໃນເວລາກາງເວັນ: (ເພາະ
26 ໃນນະຄອນນັ້ນບໍ່ມີກາງຄືນ). ໒໖ເຂົາຈະນຳເອົາສະຫງ່າລາສີ
27 ແລະກຽດຕິຍົດຂອງນານາປະເທດມາສູ່ນະຄອນນັ້ນ. ໒໗ສິ່ງ
ໜຶ່ງສິ່ງໃດທີ່ຖືກຊົ່ວມົວໝອງ ຫຼືຜູ້ໃດທີ່ເຮັດການໜ້າກຽດ

ເບື້ອງປາຍ. ຜູ້ໃດຫິວນ້ຳ ຝ່າຍເຮົາຈະໃຫ້ຜູ້ນັ້ນດື່ມຈາກນ້ຳພຸ
7 ແຫ່ງຊີວິດໂດຍບໍ່ຕ້ອງເສຍຄ່າ. ໗ຜູ້ໃດມີໄຊຊະນະ ຜູ້ນັ້ນຈະ
ໄດ້ຮັບທຸກສິ່ງເປັນມໍລະດົກ ເຮົາຈະເປັນພຣະເຈົ້າຂອງເຂົາ
8 ເຂົານັ້ນແຫຼະ, ຈະເປັນບຸດຂອງເຮົາ. ໘ແຕ່ສ່ວນຄົນຂີ້ຢ້ານ,
ຄົນບໍ່ເຊື່ອ, ຄົນທີ່ເຮັດການໜ້າກຽດໜ້າຊັງ, ຄົນຄາດຕະກຳ,
ຄົນຫຼິ້ນໂສເພນີ, ຄົນໃຊ້ເວດມົນຄາຖາ, ຄົນໄຫວ້ພະທຽມ,
ແລະຄົນຂີ້ຕົວະທຸກຄົນນັ້ນ ມໍລະດົກຂອງເຂົາຈະຢູ່ໃນບຶງທີ່
ໄໝ້ຢູ່ດ້ວຍໄຟປົນກັບມາດ: ຊຶ່ງເປັນຄວາມຕາຍຄັ້ງທີສອງ.”
9 ໙ເທວະດາຕົນໜຶ່ງໃນບັນດາເຈັດຕົນທີ່ຖືຂັນເຈັດໜ່ວຍ ອັນ
ເຕັມໄປດ້ວຍໄພອັນຕະລາຍສຸດທ້າຍທັງເຈັດປະການນັ້ນໄດ້
ມາເວົ້າກັບຂ້າພະເຈົ້າວ່າ, “ເຊີນມານີ້ ເຮົາຈະໃຫ້ທ່ານເຫັນ
10 ເຈົ້າສາວທີ່ເປັນມະເຫສີຂອງພຣະເມສານ້ອຍນັ້ນ.” ໑໐ເພິ່ນ
ໄດ້ ຍົກ ຂ້າພະເຈົ້າ ດ້ວຍ ພຣະວິນຍານ ໄປ ເທິງ ພູ ສູງ ໜ່ວຍ
ໃຫຍ່ ແລະໄດ້ຊີ້ໃຫ້ຂ້າພະເຈົ້າເຫັນນະຄອນສັກສິດຄືກຸງເຢຣູ
ຊາເລັມ ຊຶ່ງກຳລັງ ລົງມາຈາກສະຫວັນແລະຈາກພຣະເຈົ້າ.
11 ໑໑ນະຄອນນັ້ນປະກອບດ້ວຍລັດສະໝີຂອງພຣະເຈົ້າ ມີແສງ
ຮຸ່ງເຮືອງເໝືອນແກ້ວມະນີອັນມີຄ່າແພງ ເໝືອນກັບແກ້ວ-
12 ມະນີໄຂດອັນເສາະໃສ. ໑໒ນະຄອນນັ້ນມີກຳແພງໃຫຍ່ສູງ ມີ
ປະຕູສິບສອງປ່ອງ ທີ່ປະຕູນັ້ນມີເທວະດາສິບສອງຕົນ ແລະ
ທີ່ປະຕູນັ້ນໄດ້ຈາລຶກຊື່ຕະກຸນຂອງພວກອິດສະຣາເອນສິບ
13 ສອງຕະກຸນໄວ້. ໑໓ທິດຕາເວັນອອກມີສາມປະຕູ, ທິດເໜືອມີ
ສາມປະຕູ, ທິດໃຕ້ມີສາມປະຕູ, ແລະທິດຕາເວັນຕົກມີສາມ
14 ປະຕູ. ໑໔ກຳແພງນະຄອນນັ້ນມີຫີນສິບສອງກ້ອນເປັນຖານ
ແລະທີ່ຫີນນັ້ນໄດ້ຈາລຶກຊື່ອັກຄະສາວົກສິບສອງຄົນຂອງ
15 ພຣະເມສານ້ອຍ. ໑໕ເທວະດາຕົນທີ່ເວົ້າກັບຂ້າພະເຈົ້ານັ້ນຖື
ໄມ້ແທກຄຳ ເພື່ອຈະແທກພຣະນະຄອນ, ແທກປະຕູ ກັບກຳ-
16 ແພງຂອງນະຄອນນັ້ນ. ໑໖ຮູບຂອງນະຄອນນັ້ນເປັນສີ່ຫຼ່ຽມ-





ອັນຕະລາຍທຸກຢ່າງທຳລະມານແຜ່ນດິນໂລກໄດ້ທຸກເວລາ
7 ຕາມຄວາມປາດຖະໜາຂອງເຂົາ. ໗ເມື່ອການພະຍານຂອງ
ເຂົາສິ້ນສຸດແລ້ວ ສັດຮ້າຍທີ່ຂຶ້ນມາຈາກເຫວເລິກນັ້ນກໍຈະສູ້
8 ຮົບກັບເຂົາ, ຈະຊະນະເຂົາ, ແລະຈະຂ້າເຂົາເສຍ. ໘ແລະສົບ
ຂອງເຂົາຈະຢູ່ທີ່ຖະໜົນໃນມະຫານະຄອນນັ້ນ ຊຶ່ງຕາມຝ່າຍ
ວິນຍານເອີ້ນວ່າເມືອງໂຊໂດມແລະເມືອງເອຢິບ ອັນເປັນ
ເມືອງທີ່ອົງພຣະຜູ້ເປັນເຈົ້າຂອງເຮົາຊົງຖືກຄຶງໄວ້ທີ່ໄມ້ກາງ
9 ແຂນ. ໙ຄົນຫຼາຍຊາດ, ຫຼາຍຕະກຸນ, ຫຼາຍພາສາ, ແລະຫຼາຍ
ປະເທດ ຈະເຫັນສົບຂອງເຂົາຕະຫຼອດສາມວັນເຄິ່ງ ແລະ
10 ຈະບໍ່ຍອມໃຫ້ເອົາສົບເຫຼົ່ານັ້ນບັນຈຸໄວ້ໃນອຸບໂມງ. ໑໐ແລະ
ບັນດາຊາວໂລກຈະຊົມຊື່ນຍິນດີເພາະເຂົາ, ຈະສະໜຸກ
ມ່ວນຊື່ນ, ຈະໃຫ້ຂອງຂວັນເຊິ່ງກັນແລະກັນ ເພາະຜູ້ປະກາດ
11 ພຣະທຳທັງສອງນີ້ໄດ້ທຳລະມານຊາວໂລກທັງຫຼາຍ. ໑໑ເມື່ອ
ສາມວັນເຄິ່ງຜ່ານພົ້ນໄປແລ້ວ ລົມຊີວິດຊຶ່ງມາຈາກພຣະເຈົ້າ
ໄດ້ເຂົ້າໃນສົບຂອງເຂົາ ເຂົາກໍລຸກຢືນຂຶ້ນ ແລະຄົນທັງຫຼາຍ
12 ທີ່ໄດ້ເຫັນເຂົາກໍມີຄວາມຢ້ານກົວຢ່າງໃຫຍ່ຫຼວງ. ໑໒ຄົນເຫຼົ່າ-
ນັ້ນ ໄດ້ຍິນພຣະສຸລະສຽງດັງມາຈາກສະຫວັນຊົງກ່າວແກ່
ເຂົາວ່າ, “ຈົ່ງຂຶ້ນມາທີ່ນີ້” ແລະເຂົາຂຶ້ນເມືອໃນເມກເຂົ້າສູ່ສະ-
13 ຫວັນ ແລະພວກສັດຕູກໍໄດ້ເຫັນ. ໑໓ໃນເວລາໂມງນັ້ນບັງເກີດ
ແຜ່ນດິນໄຫວຢ່າງໃຫຍ່ ແລະໜຶ່ງສ່ວນສິບຂອງນະຄອນນັ້ນ
ກໍເພພັງລົງ ຈຳນວນຄົນຕາຍເພາະແຜ່ນດິນໄຫວນັ້ນມີເຈັດ
ພັນຄົນ ແລະຄົນທີ່ຍັງເຫຼືອຢູ່ກໍເກີດມີຄວາມຢ້ານຢ່າງໃຫຍ່
ຫຼວງ ຈຶ່ງພາກັນຖວາຍພຣະກຽດແດ່ພຣະເຈົ້າແຫ່ງສະຫວັນ.
14 ໑໔ວິບັດຖ້ວນສອງກໍຜ່ານໄປແລ້ວ ເບິ່ງແມ, ວິບັດຖ້ວນສາມ
15 ກໍຈະມາເຖິງໃນໄວໆນີ້ແຫຼະ. ໑໕ເມື່ອເທວະດາຕົນທີເຈັດໄດ້
ເປົ່າແກຂຶ້ນ ແລ້ວມີຫຼາຍສຽງໃນສະຫວັນກ່າວດັງຂຶ້ນວ່າ,
“ລາຊະອານາຈັກແຫ່ງພິພົບນີ້ ໄດ້ກາຍເປັນກຳມະສິດແຫ່ງ

ອົງພຣະຜູ້ເປັນເຈົ້າຂອງເຮົາທັງຫຼາຍ ແລະເປັນຂອງພຣະ
ຄຣິດຂອງພຣະອົງ ພຣະອົງຈະຊົງສະເຫວີຍລາດຕະຫຼອດ
16 ໄປເປັນນິດ.” ໑໖ສ່ວນຜູ້ອາວຸໂສຊາວສີ່ທ່ານນັ້ນ ຊຶ່ງນັ່ງຢູ່ທີ່
ບັນລັງຂອງຕົນຕໍ່ພຣະພັກພຣະເຈົ້າກໍໝູບລົງນະມັດສະການ
17 ພຣະເຈົ້າ, ໑໗ກາບທູນວ່າ, “*ຂ້າແດ່ພຣະເຈົ້າ ອົງພຣະຜູ້ເປັນ*
*ເຈົ້າ, ຜູ້ຊົງລິດທານຸພາບສູງສຸດ, ຜູ້ຊົງດຳລົງຢູ່ໃນປັດຈຸບັນ*
*ນີ້ ແລະຜູ້ໄດ້ຊົງດຳລົງຢູ່ໃນຄາວກ່ອນແລະຜູ້ຈະສະເດັດມາ*
*ໃນອານາຄົດ ພວກຂ້າພຣະອົງໂມທະນາພຣະເດດພຣະຄຸນ*
*ຂອງພຣະອົງເພາະພຣະອົງໄດ້ຊົງໃຊ້ລິດທານຸພາບອັນໃຫຍ່*
18 *ຫຼວງຂອງພຣະອົງແລະໄດ້ຊົງຄອບຄອງ.* ໑໘*ຝ່າຍນານາຊາດ*
*ກໍມີຄວາມເຄືອງແຄ້ນ ແຕ່ພຣະພິໂລດຂອງພຣະອົງກໍມາ*
*ເຖິງແລ້ວ ເຖິງເວລາທີ່ພຣະອົງຈະຊົງພິພາກສາບັນດາຄົນທີ່*
*ຕາຍແລ້ວແລະເຖິງເວລາທີ່ຈະຊົງປະທານລາງວັນ ແກ່ພວກ*
*ຂ້ອຍໃຊ້ຂອງພຣະອົງ ຄືພວກຜູ້ປະກາດພຣະທຳແລະພວກ*
*ໄພ່ພົນຂອງພຣະອົງ ແລະແກ່ທຸກຄົນທີ່ຢຳເກງພຣະນາມ*
*ຂອງພຣະອົງ ທັງຜູ້ນ້ອຍແລະຜູ້ໃຫຍ່ແລະເຖິງເວລາແລ້ວ ທີ່*
*ພຣະອົງຈະຊົງທຳລາຍພວກຄົນທີ່ທຳລາຍແຜ່ນດິນໂລກ.*”
19 ໑໙ແລ້ວ ພຣະວິຫານ ຂອງ ພຣະເຈົ້າ ໃນ ມະຫາ ສະຫວັນ ກໍ ໄຂ
ອອກ ໃນພຣະວິຫານນັ້ນກໍເຫັນມີຫີບພຣະສັນຍາຂອງພຣະ
ອົງ ແລ້ວກໍບັງເກີດມີຟ້າແມບ, ສຽງຕ່າງໆ ກັບຟ້າຮ້ອງ, ແຜ່ນ-
ດິນໄຫວ, ທັງໝາກເຫັບຢ່າງຫຼວງຫຼາຍ.

## ບົດທີ 12

1 ໑ມີໝາຍສຳຄັນອັນຍິ່ງໃຫຍ່ປາກົດໃນສະຫວັນ ຄືຜູ້ຍິງຄົນ
ໜຶ່ງມີດວງອາທິດຄຸມຕົວເໝືອນອາພອນ, ມີດວງຈັນຢູ່ໃຕ້
2 ຕີນ, ມີດາວສິບສອງດວງຢູ່ເທິງຫົວເໝືອນມົງກຸດ. ໒ຍິງນັ້ນມີ





ໃນແດນນັ້ນຄືນ ເຂົາທັງປວງກໍຖືກຊົງພິພາກສາຕາມການ
14 ປະຕິບັດຂອງຕົນທຸກຄົນ. ໑໔ຄວາມຕາຍ ແລະນະຣົກກໍຖືກ
ຖິ້ມລົງໃນບຶງໄຟ. ບຶງໄຟນີ້ແຫຼະ, ເປັນຄວາມຕາຍຄັ້ງທີສອງ.
15 ໑໕ຖ້າຜູ້ໃດບໍ່ມີຊື່ຈົດໄວ້ໃນທະບຽນແຫ່ງຊີວິດ ຜູ້ນັ້ນກໍຖືກຖິ້ມ
ລົງໃນບຶງໄຟ.

## ບົດທີ 21

1 ໑ແລ້ວຂ້າພະເຈົ້າໄດ້ເຫັນທ້ອງຟ້າໃໝ່ ແລະ ແຜ່ນດິນໂລກ
ໃໝ່ ເພາະວ່າທ້ອງຟ້າເດີມ ແລະ ແຜ່ນດິນໂລກເດີມນັ້ນໄດ້
2 ລ່ວງໄປແລ້ວ ແລະທະເລກໍບໍ່ມີເໝືອນກັນ. ໒ຂ້າພະເຈົ້າໄດ້
ເຫັນນະຄອນສັກສິດ* ຄືກຸງເຢຣູຊາເລັມໃໝ່ ກຳລັງລົງມາ
ຈາກສະຫວັນ ແລະ ຈາກພຣະເຈົ້າ ນະຄອນນີ້ໄດ້ຈັດຕຽມ
ໄວ້ແລ້ວ ເໝືອນຢ່າງເຈົ້າສາວແຕ່ງຕົວໄວ້ສຳລັບເຈົ້າບ່າວ.
3 ໓ຂ້າພະເຈົ້າໄດ້ຍິນສຽງດັງມາຈາກສະຫວັນວ່າ, “ເບິ່ງແມ, ທີ່
ສະຖິດຂອງພຣະເຈົ້າກໍຢູ່ກັບມະນຸດແລ້ວ ພຣະອົງຈະຊົງສະ-
ຖິດຢູ່ກັບເຂົາ ເຂົາເຫຼົ່ານັ້ນແຫຼະ, ຈະເປັນໄພ່ພົນຂອງພຣະ
ອົງ ແລະພຣະເຈົ້າເອງຈະປະທັບຢູ່ກັບເຂົາ ແລະຈະຊົງເປັນ
4 ພຣະເຈົ້າຂອງເຂົາ. ໔ພຣະເຈົ້າຈະຊົງເຊັດນ້ຳຕາທຸກໆຢົດ
ຈາກຕາຂອງເຂົາ ຄວາມຕາຍຈະບໍ່ມີອີກຕໍ່ໄປ: ຄວາມໂສກ-
ເສົ້າ, ການຮ້ອງໄຫ້, ແລະຄວາມເຈັບປວດຈະບໍ່ມີອີກຕໍ່ໄປ
5 ເພາະວ່າສິ່ງທີ່ມີຢູ່ຄາວກ່ອນນັ້ນກໍລ່ວງໄປແລ້ວ. ໕ພຣະອົງຜູ້
ຊົງປະທັບເທິງພຣະລາຊະບັນລັງໄດ້ຊົງກ່າວວ່າ, “ເບິ່ງແມ,
ເຮົາສ້າງສິ່ງທັງປວງຂຶ້ນໃໝ່” ແລະພຣະອົງຊົງກ່າວອີກວ່າ,
“ຈົ່ງຂຽນໄວ້ ເພາະວ່າຖ້ອຍຄຳເຫຼົ່ານີ້ແຫຼະ, ສັດຊື່ແລະທ່ຽງ
6 ແທ້.” ໖ພຣະອົງຊົງກ່າວກັບຂ້າພະເຈົ້າວ່າ, “ສຳເລັດແລ້ວ
ເຮົານີ້ຄືອາລະຟາແລະໂອເມຄາ ເປັນເບື້ອງຕົ້ນແລະເປັນ

6 ແຫຼະ, ຄືການຄືນມາຈາກຕາຍຄັ້ງທຳອິດ. ໖ຜູ້ໃດທີ່ມີສ່ວນໃນ
ການຄືນມາຈາກຕາຍຄັ້ງທຳອິດ ຜູ້ນັ້ນແຫຼະ ກໍເປັນສຸກແລະ
ບໍລິສຸດ: ຄວາມຕາຍຄັ້ງທີສອງຈະບໍ່ມີອຳນາດເໜືອຄົນເຫຼົ່າ-
ນັ້ນ ແຕ່ເຂົາຈະໄດ້ເປັນປະໂລຫິດຂອງພຣະເຈົ້າແລະຂອງ
ພຣະຄຣິດ ທັງຈະຄຸ້ມຄອງຮ່ວມກັບພຣະອົງໃນລະຫວ່າງພັນ
7 ປີ. ໗ເມື່ອພັນປີນັ້ນລ່ວງໄປແລ້ວ ຊາຕານຈະຖືກປ່ອຍອອກ
8 ຈາກຄຸກບ່ອນຂັງມັນໄວ້. ໘ມັນຈະອອກໄປຫຼອກລວງບັນດາ
ປະຊາຊາດ ທີ່ຢູ່ໃນທິດທັງສີ່ຂອງແຜ່ນດິນໂລກ ຄືໂຄກແລະ
ມາໂຄກ ໃຫ້ມາໂຮມກັນເພື່ອການຮົບເສິກ ຈຳນວນຄົນເຫຼົ່າ-
9 ນັ້ນຫຼາຍ ເໝືອນເມັດຊາຍທີ່ທະເລ. ໙ເຂົາໄດ້ຍົກທັບອອກ
ໄປທົ່ວໜ້າແຜ່ນດິນ ແລ້ວອ້ອມຄ້າຍພວກໄພ່ພົນຂອງພຣະ
ເຈົ້າກັບນະຄອນທີ່ພຣະອົງຊົງຮັກນັ້ນ ແຕ່ໄຟໄດ້ຕົກລົງມາ
ຈາກພຣະເຈົ້າ ອອກຈາກສະຫວັນລ້າງຜານຄົນເຫຼົ່ານັ້ນເສຍ.
10 ໑໐ສ່ວນພະຍາມານທີ່ຫຼອກລວງຄົນເຫຼົ່ານັ້ນກໍຖືກຖິ້ມລົງໃນ
ບຶງໄຟປົນກັບມາດ ຄືບ່ອນທີ່ສັດຮ້າຍແລະຄົນທີ່ປອມຕົວ
ເປັນຜູ້ປະກາດພຣະທຳຢູ່ໃນນັ້ນ ເຂົາຈະຕ້ອງທົນທຸກທໍລະ-
11 ມານທັງກາງເວັນແລະກາງຄືນຕະຫຼອດໄປເປັນນິດ. ໑໑ແລ້ວ
ຂ້າພະເຈົ້າໄດ້ເຫັນພຣະລາຊະບັນລັງໃຫຍ່ສີຂາວ ແລະເຫັນ
ພຣະອົງຜູ້ຊົງປະທັບເທິງບັນລັງນັ້ນ ເມື່ອພຣະອົງຊົງປາກົດ
ແຜ່ນດິນ ໂລກ ແລະ ທ້ອງຟ້າ ກໍ ພ່າຍ ໜີ ແລະ ບ່ອນຢູ່ ສຳລັບ
12 ແຜ່ນດິນໂລກແລະທ້ອງຟ້ານັ້ນກໍບໍ່ເຫັນອີກ. ໑໒ຂ້າພະເຈົ້າໄດ້
ເຫັນບັນດາຜູ້ທີ່ຕາຍແລ້ວ ທັງຜູ້ໃຫຍ່ແລະຜູ້ນ້ອຍ ຢືນຢູ່ຕໍ່ໜ້າ
ພຣະພັກຂອງພຣະເຈົ້າ; ແລະໜັງສືຕ່າງໆກໍໄຂອອກ ມີໜັງສື
ອີກເຫຼັ້ມໜຶ່ງກໍໄຂອອກ ຄືທະບຽນແຫ່ງຊີວິດແລະຄົນທັງຫຼາຍ
ທີ່ຕາຍແລ້ວກໍຖືກຊົງພິພາກສາ ຕາມການປະຕິບັດຂອງເຂົາ
13 ທີ່ຂຽນໄວ້ໃນໜັງສືເຫຼົ່ານັ້ນ. ໑໓ທະເລກໍສົ່ງຄົນທັງຫຼາຍທີ່ຕາຍ
ໃນທະເລຄືນ ຄວາມຕາຍແລະນະຮົກກໍສົ່ງຄົນທັງຫຼາຍທີ່ຢູ່





3 ທ້ອງແລະຮ້ອງຄາງເຈັບປວດຢູ່ ກຳລັງຈະເກີດລູກ. ໓ມີໝາຍ
ສຳຄັນອີກຢ່າງໜຶ່ງປາກົດໃນສະຫວັນ ດັ່ງນີ້, ມີພະຍານາກ
ໃຫຍ່ສີແດງໂຕໜຶ່ງ ມີເຈັດຫົວ, ມີສິບເຂົາ, ແລະຢູ່ເທິງຫົວ
4 ນັ້ນມີມົງກຸດເຈັດອັນ. ໔ຫາງພະຍານາກໄດ້ຟາດດວງດາວ
ໃນທ້ອງຟ້າໜຶ່ງສ່ວນສາມລົງໃສ່ແຜ່ນດິນໂລກ ແລະພະຍາ
ນາກໂຕນັ້ນຢືນຢູ່ຕໍ່ໜ້າຜູ້ທີ່ກຳລັງຈະເກີດລູກ ເພື່ອຈະກິນ
5 ລູກນັ້ນເມື່ອເກີດແລ້ວ. ໕ຜູ້ຍິງນັ້ນໄດ້ເກີດລູກຊາຍ ຜູ້ຊຶ່ງຈະ
ປົກຄອງປະຊາຊາດທັງປວງດ້ວຍຄ້ອນເຫຼັກ ແລະລູກນັ້ນ
ໄດ້ຖືກຊົງຍົກຂຶ້ນເມືອເຖິງພຣະເຈົ້າ ແລະເຖິງພຣະລາຊະ
6 ບັນລັງຂອງພຣະອົງ. ໖ຝ່າຍຍິງນັ້ນໄດ້ໜີເຂົ້າໄປອາໄສຢູ່ໃນ
ປ່າ ທີ່ນາງມີບ່ອນຢູ່ ຊຶ່ງພຣະເຈົ້າໄດ້ຊົງຈັດຕຽມໄວ້ໃຫ້ ເພື່ອ
ນາງຈະໄດ້ຮັບການລ້ຽງດູຢູ່ທີ່ນັ້ນລະຫວ່າງພັນສອງຮ້ອຍ
7 ຫົກສິບວັນ. ໗ຂະນະນັ້ນໄດ້ເກີດສົງຄາມຂຶ້ນໃນຟ້າສະຫວັນ
ມີຄາເອັນກັບເທບບໍລິວານຂອງຕົນໄດ້ສູ້ລົບກັບພະຍານາກ
8 ພະຍານາກກັບບໍລິວານຂອງມັນກໍຕໍ່ສູ້ ໘ແຕ່ຝ່າຍພະຍານາກ
ບໍ່ອາດມີໄຊຊະນະໄດ້ ແລະພວກພະຍານາກຈຶ່ງບໍ່ມີບ່ອນຢູ່
9 ໃນສະຫວັນຕໍ່ໄປອີກ. ໙ພະຍານາກໃຫຍ່ຊຶ່ງເປັນງູແຕ່ດຶກດຳ
ບັນທີ່ເຂົາເອີ້ນວ່າ ‘ເດຍໂບໂລ’*, ແລະ ‘ຊາຕານ’, ຜູ້ຫຼອກ
ລວງມະນຸດທັງໂລກ, ມັນກໍຖືກຊັດຖິ້ມລົງເສຍ ພະຍານາກ
10 ກັບບໍລິວານຂອງມັນກໍຖືກຖິ້ມລົງເທິງແຜ່ນດິນໂລກ. ໑໐ແລະ
ຂ້າພະເຈົ້າໄດ້ຍິນສຽງດັງຂຶ້ນໃນສະຫວັນວ່າ, “ບັດນີ້ຄວາມ
ລອດພົ້ນ, ລິດເດດ, ແລະລາຊະອານາຈັກແຫ່ງພຣະເຈົ້າ
ຂອງ ເຮົາ ທັງຫຼາຍ ກັບ ທັງ ອຳນາດ ພຣະຄຣິດ ຂອງ ພຣະອົງ
ໄດ້ມາເຖິງແລ້ວ ເພາະວ່າຜູ້ທີ່ກ່າວໂທດພວກພີ່ນ້ອງຂອງ
ເຮົາຕໍ່ພຣະພັກພຣະເຈົ້າຂອງເຮົາທັງກາງເວັນແລະກາງຄືນ
11 ກໍໄດ້ຖືກຖິ້ມລົງເສຍແລ້ວ. ໑໑ເຂົາເຫຼົ່ານັ້ນໄດ້ຊະນະພະຍາ
ນາກດ້ວຍພຣະໂລຫິດຂອງພຣະເມສານ້ອຍ ແລະເພາະຄຳ

ພະຍານຂອງເຂົາເອງ ເພາະເຖິງແມ່ນວ່າເຂົາຈະຕາຍກໍບໍ່
12 ເສຍດາຍຊີວິດຂອງຕົນ. [໑໒]ເພາະເຫດນັ້ນແຫຼະ, ສະຫວັນກັບ
ບັນດາຜູ້ທີ່ຢູ່ໃນສະຫວັນຈົ່ງຊົມຊື່ນຍິນດີເຖີດ. ແຕ່ວິບັດຈະມີ
ແກ່ຜູ້ທີ່ຢູ່ໃນແຜ່ນດິນໂລກແລະນ້ຳທະເລ! ເພາະວ່າມານໄດ້
ລົງມາຫາເຈົ້າດ້ວຍຄວາມຄຽດແຄ້ນອັນໃຫຍ່ ເພາະມັນຮູ້ວ່າ
13 ເວລາຂອງມັນມີໜ້ອຍ". [໑໓]ເມື່ອພະຍານາກນັ້ນເຫັນວ່າຕົນ
ຖືກຖິ້ມລົງເທິງແຜ່ນດິນໂລກແລ້ວ ມັນກໍໄລ່ຕິດຕາມຍິງທີ່
14 ເກີດລູກຊາຍນັ້ນ. [໑໔]ແຕ່ພຣະເຈົ້າໄດ້ຊົງປະທານປີກນົກອິນຊີ
ໃຫຍ່ສອງປີກໃຫ້ແກ່ຍິງນັ້ນ ເພື່ອໃຫ້ນາງບິນໜີຈາກໜ້າງູນັ້ນ
ເຂົ້າໄປໃນປ່າ ເຖິງບ່ອນທີ່ນາງຈະໄດ້ຮັບການລ້ຽງດູໃນຊົ່ວ
15 ເວລາໜຶ່ງ, ສອງເວລາ, ກັບເຄິ່ງເວລາ. [໑໕]ງູນັ້ນໄດ້ພົ່ນນ້ຳອອກ
ຈາກປາກເໝືອນແມ່ນ້ຳ ໄຫຼຕາມຍິງນັ້ນເພື່ອຈະໃຫ້ພັດຍິງ
16 ນັ້ນໄປ. [໑໖]ແຕ່ແຜ່ນດິນໄດ້ຊ່ອຍຍິງນັ້ນໄວ້ ໂດຍໄດ້ຍະຊ່ອງ
17 ຮັບກືນເອົານ້ຳທີ່ພະຍານາກໄດ້ພົ່ນອອກມານັ້ນ. [໑໗]ຝ່າຍພະ-
ຍານາກກໍຄຽດແຄ້ນຍິງນັ້ນ ຈຶ່ງອອກໄປສູ້ຮົບກັບເຊື້ອສາຍ
ຂອງຍິງນັ້ນທີ່ເຫຼືອຢູ່ ຄືພວກທີ່ຖືຮັກສາຂໍ້ບັນຍັດຂອງພຣະ
ເຈົ້າ ແລະທີ່ຍຶດຖືຄຳພະຍານຝ່າຍພຣະເຢຊູຄຣິດ.

12:9 'ເດຍໂບໂລ' ເປັນພາສາກຣີກທີ່ແປວ່າ "ພະຍາມານ"

# ບົດທີ 13

1 [໑]ແລະຂ້າພະເຈົ້າໄດ້ຢືນຢູ່ທີ່ຫາດຊາຍທະເລ, ແລະໄດ້
ເຫັນສັດຮ້າຍໂຕໜຶ່ງຂຶ້ນມາຈາກທະເລ ມີສິບເຂົາເຈັດຫົວ
ທີ່ເຂົາທັງສິບມີມົງກຸດສິບອັນ ແລະທີ່ຫົວທັງເຈັດນັ້ນມີຊື່
2 ເປັນຄຳໝິ່ນປະໝາດ. [໒]ສັດຮ້າຍທີ່ຂ້າພະເຈົ້າໄດ້ເຫັນນັ້ນ
ຕົວເໝືອນເສືອດາວ, ຕີນເໝືອນຕີນໝີ, ແລະປາກເໝືອນ
ປາກສິງ ພະຍານາກໄດ້ໃຫ້ລິດເດດແລະບັນລັງກັບອຳນາດ





ຍັງເຫຼືອນັ້ນ ໄດ້ຖືກຂ້າດ້ວຍພຣະແສງທີ່ອອກມາຈາກພຣະ
ໂອດຂອງພຣະອົງ ຜູ້ຊົງປະທັບເທິງຫຼັງມ້ານັ້ນ ແລະນົກທັງ
ປວງກໍກິນຊີ້ນຂອງຄົນເຫຼົ່ານັ້ນຈົນອີ່ມ.

19:1 "ອາເລລູຢາ" ເປັນພາສາເຮັບເຣີທີ່ແປວ່າ "ຈົ່ງສັນລະເສີນພຣະຜູ້ເປັນເຈົ້າ"
19:10 "ເນື້ອຄວາມຂອງການປະກາດພຣະທຳກໍເປັນຄຳພະຍານຝ່າຍພຣະເຢຊູ" ຖ້າ
ແປຕາມພາສາຕົ້ນສະບັບຢ່າງໂດຍຕົງຈະອ່ານວ່າ "ເພາະວ່າຄຳພະຍານແຫ່ງ
ພຣະເຢຊູເປັນວິນຍານແຫ່ງຄຳທຳນວາຍ"
19:16 "ພຣະອູລູ" ເປັນລາຊາສັບທີ່ໝາຍຄວາມວ່າ "ຂາ"
19:16 ຂໍເຊີນເບິ່ງ 17:14

# ບົດທີ 20

1 [໑]ແລ້ວຂ້າພະເຈົ້າໄດ້ເຫັນເທວະດາຕົນໜຶ່ງລົງມາຈາກສະ-
ຫວັນ ເພິ່ນຖືລູກກະແຈຂອງເຫວເລິກທີ່ບໍ່ມີພື້ນ ແລະຖືໂສ້
2 ເສັ້ນໃຫຍ່. [໒]ເພິ່ນໄດ້ຈັບພະຍານາກຊຶ່ງເປັນງູແຕ່ດຶກດຳບັນ
ຄືພະຍາມານແລະຊາຕານ ແລະໄດ້ຜູກມັດມັນໄວ້ລະຫວ່າງ
3 ພັນປີ, [໓]ແລ້ວຖິ້ມມັນລົງໃນເຫວເລິກທີ່ບໍ່ມີພື້ນ ແລະລັ່ນກະ-
ແຈທັງຕີຕາປະທັບໃສ່ ເພື່ອບໍ່ໃຫ້ມັນຫຼອກລວງບັນດາປະຊາ
ຊາດອີກຕໍ່ໄປ ຈົນກວ່າພັນປີນັ້ນລ່ວງໄປແລ້ວ ພາຍຫຼັງນັ້ນ
4 ຈຳເປັນຕ້ອງປ່ອຍມັນອອກໄປຊົ່ວຄາວ. [໔]ແລ້ວຂ້າພະເຈົ້າໄດ້
ເຫັນບັນລັງຫຼາຍອັນ ແລະຜູ້ທີ່ນັ່ງເທິງບັນລັງນັ້ນເປັນຜູ້ທີ່ໄດ້
ຮັບພຣະລາຊະທານອຳນາດພິພາກສາ ແລະຂ້າພະເຈົ້າຍັງ
ໄດ້ເຫັນດວງວິນຍານຂອງຄົນທັງປວງທີ່ຖືກຕັດຄໍ ເພາະເປັນ
ພະຍານຝ່າຍພຣະເຢຊູ ແລະເພາະພຣະທຳຂອງພຣະເຈົ້າ
ຄືຜູ້ທີ່ບໍ່ໄດ້ບູຊາສັດຮ້າຍຫຼືຮູບຂອງມັນ ແລະບໍ່ໄດ້ຮັບເຄື່ອງ-
ໝາຍຂອງມັນຕິດໄວ້ທີ່ໜ້າຜາກຫຼືມືຂອງຕົນ ຄົນເຫຼົ່ານັ້ນກັບ
ຄືນມີຊີວິດໃໝ່ ແລະໄດ້ຄຸ້ມຄອງຮ່ວມກັບພຣະຄຣິດໃນລະ-
5 ຫວ່າງພັນປີ. [໕]ນອກຈາກຄົນເຫຼົ່ານີ້ຄົນອື່ນໆທີ່ຕາຍແລ້ວ
ບໍ່ໄດ້ກັບຄືນມີຊີວິດອີກ ຈົນກວ່າພັນປີນັ້ນລ່ວງໄປແລ້ວ ນີ້

ອັນ ພຣະອົງມີພຣະນາມຈາລຶກໄວ້ຊຶ່ງບໍ່ມີໃຜຮູ້ຈັກເວັ້ນໄວ້
13 ແຕ່ພຣະອົງເອງ. ໑໓ເສື້ອຄຸມທີ່ພຣະອົງຊົງຖືນັ້ນກໍຈຸ່ມແລ້ວ
ໃນເລືອດ: ແລະພຣະນາມຂອງພຣະອົງເອີ້ນວ່າ "ພຣະທຳ
14 ຂອງພຣະເຈົ້າ." ໑໔ຝູງກອງທັບໃນສະຫວັນນຸ່ງຫົ່ມຜ້າປ່ານ
ເນື້ອລະອຽດຂາວບໍລິສຸດ ຂີ່ມ້າຂາວແຫ່ຕາມສະເດັດໄປ.
15 ໑໕ມີພຣະແສງດວງຄົມອອກມາຈາກພຣະໂອດຂອງພຣະອົງ
ເພື່ອພຣະອົງຈະຊົງຟັນບັນດາປະຊາຊາດດ້ວຍພຣະແສງນັ້ນ
ພຣະອົງນີ້ແຫຼະ, ຈະຊົງຄຸ້ມຄອງເຂົາດ້ວຍຄ້ອນເຫຼັກ ພຣະອົງ
ຈະຊົງຢຽບອ່າງຢຽບໝາກອະງຸ່ນແຫ່ງພຣະພິໂລດອັນແຮງ
16 ກ້າຂອງພຣະເຈົ້າ ຜູ້ຊົງລິດທານຸພາບສູງສຸດ. ໑໖ພຣະອົງຊົງມີ
ພຣະນາມຈາລຶກໄວ້ທີ່ເຄື່ອງທົງ ແລະທີ່ພຣະອຸລຸ*ຂອງພຣະ
ອົງວ່າ, "**ພຣະມະຫາກະສັດແຫ່ງກະສັດທັງຫຼາຍ**" ແລະ "**ເຈົ້າ
17 ນາຍ ແຫ່ງ ເຈົ້ານາຍ ທັງຫຼາຍ***." ໑໗ແລ້ວຂ້າພະເຈົ້າໄດ້ເຫັນ
ເທວະດາຕົນໜຶ່ງຢືນຢູ່ໃນດວງອາທິດ ເພິ່ນປະກາດດ້ວຍສຽງ
ດັງແກ່ນົກທັງປວງທີ່ບິນໄປມາໃນທ້ອງຟ້າວ່າ, "ຈົ່ງມາໂຮມ
18 ກັນສຳລັບການກິນລ້ຽງຂອງພຣະເຈົ້າອົງຍິ່ງໃຫຍ່. ໑໘ເພື່ອຈະ
ໄດ້ກິນຊີ້ນກະສັດ, ຊີ້ນນາຍທະຫານ, ຊີ້ນຊາຍສະກັນ, ຊີ້ນ
ມ້າກັບຊີ້ນຄົນທີ່ຂີ່ມ້ານັ້ນ, ແລະຊີ້ນປະຊາຊົນ ທັງເສລີແລະ
19 ຂ້ອຍຂ້າ ທັງຜູ້ນ້ອຍແລະຜູ້ໃຫຍ່." ໑໙ແລະຂ້າພະເຈົ້າໄດ້ເຫັນ
ສັດຮ້າຍແລະກະສັດທັງຫຼາຍຂອງແຜ່ນດິນໂລກ ພ້ອມທັງ
ກອງທັບຂອງກະສັດເຫຼົ່ານັ້ນມາໂຮມກັນ ເພື່ອຮົບເສິກຕໍ່ສູ້
ພຣະອົງຜູ້ປະທັບເທິງຫຼັງມ້ານັ້ນ ແລະຕໍ່ສູ້ກອງທັບຂອງພຣະ
20 ອົງ. ໒໐ສັດຮ້າຍນັ້ນໄດ້ຖືກຈັບພ້ອມດ້ວຍຄົນທີ່ປອມຕົວເປັນ
ຜູ້ປະກາດພຣະທຳ, ທີ່ໄດ້ເຮັດໝາຍສຳຄັນຕໍ່ໜ້າສັດຮ້າຍນັ້ນ
ແລະໃຊ້ໝາຍສຳຄັນນັ້ນຫຼອກລວງຄົນທັງຫຼາຍທີ່ຮັບເຄື່ອງ-
ໝາຍຂອງສັດຮ້າຍແລະບູຊາຮູບຂອງມັນ ເຂົາທັງສອງໄດ້
21 ຖືກຖິ້ມລົງທັງເປັນໃນບຶງໄຟທີ່ໄໝ້ຢູ່ດ້ວຍມາດ. ໒໑ສ່ວນຄົນທີ່





3 ອັນໃຫຍ່ຫຼວງຂອງຕົນແກ່ສັດຮ້າຍນັ້ນ. ໓ຫົວຂອງສັດຮ້າຍ
ນັ້ນຫົວໜຶ່ງປາກົດເໝືອນກັບວ່າຖືກຟັນເຖິງຕາຍແລ້ວ ແຕ່
ບາດແຜອັນໜ້າຈະຕາຍນັ້ນໄດ້ຖືກປົວໃຫ້ດີແລ້ວ: ຄົນທັງ
ໂລກໄດ້ຕິດຕາມສັດຮ້າຍນັ້ນໄປດ້ວຍຄວາມອັດສະຈັນໃຈ.
4 ໔ເຂົາບູຊາພະຍານາກເພາະມັນໄດ້ໃຫ້ອຳນາດແກ່ສັດຮ້າຍ
ນັ້ນ ແລະເຂົາໄດ້ບູຊາສັດຮ້າຍນັ້ນໂດຍກ່າວວ່າ, "ໃຜຈະ
ປຽບປານກັບສັດນີ້ໄດ້? ແລະໃຜຈະສາມາດສູ້ຮົບກັບສັດນີ້
5 ໄດ້?" ໕ພຣະເຈົ້າຊົງອະນຸຍາດໃຫ້ສັດນັ້ນມີປາກເວົ້າຄຳຈອງ-
ຫອງແລະໝິ່ນປະໝາດ ແລະຊົງຍອມໃຫ້ມັນມີອຳນາດເຮັດ
6 ຢ່າງນັ້ນຕະຫຼອດສີ່ສິບສອງເດືອນ. ໖ມັນຕັ້ງຕົ້ນກ່າວຄຳໝິ່ນ-
ປະໝາດຕໍ່ພຣະເຈົ້າ, ຕໍ່ພຣະນາມຂອງພຣະອົງ, ຕໍ່ສະຖານທີ່
7 ສະຖິດຂອງພຣະອົງ, ແລະຕໍ່ຜູ້ທີ່ຢູ່ໃນສະຫວັນ. ໗ແລະໄດ້
ຊົງຍອມໃຫ້ມັນສູ້ຮົບກັບບັນດາໄພ່ພົນຂອງພຣະເຈົ້າແລະ
ຊະນະເຂົາ ຍັງຊົງປະທານໃຫ້ມັນມີອຳນາດເໜືອຊົນທຸກຕະ-
8 ກຸນ, ທຸກຊາດ, ທຸກພາສາ, ແລະທຸກປະເທດ. ໘ບັນດາຄົນທັງ
ປວງທີ່ຢູ່ໃນໂລກຈະບູຊາສັດຮ້າຍນັ້ນ ຄືທຸກຄົນທີ່ບໍ່ມີຊື່ຈົດ
ໄວ້ໃນທະບຽນແຫ່ງຊີວິດຂອງພຣະເມສານ້ອຍຜູ້ທີ່ຊົງຖືກຂ້າ
9, 10 ເສຍ ຕັ້ງແຕ່ຊົງສ້າງໂລກ. ໙ຖ້າຜູ້ໃດມີຫູ ຈົ່ງຟັງເອົາເຖີ້ນ. ໑໐"*ຜູ້
ໃດຈັບເອົາຄົນໄປເປັນຊະເລີຍ ຜູ້ນັ້ນກໍຈະຕ້ອງເປັນຊະເລີຍ
ຜູ້ໃດຂ້າດ້ວຍດາບ ຜູ້ນັ້ນກໍຈະຕ້ອງຖືກຂ້າດ້ວຍດາບ.*" ອັນນີ້
ເປັນຄວາມອົດທົນແລະຄວາມເຊື່ອທີ່ພວກໄພ່ພົນຂອງພຣະ
11 ເຈົ້າຈະຕ້ອງມີ. ໑໑ແລ້ວຂ້າພະເຈົ້າເຫັນສັດຮ້າຍໂຕໜຶ່ງຂຶ້ນ
ມາຈາກພື້ນດິນ ມີສອງເຂົາເໝືອນແກະນ້ອຍແລະກ່າວຄຳ
12 ເໝືອນພະຍານາກ. ໑໒ມັນໃຊ້ອຳນາດຂອງສັດຮ້າຍໂຕເດີມ
ນັ້ນຢ່າງຄົບຖ້ວນ ແລະຕໍ່ໜ້າມັນ ມັນເຮັດໃຫ້ໂລກແລະຄົນ
ທີ່ຢູ່ໃນໂລກບູຊາສັດຮ້າຍໂຕເດີມນັ້ນຊຶ່ງບາດແຜອັນເປັນ
13 ໜ້າຈະຕາຍນັ້ນໄດ້ຖືກປົວໃຫ້ດີແລ້ວ. ໑໓ສັດຮ້າຍນີ້ສະແດງ

ໝາຍສຳຄັນອັນໃຫຍ່ ຈົນເຮັດໃຫ້ໄຟຕົກຈາກຟ້າລົງສູ່ແຜ່ນ-
14 ດິນໂລກຕໍ່ໜ້າຕໍ່ຕາມະນຸດ, [໑໔]ແລະມັນຫຼອກລວງຄົນທັງຫຼາຍ
ທີ່ຢູ່ໃນໂລກດ້ວຍໝາຍສຳຄັນ ທີ່ຊົງຍອມໃຫ້ມັນເຮັດຕໍ່ໜ້າ
ສັດຮ້າຍໂຕເດີມນັ້ນ ແລະມັນສັ່ງໃຫ້ເຂົາສ້າງຮູບສັດຮ້າຍ
15 ທີ່ຖືກຟັນດ້ວຍດາບແຕ່ຍັງບໍ່ຕາຍນັ້ນ. [໑໕]ຊົງຍອມໃຫ້ມັນມີ
ອຳນາດທີ່ຈະໃຫ້ລົມຫາຍໃຈ*ແກ່ຮູບສັດນັ້ນ ເພື່ອຮູບສັດນັ້ນ
ຈະປາກໄດ້ ແລະໃຫ້ມີອຳນາດເຮັດໃຫ້ບັນດາຄົນທີ່ບໍ່ຍອມ
16 ບູຊາຮູບສັດຮ້າຍນັ້ນຖືກປະຫານຊີວິດ. [໑໖]ມັນຍັງເຮັດໃຫ້ຄົນ
ທັງປວງ ທັງນ້ອຍແລະໃຫຍ່, ທັງຮັ່ງມີແລະຍາກຈົນ, ທັງເສລີ
ແລະຂ້ອຍຂ້າ ໄດ້ຮັບເຄື່ອງໝາຍໄວ້ທີ່ມືຂວາຫຼືທີ່ໜ້າຜາກ
17 ຂອງເຂົາ, [໑໗]ເພື່ອບໍ່ໃຫ້ຜູ້ໃດຊື້ຫຼືຂາຍໄດ້ ເວັ້ນໄວ້ແຕ່ຜູ້ທີ່ມີ
ເຄື່ອງໝາຍນັ້ນ ຊຶ່ງເປັນຊື່ຂອງສັດຮ້າຍຫຼືເລກທີ່ໝາຍເຖິງຊື່
18 ມັນນັ້ນ. [໑໘]ໃນເລື່ອງນີ້ຕ້ອງໃຊ້ສະຕິປັນຍາຄວາມຮູ້. ຖ້າຜູ້ໃດ
ມີຄວາມເຂົ້າໃຈກໍໃຫ້ຄິດເລກຂອງສັດນັ້ນ: ເພາະເປັນເລກ
ຂອງບຸກຄົນຜູ້ໜຶ່ງ ເລກຂອງມັນຄືຫົກຮ້ອຍຫົກສິບຫົກ.

13:15 ຕາມພາສາຕົ້ນສະບັບ "ລົມຫາຍໃຈ" (πνεῦμα) ກໍແປອອກວ່າ "ຊີວິດ" ກັບ "ວິນຍານ" ຄືກັນ. ຂໍເຊີນເບິ່ງພຣະທຳ ໂຢຮັນ 3:8

## ບົດທີ 14

1 [໑]ແລ້ວຂ້າພະເຈົ້າໄດ້ເຫັນແລະເບິ່ງແມ, ພຣະເມສານ້ອຍຊົງ
ຢືນຢູ່ທີ່ພູຊີໂອນ ແລະຜູ້ທີ່ຢູ່ກັບພຣະອົງມີຈຳນວນແສນສີ່
ໝື່ນສີ່ພັນຄົນ ຊຶ່ງເປັນຜູ້ທີ່ມີພຣະນາມຂອງພຣະບິດາຂອງ
2 ພຣະອົງຂຽນໄວ້ທີ່ໜ້າຜາກຂອງເຂົາ. [໒]ຂ້າພະເຈົ້າໄດ້ຍິນສຽງ
ດັງຈາກສະຫວັນເໝືອນສຽງນ້ຳອັນຫຼວງຫຼາຍ ແລະເໝືອນ
ສຽງຟ້າຮ້ອງດັງສະນັ່ນ ສຽງທີ່ຂ້າພະເຈົ້າໄດ້ຍິນນັ້ນກໍເໝືອນ
3 ສຽງນັກດີດພິນກຳລັງດີດພິນຢູ່. [໓]ຄົນເຫຼົ່ານັ້ນຮ້ອງເພງບົດ





ພຣະອົງ ທີ່ຢຳເກງພຣະອົງ ທັງຜູ້ໃຫຍ່ແລະຜູ້ນ້ອຍ ຈົ່ງຖວາຍ
6 ສັນລະເສີນແດ່ພຣະເຈົ້າຂອງເຮົາທັງຫຼາຍ. [໖]ແລ້ວຂ້າພະ-
ເຈົ້າໄດ້ຍິນເໝືອນສຽງຄົນຈຳນວນຫຼວງຫຼາຍ, ເໝືອນສຽງ
ນ້ຳຫຼາຍ ແລະເໝືອນຟ້າຮ້ອງສຽງແຮງກ້າວ່າ, "*ອາເລລູຢາ*
*ເພາະວ່າອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຮົາ ຜູ້ຊົງ*
7 *ລິດທານຸພາບສູງສຸດໄດ້ຊົງຂຶ້ນສະເຫວີຍລາດແລ້ວ. [໗]ໃຫ້*
*ເຮົາທັງຫຼາຍຊົ່ມຊື່ນແລະປິຕິຍິນດີ ພາກັນຖວາຍພຣະກຽດ*
*ແດ່ພຣະອົງ ເພາະເຖິງເວລາມຸງຄຸນສົມຣົດຂອງພຣະເມສາ*
*ນ້ອຍແລ້ວແລະເຈົ້າສາວຂອງພຣະອົງໄດ້ຕຽມພ້ອມແລ້ວ.*"
8 [໘]ແລະຊົງໂຜດໃຫ້ເຈົ້າສາວນັ້ນນຸ່ງຫົ່ມຜ້າປ່ານເນື້ອລະອຽດ
ເສາະໃສແລະບໍລິສຸດ ເພາະຜ້າປ່ານເນື້ອດີນັ້ນ ໄດ້ແກ່ຄວາມ
9 ຊອບທຳແຫ່ງພວກໄພ່ພົນຂອງພຣະເຈົ້າ. [໙]ເທວະດາຕົນນັ້ນ
ໄດ້ບອກຂ້າພະເຈົ້າວ່າ, "ຈົ່ງຂຽນໄວ້ວ່າ 'ຄວາມສຸກມີແກ່
ຄົນທັງຫຼາຍທີ່ໄດ້ຮັບເຊີນມາໃນງານລ້ຽງມຸງຄຸນສົມຣົດຂອງ
ພຣະເມສານ້ອຍນັ້ນ'" ແລະເພິ່ນໄດ້ບອກຂ້າພະເຈົ້າວ່າ,
10 "ຖ້ອຍຄຳເຫຼົ່ານີ້ເປັນພຣະທຳທ່ຽງແທ້ຂອງພຣະເຈົ້າ." [໑໐]ແລ້ວ
ຂ້າພະເຈົ້າໄດ້ກົ້ມຕົວລົງແທບຕີນຂອງເທວະດານັ້ນ ເພື່ອຈະ
ຂາບໄຫວ້ເພິ່ນ ແຕ່ເພິ່ນໄດ້ກ່າວກັບຂ້າພະເຈົ້າວ່າ, "ລະວັງ
ຢ່າເຮັດຢ່າງນັ້ນ ເຮົາເປັນເພື່ອນຂ້ອຍໃຊ້ຮ່ວມກັນກັບທ່ານ
ແລະຮ່ວມກັບພີ່ນ້ອງຂອງທ່ານທີ່ຍຶດຖືຄຳພະຍານຝ່າຍພຣະ
ເຢຊູ: ຈົ່ງນະມັດສະການພຣະເຈົ້າ: ເພາະວ່າເນື້ອຄວາມຂອງ
ການປະກາດພຣະທຳກໍເປັນຄຳພະຍານຝ່າຍພຣະເຢຊູ*."
11 [໑໑]ແລ້ວຂ້າພະເຈົ້າໄດ້ເຫັນສະຫວັນໄຂອອກ ແລະເບິ່ງແມ, ມີ
ມ້າຂາວໂຕໜຶ່ງ ພຣະອົງຜູ້ຊົງປະທັບເທິງຫຼັງມ້ານັ້ນຊົງພຣະ
ນາມວ່າ "ສັດຊື່" ແລະ "ທ່ຽງທຳ" ພຣະອົງຊົງພິພາກສາແລະ
12 ເຮັດເສິກດ້ວຍຄວາມຊອບທຳ. [໑໒]ພຣະເນດຂອງພຣະອົງ
ເໝືອນແປວໄຟ ເທິງພຣະສຽນຂອງພຣະອົງມີມົງກຸດຫຼາຍ

*ຊ່າງຢ່າງໃດຈັກຄົນໃນເຈົ້າຕໍ່ໄປອີກ ແລະສຽງໂມ້ແປ້ງຈະບໍ່*
23 *ໄດ້ຍິນໃນເຈົ້າຕໍ່ໄປອີກຈັກເທື່ອ.* [໒໓]*ຈະບໍ່ມີແສງທຽນສ່ອງສະ-*
*ຫວ່າງໃນເຈົ້າຕໍ່ໄປອີກ ຈະບໍ່ມີໃຜໄດ້ຍິນສຽງເຈົ້າບ່າວເຈົ້າ*
*ສາວໃນເຈົ້າຕໍ່ໄປຈັກເທື່ອ ເພາະວ່າບັນດາພໍ່ຄ້າຂອງເຈົ້າໄດ້*
*ເປັນເຈົ້ານາຍແຫ່ງແຜ່ນດິນໂລກ ແລະບັນດາປະຊາຊາດໄດ້*
24 *ຖືກຫຼອກລວງດ້ວຍເວດມົນຄາຖາຂອງເຈົ້າ.* [໒໔]*ໃນນະຄອນ*
*ນັ້ນເຂົາໄດ້ພົບເລືອດຂອງຜູ້ປະກາດພຣະທຳແລະພວກໄພ່*
*ພົນຂອງພຣະເຈົ້າ ກັບເລືອດຂອງບັນດາຄົນທີ່ຖືກຂ້າເທິງ*
*ແຜ່ນດິນໂລກນັ້ນ.”*

# ບົດທີ 19

1 [໑]ຫຼັງຈາກເຫດການເຫຼົ່ານີ້ ຂ້າພະເຈົ້າໄດ້ຍິນສຽງດັງຂອງຝູງ
ຄົນຈຳນວນຫຼາຍໃນສະຫວັນ ກຳລັງຮ້ອງວ່າ, “ອາເລລູຢາ*;
ຄວາມພົ້ນ, ສະຫງ່າລາສີ, ພຣະກຽດ, ແລະລິດເດດຈົ່ງມີແດ່
2 ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຮົາທັງຫຼາຍ: [໒]ເພາະວ່າ
ການພິພາກສາຂອງພຣະອົງທ່ຽງຈິງແລະຍຸຕິທຳ ພຣະອົງໄດ້
ຊົງພິພາກສາລົງໂທດຍິງໂສເພນີຄົນສຳຄັນນັ້ນ ທີ່ໄດ້ເຮັດໃຫ້
ແຜ່ນດິນໂລກຊົ່ວຮ້າຍໄປດ້ວຍການລ່ວງປະເວນີຜິດຊາຍຍິງ
ຂອງຕົນ ເພື່ອເປັນການແກ້ແຄ້ນຍິງນັ້ນຍ້ອນເລືອດຂອງບັນ-
3 ດາຂ້ອຍໃຊ້ຂອງພຣະອົງ.” [໓]ຄົນເຫຼົ່ານັ້ນຮ້ອງຂຶ້ນເປັນເທື່ອ
ທີ່ສອງວ່າ,“ອາເລລູຢາ” ແລະຄວັນໄຟທີ່ໄໝ້ນະຄອນນັ້ນກໍ
4 ພຸ່ງຂຶ້ນຕະຫຼອດໄປເປັນນິດ. [໔]ແລະພວກຜູ້ອາວຸໂສທັງຊາວ
ສີ່ທ່ານກັບສັດທັງສີ່ນັ້ນ ກໍໄດ້ຂາບລົງນະມັດສະການພຣະ
ເຈົ້າ ຜູ້ຊົງປະທັບເທິງພຣະລາຊະບັນລັງນັ້ນ ແລະຮ້ອງຂຶ້ນ
5 ວ່າ, “ອາແມນ, ອາເລລູຢາ.” [໕]ແລະມີສຽງດັງອອກມາຈາກ
ພຣະລາຊະບັນລັງວ່າ, “ເຈົ້າທັງຫຼາຍ ຜູ້ເປັນຂ້ອຍຂ້າຂອງ





ໃໝ່ຕໍ່ໜ້າພຣະລາຊະບັນລັງ, ຕໍ່ໜ້າສັດທັງສີ່, ແລະຕໍ່ໜ້າ
ພວກອາວຸໂສ ບໍ່ມີຜູ້ໃດສາມາດຮຽນຮູ້ເພງບົດນັ້ນໄດ້ ເວັ້ນ
ແຕ່ຄົນແສນສີ່ໝື່ນສີ່ພັນນັ້ນທີ່ໄດ້ຊົງໄຖ່ໄວ້ແລ້ວຈາກແຜ່ນ-
4 ດິນໂລກ. [໔]ຄົນເຫຼົ່ານີ້ແຫຼະ, ເປັນຜູ້ທີ່ບໍ່ມີຄວາມຊົ່ວມົວໝອງ
ກັບຜູ້ຍິງ ເພາະເຂົາເປັນພວກພົມມະຈາລີ. ພຣະເມສານ້ອຍ
ສະເດັດໄປທາງໃດແມ່ນຄົນເຫຼົ່ານີ້ທີ່ຕາມສະເດັດ. ຄົນເຫຼົ່າ
ນີ້ແຫຼະ, ເປັນພວກທີ່ຊົງໄຖ່ໄວ້ຈາກມວນມະນຸດ ເພື່ອເປັນ
ຜົນ ທຳ ອິດ ຖວາຍ ແດ່ ພຣະເຈົ້າ ແລະ ແດ່ ພຣະເມສາ ນ້ອຍ.
5 [໕]ແລະຈະຫາຄວາມຕົວະໃນປາກຂອງເຂົາບໍ່ພົບ: ເພາະເຂົາ
ບໍ່ ມີ ຈຸດ ດ່າງ ພ້ອຍ ແລ້ວ ຕໍ່ໜ້າ ພຣະລາຊະບັນລັງ ຂອງ ພຣະ
6 ເຈົ້າ. [໖]ແລ້ວຂ້າພະເຈົ້າໄດ້ເຫັນເທວະດາອີກຕົນໜຶ່ງບິນໄປ
ໃນທ້ອງຟ້າ ມີຂ່າວປະເສີດອັນຕະຫຼອດໄປເປັນນິດເພື່ອນຳ-
ໄປປະກາດແກ່ຊາວໂລກທັງປວງ ທຸກປະເທດ, ທຸກຕະກຸນ,
7 ທຸກພາສາ, ແລະທຸກຊາດ, [໗]ເທວະດາຕົນນັ້ນໄດ້ຮ້ອງສຽງດັງ
ຂຶ້ນວ່າ, “ຈົ່ງຢຳເກງພຣະເຈົ້າແລະຖວາຍພຣະກຽດແດ່ພຣະ
ອົງ ເພາະເຖິງເວລາທີ່ພຣະອົງຈະຊົງພິພາກສາແລ້ວ ແລະ
ຈົ່ງນະມັດສະການພຣະອົງຜູ້ຊົງສ້າງຟ້າສະຫວັນ, ແຜ່ນດິນ
8 ໂລກ, ນ້ຳທະເລ, ກັບນ້ຳພຸທັງຫຼາຍ. [໘]ແລະເທວະດາອີກຕົນ
ໜຶ່ງເປັນຕົນທີສອງໄດ້ຕາມໄປຮ້ອງຂຶ້ນວ່າ, “ບາບີໂລນມະ-
ຫານະຄອນນັ້ນຫຼົ້ມຈົມແລ້ວ, ຫຼົ້ມຈົມເສຍແລ້ວ ຄືນະຄອນ
ທີ່ເຮັດໃຫ້ປະຊາຊາດທັງປວງດື່ມເຫຼົ້າແວງອັນຄຽດຮ້າຍຂອງ
9 ນາງໃນການລ່ວງປະເວນີ.” [໙]ມີເທວະດາອີກຕົນໜຶ່ງເປັນຕົນ
ທີສາມ ຕາມໄປຮ້ອງສຽງດັງຂຶ້ນວ່າ, “ຖ້າຜູ້ໃດບູຊາສັດຮ້າຍ
ແລະຮູບຂອງມັນ ແລະຮັບເຄື່ອງໝາຍນັ້ນໄວ້ທີ່ໜ້າຜາກຫຼືທີ່
10 ມື [໑໐]ຜູ້ນັ້ນແຫຼະ, ຈະຕ້ອງດື່ມເຫຼົ້າແວງແຫ່ງພຣະພິໂລດຂອງ
ພຣະເຈົ້າ ທີ່ຊົງຖອກລົງໃນຈອກແຫ່ງພຣະພິໂລດນັ້ນໂດຍ
ບໍ່ປົນກັບສິ່ງໃດ ຜູ້ນັ້ນຈະຕ້ອງຖືກທໍລະມານໃນໄຟກັບມາດ

ຕໍ່ໜ້າຝູງເທວະດາບໍລິສຸດ ແລະຕໍ່ພຣະພັກພຣະເມສານ້ອຍ.
11 ໑໑ຄວັນ ແຫ່ງການ ທໍລະມານ ຂອງ ເຂົາກໍພຸ່ງຂຶ້ນ ຕະຫຼອດ ໄປ
ເປັນນິດ ຄົນທັງຫຼາຍທີ່ບູຊາສັດຮ້າຍແລະຮູບຂອງມັນ ກັບ
ຜູ້ທີ່ຮັບ ເຄື່ອງໝາຍຊື່ຂອງມັນນັ້ນ ຈະບໍ່ມີເວລາພັກຜ່ອນທັງ
12 ກາງເວັນແລະກາງຄືນ.” ໑໒ໃນເລື່ອງນີ້ພວກໄພ່ພົນຂອງພຣະ
ເຈົ້າ ຄືຜູ້ທີ່ຖືຮັກສາຂໍ້ບັນຍັດຂອງພຣະເຈົ້າ ແລະຄວາມ
13 ເຊື່ອຝ່າຍພຣະເຢຊູ ກໍຕ້ອງໃຊ້ຄວາມພຽນອົດທົນ. ໑໓ແລະ
ຂ້າພະເຈົ້າ ໄດ້ ຍິນ ພຣະສຸລະສຽງ ຈາກ ສະຫວັນ ຊົງ ສັ່ງ ວ່າ,
“ຈົ່ງຂຽນໄວ້ວ່າ ‘ຄົນທັງຫຼາຍທີ່ຕາຍໃນອົງພຣະຜູ້ເປັນເຈົ້າ
ຕັ້ງແຕ່ນີ້ໄປກໍເປັນສຸກ’” ແລະພຣະວິນຍານຊົງຢືນຢັນວ່າ,
“ຈິງຢູ່ແລ້ວ ເພື່ອເຂົາຈະໄດ້ພັກຜ່ອນຈາກການເໜື່ອຍຍາກ
ຂອງຕົນເພາະວ່າການງານທີ່ເຂົາໄດ້ເຮັດນັ້ນກໍຕິດຕາມເຂົາ
14 ໄປ.” ໑໔ຂ້າພະເຈົ້າໄດ້ເຫັນ ແລະເບິ່ງແມ, ມີເມກຂາວ ແລະ
ມີຜູ້ໜຶ່ງປະທັບເທິງເມກນັ້ນເໝືອນກັບບຸດມະນຸດ ພຣະສຽນ
15 ສວມມົງກຸດທອງຄໍາ ແລະພຣະຫັດຊົງຖືກ່ຽວດວງຄົມ. ໑໕ມີ
ເທວະດາອີກຕົນໜຶ່ງອອກມາຈາກພຣະວິຫານ ຮ້ອງສຽງດັງ
ຂຶ້ນ ທູນພຣະອົງຜູ້ປະທັບເທິງເມກນັ້ນວ່າ, “ຈົ່ງໃຊ້ກ່ຽວຂອງ
ພຣະອົງກ່ຽວໄປເຖີ້ນ ເພາະເຖິງເວລາກ່ຽວແລ້ວ ດ້ວຍວ່າ
16 ຜົນທີ່ຈະຕ້ອງເກັບກ່ຽວໃນແຜ່ນດິນໂລກກໍສຸກແລ້ວ.” ໑໖ພຣະ
ອົງຜູ້ຊົງປະທັບເທິງເມກນັ້ນໄດ້ຊົງໃຊ້ກ່ຽວນັ້ນເທິງແຜ່ນດິນ
17 ໂລກ ແຜ່ນດິນໂລກຈຶ່ງໄດ້ຖືກກ່ຽວແລ້ວ. ໑໗ມີເທວະດາອີກ
ຕົນໜຶ່ງອອກມາຈາກພຣະວິຫານໃນສະຫວັນ ຖືກ່ຽວດວງ
18 ຄົມເໝືອນກັນ. ໑໘ແລະມີເທວະດາອີກຕົນໜຶ່ງຜູ້ມີອໍານາດ
ເໜືອໄຟ ໄດ້ອອກມາຈາກແທ່ນບູຊາຮ້ອງບອກຜູ້ຖືກ່ຽວດວງ
ຄົມດ້ວຍສຽງດັງວ່າ, “ຈົ່ງໃຊ້ກ່ຽວດວງຄົມຂອງທ່ານກ່ຽວພວງ
ໝາກອະງຸ່ນແຫ່ງແຜ່ນດິນໂລກ ເພາະໝາກອະງຸ່ນນັ້ນສຸກ
19 ແລ້ວ.” ໑໙ເທວະດາຕົນນັ້ນຈຶ່ງໃຊ້ກ່ຽວຂອງຕົນໄປເທິງແຜ່ນ-





*ເຈົ້າແລ້ວ ສິ່ງສາລະພັດອັນປານິດວິເສດແລະງົດງາມເຫຼື້ອມ*
*ໃສກໍສູນເສຍໄປຈາກເຈົ້າແລ້ວ ເຈົ້າຈະບໍ່ໄດ້ພົບສິ່ງເຫຼົ່ານີ້*
15 *ອີກຈັກເທື່ອ.*” ໑໕ບັນດາພໍ່ຄ້າທີ່ຂາຍສິ່ງຂອງເຫຼົ່ານີ້ ຈົນເປັນ
ຄົນຮັ່ງມີເພາະນະຄອນນັ້ນ ຈະຢືນຢູ່ຫ່າງໄກ ເພາະຢ້ານໄພ
ແຫ່ງການທໍລະມານຂອງມັນ ເຂົາຈະຮ້ອງໄຫ້ແລະໂສກເສົ້າ
16 ດ້ວຍສຽງດັງ ໑໖ວ່າ, “*ວິບັດ, ວິບັດແລ້ວ ມະຫານະຄອນນັ້ນ ທີ່*
*ເຄີຍນຸ່ງຫົ່ມຜ້າປ່ານເນື້ອລະອຽດ, ຜ້າສີມ່ວງອ່ອນ, ຜ້າສີແດງ*
*ເຂັ້ມ, ທີ່ເຄີຍປະດັບຕົວດ້ວຍຄໍາ, ດ້ວຍເພັດພອຍຕ່າງໆ ແລະ*
17 *ໄຂ່ມຸກນັ້ນ.* ໑໗*ພຽງແຕ່ໃນຊົ່ວໂມງດຽວຊັບສົມບັດເຫຼົ່ານັ້ນ*
*ໄດ້ຖືກທໍາລາຍເສຍໄປໝົດ.*” ນາຍສະເພົາທຸກຄົນແລະຄົນ
ໂດຍສານ, ບັນດາລູກເຮືອແລະຄົນທັງປວງທີ່ມີອາຊີບທາງ
18 ທະເລກໍຢືນຢູ່ຫ່າງໄກ. ໑໘ເມື່ອຄົນເຫຼົ່ານັ້ນໄດ້ເຫັນຄວັນໄຟທີ່
ໄໝ້ນະຄອນນັ້ນກໍຮ້ອງວ່າ, “ນະຄອນໃດໜໍ ຈະເປັນເໝືອນ
19 ມະຫານະຄອນນີ້?” ໑໙ເຂົາໄດ້ເອົາຂີ້ຝຸ່ນດິນໃສ່ຫົວຂອງຕົນ
ພ້ອມຮ້ອງໄຫ້ແລະໂສກເສົ້າເອີ່ຍຂຶ້ນວ່າ, “*ວິບັດ, ວິບັດແລ້ວ*
*ມະຫານະຄອນນີ້ ຊຶ່ງໄດ້ເຮັດໃຫ້ຄົນທັງປວງທີ່ມີສະເພົາ*
*ເດີນທະເລເປັນຄົນຮັ່ງມີດ້ວຍຊັບສົມບັດຂອງມັນ ພາຍໃນ*
20 *ຊົ່ວໂມງດຽວກໍຖືກທໍາລາຍເສຍໄປໝົດ.*” ໒໐“*ໂອ ຟ້າສະຫວັນ*
*ແລະບັນດາອັກຄະສາວົກທີ່ບໍລິສຸດ ແລະຜູ້ປະກາດພຣະທໍາ*
*ທັງຫຼາຍເອີຍ ຈົ່ງຊົມຊື່ນຍິນດີເພາະນະຄອນນັ້ນ ດ້ວຍວ່າ*
*ພຣະເຈົ້າ ໄດ້ ຊົງ ພິພາກສາ ລົງໂທດ ນະຄອນ ນັ້ນ ເພື່ອ ເປັນ*
21 *ການແກ້ແຄ້ນໃຫ້ທ່ານທັງຫຼາຍແລ້ວ.*” ໒໑ແລ້ວມີເທວະດາຜູ້
ມີລິດຕົນໜຶ່ງ ໄດ້ຍົກຫີນກ້ອນໜຶ່ງເໝືອນຫີນໂມ້ໃຫຍ່ ຖິ້ມລົງ
ໃນທະເລກ່າວວ່າ,“*ບາບີໂລນມະຫານະຄອນນັ້ນຈະຖືກຖິ້ມ*
*ລົງໂດຍຮຸນແຮງຢ່າງນີ້ແຫຼະ ແລ້ວຈະບໍ່ມີໃຜເຫັນມັນອີກຕໍ່*
22 *ໄປຈັກເທື່ອ.* ໒໒*ສຽງນັກດີດພິນ, ນັກເສບ, ນັກເປົ່າຂຸ່ຍ, ແລະ*
*ເປົ່າແກຈະບໍ່ໄດ້ຍິນໃນເຈົ້າຕໍ່ໄປອີກ ຈະບໍ່ພົບຄົນທີ່ມີວິຊາ*

7 *ສົມລົງໃນຈອກນັ້ນສອງທໍ່.* ໗*ນະຄອນນັ້ນໄດ້ອວດຈອງຫອງ*
*ແລະປ່ອຍຕົວໄປຕາມຄວາມສະໜຸກສະໜານເທົ່າໃດ ກໍ*
*ຈົ່ງໃຫ້ມັນໄດ້ຮັບການທໍລະມານແລະຄວາມໂສກເສົ້າຫຼາຍ*
*ເທົ່ານັ້ນ ເພາະມັນຄຶດໃນໃຈວ່າ 'ເຮົາຢູ່ໃນຕໍາແໜ່ງລາຊີນີ*
*ບໍ່ແມ່ນແມ່ໝ້າຍ ເຮົາຈະບໍ່ປະສົບຄວາມໂສກເສົ້າຈັກເທື່ອ'.*
8 ໘*ເຫດສະນັ້ນໄພອັນຕະລາຍຕ່າງໆຂອງນະຄອນນັ້ນຈະເກີດ*
*ຂຶ້ນໃນວັນດຽວ ຄື ຄວາມຕາຍ, ຄວາມໂສກເສົ້າ, ຄວາມ*
*ອຶດຢາກ ແລະໄຟຈະເຜົາມັນໃຫ້ຈິບຫາຍເສຍ ເພາະວ່າອົງ*
*ພຣະຜູ້ເປັນເຈົ້າ ຄືພຣະເຈົ້າຜູ້ຊົງພິພາກສານະຄອນນັ້ນຊົງ*
9 *ປະກອບດ້ວຍພຣະກໍາລັງ."* ໙ບັນດາກະສັດແຫ່ງແຜ່ນດິນ
ໂລກທີ່ໄດ້ລ່ວງປະເວນີຜິດຊາຍຍິງກັບນະຄອນນັ້ນ ແລະໄດ້
ປ່ອຍຕົວໄປຕາມຄວາມສະໜຸກສະໜານຮ່ວມກັນນັ້ນ ເມື່ອ
10 ໄດ້ເຫັນຄວັນໄຟທີ່ໄໝ້ມັນກໍຈະຕີເອິກຮ້ອງໄຫ້.໑໐ກະສັດເຫຼົ່າ-
ນັ້ນຈະຢືນຢູ່ຫ່າງໄກ ເພາະຢ້ານໄພແຫ່ງການທໍລະມານຂອງ
ນະຄອນນັ້ນ ແລະຈະກ່າວວ່າ,"*ວິບັດ, ວິບັດແລ້ວ ບາບີໂລນ*
*ມະຫານະຄອນທີ່ແຂງແຮງເອີຍ, ເຈົ້າໄດ້ຖືກການພິພາກສາ*
11 *ລົງໂທດເສຍພາຍໃນຊົ່ວໂມງດຽວເທົ່ານັ້ນ."* ໑໑ບັນດາພໍ່ຄ້າ
ແຫ່ງແຜ່ນດິນໂລກຈະຮ້ອງໄຫ້ແລະໂສກເສົ້າເພາະນະຄອນ
12 ນັ້ນ ດ້ວຍວ່າບໍ່ມີໃຜຈະຊື້ສິນຄ້າທີ່ເຂົາບັນທຸກມານັ້ນ. ໑໒ສິນ-
ຄ້າເຫຼົ່ານັ້ນຄືຄໍາ, ເງິນ, ເພັດພອຍຕ່າງໆ, ໄຂ່ມຸກ, ຜ້າປ່ານ
ເນື້ອລະອຽດ, ຜ້າສີມ່ວງອ່ອນ, ຜ້າໄໝ, ຜ້າສີແດງເຂັ້ມ, ໄມ້
ຫອມທຸກຊະນິດ, ເຄື່ອງໃຊ້ທຸກຊະນິດທີ່ເຮັດດ້ວຍງາ, ດ້ວຍ
ໄມ້ອັນມີຄ່າ, ດ້ວຍທອງເຫຼືອງ, ດ້ວຍເຫຼັກ, ແລະດ້ວຍຫີນ
13 ລາຍ, ໑໓ແຄ່, ເຄື່ອງຫອມ, ກໍາຍານ, ນໍ້າມັນຫອມ, ເຄື່ອງຫອມ
ເຜົາບູຊາ, ເຫຼົ້າແວງ, ນໍ້າມັນ, ເຂົ້າແປ້ງລະອຽດ, ເຂົ້າວີດ, ງົວ,
14 ແກະ, ມ້າ, ລົດ, ຂ້ອຍຂ້າ, ແລະຊີວິດຈິດໃຈມະນຸດ. ໑໔"*ຜົນຊຶ່ງ*
*ຈິດໃຈຂອງເຈົ້າປາດຖະໜາຢາກໄດ້ນັ້ນກໍລ່ວງພົ້ນໄປຈາກ*





ດິນໂລກ ເກັບກ່ຽວຜົນເຄືອອະງຸ່ນຂອງແຜ່ນດິນໂລກ ແລ້ວ
ກໍຖິ້ມລົງໃນອ່າງໃຫຍ່ຢຽບໝາກອະງຸ່ນແຫ່ງພຣະພິໂລດຂອງ
20 ພຣະເຈົ້າ. ໒໐ອ່າງທີ່ເຂົາຢຽບນັ້ນຕັ້ງຢູ່ນອກເມືອງ ເລືອດຈຶ່ງ
ໄຫຼອອກຈາກອ່າງນັ້ນສູງພຽງແຂ່ມມ້າ ໄຫຼນອງໄປປະມານ
ແສນຫົກໝື່ນວາ.

# ບົດທີ 15

1 ໑ຂ້າພະເຈົ້າໄດ້ເຫັນໝາຍສໍາຄັນອັນໃຫຍ່ຫຼວງແລະໜ້າອັດ-
ສະຈັນໃນສະຫວັນອີກປະການໜຶ່ງ ຄືມີເທວະດາເຈັດຕົນຖື
ໄພອັນຕະລາຍເຈັດຢ່າງ ເປັນໄພອັນຕະລາຍຄັ້ງສຸດທ້າຍ
ເພາະວ່າພຣະພິໂລດຂອງພຣະເຈົ້າກໍຄົບຖ້ວນລົງດ້ວຍໄພ
2 ອັນຕະລາຍເຫຼົ່ານັ້ນ. ໒ຂ້າພະເຈົ້າໄດ້ເຫັນເໝືອນທະເລແກ້ວ
ປົນໄຟ ແລະໄດ້ເຫັນບັນດາຄົນທີ່ຊະນະສັດຮ້າຍແລະຮູບ
ຂອງມັນ ແລະເຄື່ອງໝາຍຂອງມັນ ກັບເລກປະຈໍາຊື່ຂອງ
ມັນ ຢືນຢູ່ແຄມທະເລແກ້ວນັ້ນ ເຂົາຖືພິນທີ່ພຣະເຈົ້າຊົງປະ-
3 ທານ. ໓ເຂົາຮ້ອງເພງຂອງໂມເຊຂ້ອຍໃຊ້ຂອງພຣະເຈົ້າແລະ
ເພງຂອງພຣະເມສານ້ອຍນັ້ນວ່າ, "*ຂ້າແດ່ພຣະເຈົ້າຜູ້ຊົງລິດ*
*ທານຸພາບອັນສູງສຸດ ພຣະລາຊະກິດຂອງພຣະອົງກໍໃຫຍ່*
*ຫຼວງແລະໜ້າອັດສະຈັນ ຂ້າແດ່ອົງພຣະມະຫາກະສັດແຫ່ງ*
*ພວກໄພ່ພົນຂອງພຣະອົງ ວິຖີທາງຂອງພຣະອົງກໍຍຸຕິທໍາ*
4 *ແລະທ່ຽງຈິງ.* ໔*ຂ້າແດ່ອົງພຣະຜູ້ເປັນເຈົ້າ ໃຜໜໍຈະບໍ່ຢໍາເກງ*
*ພຣະອົງແລະຈະບໍ່ຖວາຍພຣະກຽດແດ່ພຣະນາມຂອງພຣະ*
*ອົງ ເພາະວ່າພຣະອົງຜູ້ດຽວຊົງເປັນຜູ້ບໍລິສຸດ ປະຊາຊາດທັງ*
*ປວງຈະມານະມັດສະການຕໍ່ພຣະພັກພຣະອົງເພາະກິດຈະ-*
5 *ການອັນຍຸຕິທໍາຂອງພຣະອົງກໍປາກົດແຈ້ງແລ້ວ.* ໕ຫຼັງຈາກນີ້
ຂ້າພະເຈົ້າໄດ້ເຫັນພຣະວິຫານໃນສະຫວັນ ຄືສໍານັກຜ້າແຫ່ງ

6 ຄຳພະຍານໄຂອອກ. ໖ເທວະດາເຈັດຕົນທີ່ຖືໄພອັນຕະລາຍ
ທັງເຈັດໄດ້ອອກມາຈາກພຣະວິຫານນັ້ນ ນຸ່ງຫົ່ມຜ້າປ່ານເນື້ອ
7 ລະອຽດເສາະໃສ ແລະມີສາຍຮັດຄຳຮັດທີ່ໜ້າເອິກ. ໗ສັດໂຕ
ໜຶ່ງໃນສີ່ໂຕນັ້ນ ໄດ້ເອົາຂັນຄຳເຈັດໜ່ວຍທີ່ເຕັມໄປດ້ວຍ
ພຣະພິໂລດຂອງພຣະເຈົ້າຜູ້ຊົງພຣະຊົນຢູ່ສືບໆໄປເປັນນິດ
8 ຍື່ນໃຫ້ແກ່ເທວະດາທັງເຈັດຕົນນັ້ນ. ໘ແລ້ວພຣະວິຫານກໍ
ເຕັມໄປດ້ວຍຄວັນທີ່ມາຈາກພຣະລັດສະໝີຂອງພຣະເຈົ້າ
ແລະຈາກລິດທານຸພາບຂອງພຣະອົງ ບໍ່ມີຜູ້ໃດສາມາດເຂົ້າ
ໄປໃນພຣະວິຫານນັ້ນໄດ້ ຈົນກວ່າໄພອັນຕະລາຍທັງເຈັດ
ຂອງເທວະດາເຈັດຕົນນັ້ນຈະໄດ້ສິ້ນສຸດລົງ.

## ບົດທີ 16

1 ໑ແລ້ວຂ້າພະເຈົ້າໄດ້ຍິນສຽງດັງອອກມາຈາກພຣະວິຫານ
ສັ່ງເທວະດາເຈັດຕົນນັ້ນວ່າ, "ຈົ່ງໄປເສຍ ເອົາຂັນທັງເຈັດ
ໜ່ວຍ ທີ່ ເຕັມ ໄປ ດ້ວຍ ພຣະພິໂລດ ຂອງ ພຣະເຈົ້າ ຖອກ ລົງ
2 ເທິງແຜ່ນດິນໂລກ." ໒ເທວະດາຕົນທຳອິດຈຶ່ງອອກໄປເອົາ
ຂັນຂອງຕົນຖອກລົງເທິງແຜ່ນດິນໂລກ ແລະຄົນທັງຫຼາຍທີ່ມີ
ເຄື່ອງໝາຍຂອງສັດຮ້າຍ ແລະບູຊາຮູບຂອງມັນ ຈຶ່ງເກີດເປັນ
3 ຝີຮ້າຍແຮງແລະເຈັບປວດ. ໓ເທວະດາຕົນທີສອງໄດ້ຖອກຂັນ
ຂອງຕົນໃສ່ທະເລ ແລ້ວນ້ຳທະເລກໍກາຍເປັນເລືອດເໝືອນ
ເລືອດຂອງຄົນຕາຍ ແລະບັນດາສິ່ງທີ່ມີຊີວິດຢູ່ໃນທະເລນັ້ນ
4 ກໍຕາຍໝົດ. ໔ເທວະດາຕົນທີສາມໄດ້ຖອກຂັນຂອງຕົນລົງ
ໃສ່ແມ່ນ້ຳແລະນ້ຳພຸທັງຫຼາຍ ນ້ຳເຫຼົ່ານັ້ນກໍກາຍເປັນເລືອດ.
5 ໕ແລ້ວຂ້າພະເຈົ້າໄດ້ຍິນເທວະດາແຫ່ງນ້ຳນັ້ນຮ້ອງວ່າ, "ຂ້າ
ແດ່ອົງພຣະຜູ້ເປັນເຈົ້າຜູ້ຊົງດຳລົງຢູ່ບັດນີ້ ແລະຜູ້ຊົງດຳລົງຢູ່
ໃນຄາວກ່ອນ ແລະຜູ້ຈະຊົງດຳລົງຢູ່ໃນອະນາຄົດ ພຣະອົງ





17:8 "ແຕ່ຍັງເປັນ" ບາງທີ່ໝາຍຄວາມວ່າ "ແລະກຳລັງຈະເປັນ"
17:14 "ຈອມເຈົ້ານາຍທັງຫຼາຍແລະເປັນຈອມເຈົ້ານາຍກະສັດທັງຫຼາຍ" ຕາມພາສາກຣີກກັບພາສາອັງກິດກໍແປວ່າ "ເຈົ້ານາຍຂອງເຈົ້ານາຍທັງຫຼາຍແລະມະຫາກະສັດແຫ່ງກະສັດທັງຫຼາຍ"

## ບົດທີ 18

1 ໑ຫຼັງຈາກນັ້ນຂ້າພະເຈົ້າໄດ້ເຫັນເທວະດາອີກຕົນໜຶ່ງກຳລັງ
ລົງມາຈາກສະຫວັນ ມີອຳນາດອັນໃຫຍ່ຫຼວງ ແລະແຜ່ນດິນ
2 ໂລກໄດ້ສະຫວ່າງຂຶ້ນດ້ວຍລັດສະໝີຂອງຕົນນັ້ນ. ໒ເທວະ
ດານັ້ນໄດ້ຮ້ອງປະກາດສຽງແຮງກ້າຂຶ້ນວ່າ, "ບາບີໂລນມະ-
ຫານະຄອນຫຼົ້ມຈົມແລ້ວ ຫຼົ້ມຈົມເສຍແລ້ວ ມັນກາຍເປັນ
ບ່ອນອາໄສຂອງຜີຮ້າຍ ເປັນບ່ອນລີ້ຊ່ອນຂອງຜີຖ່ອຍຮ້າຍ
ທຸກຢ່າງ ແລະເປັນຄອນນົກບໍ່ສະອາດແລະໜ້າກຽດທຸກ
3 ຊະນິດ. ໓ເພາະວ່າປະຊາຊາດທັງປວງໄດ້ດື່ມເຫຼົ້າແວງປຸກ
ຢ່າງເຫຼືອເກີນແຫ່ງການລ່ວງປະເວນີຜິດຊາຍຍິງຂອງນະ-
ຄອນນັ້ນ ບັນດາກະສັດແຫ່ງແຜ່ນດິນໂລກໄດ້ລ່ວງປະເວນີ
ຜິດຊາຍຍິງກັບນະຄອນນັ້ນ ແລະພໍ່ຄ້າທັງຫຼາຍແຫ່ງແຜ່ນ-
ດິນໂລກໄດ້ລ້ຳລວຍດ້ວຍຊັບອັນຟຸມເຟືອຍຂອງນະຄອນ
4 ນັ້ນ." ໔ແລ້ວຂ້າພະເຈົ້າໄດ້ຍິນພຣະສຸລະສຽງອີກປະກາດ
ອອກມາຈາກສະຫວັນວ່າ, "ໄພ່ພົນຂອງເຮົາເອີຍ, ຈົ່ງອອກ
ມາຈາກນະຄອນນັ້ນເສຍ ເພື່ອເຈົ້າທັງຫຼາຍຈະບໍ່ໄດ້ເຂົ້າ
ສ່ວນໃນການຜິດບາບຂອງມັນ ເພື່ອເຈົ້າຈະບໍ່ຖືກໄພອັນຕະ-
5 ລາຍທີ່ຈະເກີດແກ່ມັນນັ້ນ. ໕ເພາະວ່າບາບຂອງນະຄອນນັ້ນ
ກອງສູງຂຶ້ນເຖິງສະຫວັນແລ້ວ ແລະພຣະເຈົ້າໄດ້ຊົງຈົດຈຳ
6 ການຊົ່ວຊ້າຂອງມັນໄວ້. ໖ນະຄອນນັ້ນໄດ້ໃຫ້ຜົນຢ່າງໃດກໍ
ຈົ່ງໃຫ້ຜົນແກ່ມັນຢ່າງນັ້ນ ແລະຈົ່ງຕອບແທນແກ່ການກະທຳ
ຂອງມັນເປັນສອງທໍ່ ໃນຈອກທີ່ມັນໄດ້ປະສົມໄວ້ກໍຈົ່ງປະ-

10 ພູນ້ອຍເຈັດໜ່ວຍທີ່ຍິງນັ້ນນັ່ງຢູ່. ໑໐ແລະກໍມີກະສັດເຈັດອົງ:
ຊຶ່ງຫ້າອົງໄດ້ຊົງລ່ວງໄປແລ້ວ, ອົງໜຶ່ງກຳລັງຊົງເປັນຢູ່, ແລະ
ອີກອົງໜຶ່ງຍັງບໍ່ໄດ້ສະເດັດມາ ເມື່ອສະເດັດມາແລ້ວຈະຕ້ອງ
11 ດຳລົງຢູ່ຊົ່ວຂະນະໜຶ່ງ. ໑໑ສັດຮ້າຍທີ່ໄດ້ເປັນຢູ່ໃນຄາວກ່ອນ
ແຕ່ບັດນີ້ບໍ່ໄດ້ເປັນຢູ່ນັ້ນ ກໍເປັນອົງຖ້ອນແປດ ແຕ່ຍັງເປັນ
12 ອົງໜຶ່ງໃນເຈັດອົງນັ້ນແລະຈະໄປສູ່ຄວາມຈິບຫາຍ. ໑໒ເຂົາ
ທັງສິບອັນທີ່ທ່ານໄດ້ເຫັນນັ້ນ ໄດ້ແກ່ກະສັດສິບອົງທີ່ຍັງບໍ່ໄດ້
ສະເຫວີຍລາຊະສົມບັດແຕ່ຈະໄດ້ຮັບອຳນາດເໝືອນກະສັດ
13 ດ້ວຍກັນກັບສັດຮ້າຍນັ້ນໜຶ່ງຊົ່ວໂມງ. ໑໓ກະສັດເຫຼົ່ານັ້ນມີພະ
ປະສົງຢ່າງດຽວກັນ ແລະຊົງມອບລິດ ແລະອຳນາດຂອງຕົນ
14 ໃຫ້ແກ່ສັດຮ້າຍນັ້ນ. ໑໔ກະສັດທັງຫຼາຍນັ້ນຈະສູ້ຮົບກັບພຣະ
ເມສານ້ອຍ ແລະພຣະເມສານ້ອຍຈະມີໄຊຊະນະ ເພາະວ່າ
ພຣະອົງເປັນຈອມເຈົ້ານາຍທັງຫຼາຍແລະເປັນຈອມເຈົ້ານາຍ
ກະສັດທັງຫຼາຍ*: ຝ່າຍບັນດາຄົນທີ່ຢູ່ກັບພຣະອົງ ເປັນຜູ້
ທີ່ພຣະອົງໄດ້ຊົງເອີ້ນເອົາ, ແລະຊົງເລືອກໄວ້, ແລະເປັນຜູ້
15 ຊື່ສັດ. ໑໕ເທວະດາຕົນນັ້ນໄດ້ບອກຂ້າພະເຈົ້າວ່າ, "ແມ່ນ້ຳ
ທັງຫຼາຍທີ່ທ່ານໄດ້ເຫັນຍິງໂສເພນີນັ່ງຢູ່ນັ້ນ ໄດ້ແກ່ຊົນຊາດ,
16 ມວນຊົນ, ປະຊາຊາດ, ແລະພາສາຕ່າງໆ. ໑໖ເຂົາທັງສິບອັນ
ຢູ່ເທິງສັດຮ້າຍທີ່ທ່ານໄດ້ເຫັນນັ້ນ ຈະພາກັນກຽດຊັງຍິງໂສ-
ເພນີ, ຈະເຮັດໃຫ້ນາງຂາດມິດສະຫາຍແລະເປືອຍກາຍ, ຈະ
17 ກັດກິນຊີ້ນຂອງນາງແລະຈະເອົາໄຟເຜົານາງເສຍ. ໑໗ເພາະ-
ວ່າພຣະເຈົ້າໄດ້ຊົງດົນໃຈໃຫ້ເຂົາເຮັດຕາມພຣະປະສົງຂອງ
ພຣະອົງ ໂດຍການຊົງເຮັດໃຫ້ເຂົາມີຄວາມຄິດຢ່າງດຽວກັນ
ຈຶ່ງໄດ້ມອບອານາຈັກຂອງຕົນໃຫ້ແກ່ສັດຮ້າຍນັ້ນ ຈົນເຖິງ
18 ຈະສຳເລັດຕາມພຣະທຳຂອງພຣະເຈົ້າ. ໑໘ສ່ວນຜູ້ຍິງທີ່ທ່ານ
ໄດ້ເຫັນນັ້ນໄດ້ແກ່ມະຫານະຄອນ ທີ່ມີອຳນາດເໜືອກະສັດ
ທັງຫຼາຍທົ່ວແຜ່ນດິນໂລກ."





ຊົງເປັນຜູ້ຍຸຕິທຳ ເພາະພຣະອົງຊົງພິພາກສາເຫດການເຫຼົ່າ
6 ນີ້. ໖ເພາະຄົນເຫຼົ່ານັ້ນໄດ້ເຮັດໃຫ້ເລືອດໄພ່ພົນຂອງພຣະເຈົ້າ
ແລະຂອງພວກຜູ້ປະກາດພຣະທຳໄຫຼອອກ ແລະພຣະອົງໄດ້
ຊົງປະທານເລືອດໃຫ້ເຂົາດື່ມກໍສົມຄວນກັບການກະທຳຂອງ
7 ເຂົາແລ້ວ." ໗ແລະຂ້າພະເຈົ້າໄດ້ຍິນອົງອື່ນອີກຢູ່ທີ່ແທ່ນບູຊາ
ຮ້ອງວ່າ, "ຈິງຢູ່ແລ້ວອົງພຣະຜູ້ເປັນເຈົ້າຜູ້ຊົງລິດທານຸພາບສູງ
ສຸດເອີຍ ການພິພາກສາຂອງພຣະອົງກໍທ່ຽງຈິງແລະຍຸຕິທຳ."
8 ໘ເທວະດາຕົນທີສີ່ໄດ້ຖອກຂັນຂອງຕົນລົງໃສ່ດວງອາທິດ
ດວງອາທິດຈຶ່ງໄດ້ຮັບພຣະລາຊະທານອຳນາດລວກມະນຸດ
9 ດ້ວຍໄຟ. ໙ມະນຸດທັງຫຼາຍຈຶ່ງຖືກລວກດ້ວຍຄວາມຮ້ອນຮົນ
ອັນແຮງກ້າ ແລະເຂົາໄດ້ປ້ອຍດ່າພຣະນາມຂອງພຣະເຈົ້າ
ຜູ້ຊົງມີອຳນາດເໜືອໄພອັນຕະລາຍເຫຼົ່ານັ້ນ ແລະເຂົາບໍ່ໄດ້
10 ຖິ້ມໃຈເກົ່າເອົາໃຈໃໝ່ຖວາຍພຣະກຽດແດ່ພຣະອົງ. ໑໐ເທວະ
ດາຕົນທີຫ້າໄດ້ຖອກຂັນຂອງຕົນລົງໃສ່ບັນລັງຂອງສັດຮ້າຍ
ແລະອານາຈັກຂອງມັນກໍມືດໄປ ຄົນເຫຼົ່ານັ້ນໄດ້ຂົບຄ້ຽວລີ້ນ
11 ຂອງຕົນດ້ວຍຄວາມເຈັບປວດ. ໑໑ເຂົາໄດ້ປ້ອຍດ່າພຣະເຈົ້າ
ແຫ່ງສະຫວັນ ເພາະຄວາມເຈັບປວດແລະເພາະຝີທີ່ເກີດ
ຕາມຕົວ ແຕ່ເຂົາບໍ່ໄດ້ກັບໃຈເສຍໃໝ່ຈາກກິດຈະການຂອງ
12 ຕົນ. ໑໒ເທວະດາຕົນທີຫົກໄດ້ຖອກຂັນຂອງຕົນລົງໃສ່ແມ່ນ້ຳ
ໃຫຍ່ ຄືແມ່ນ້ຳຢູຟາເຕ ນ້ຳໃນແມ່ນ້ຳນັ້ນຈຶ່ງແຫ້ງໄປ ເພື່ອ
ຈັດແຈງທາງໄວ້ສຳລັບກະສັດທັງຫຼາຍທີ່ມາຈາກທິດຕາເວັນ-
13 ອອກ. ໑໓ແລະຂ້າພະເຈົ້າໄດ້ເຫັນຜີຖ່ອຍຮ້າຍສາມໂຕເໝືອນ
ກົບອອກມາຈາກປາກພະຍານາກ, ຈາກປາກສັດຮ້າຍ, ແລະ
14 ຈາກປາກຜູ້ປະກາດພຣະທຳປອມ. ໑໔ດ້ວຍວ່າຜີເຫຼົ່ານັ້ນເປັນ
ຜີຮ້າຍທີ່ເຮັດໝາຍສຳຄັນ ມັນອອກໄປຫາກະສັດທັງຫຼາຍ
ທົ່ວພິພົບ ເພື່ອໃຫ້ກະສັດເຫຼົ່ານັ້ນມາຮ່ວມກັນສຳລັບການສົງ-
ຄາມໃນວັນອັນໃຫຍ່ຫຼວງຂອງພຣະເຈົ້າ ຜູ້ຊົງລິດທານຸພາບ

15 ສູງສຸດ. ໑໕(“ເບິ່ງແມ, ເຮົາຈະມາເໝືອນຂະໂມຍ. ຄວາມສຸກ
ຈະມີແກ່ຜູ້ທີ່ເຝົ້າລະວັງ ແລະແກ່ຜູ້ທີ່ຮັກສາເສື້ອຜ້າຂອງຕົນ
ບໍ່ໃຫ້ຕົວເປືອຍກາຍ ຢ້ານວ່າຄົນທັງຫຼາຍຈະເຫັນຄວາມລະ-
16 ອາຍຂອງຕົນ.”) ໑໖ແລະຜີທັງສາມໂຕນັ້ນໄດ້ໃຫ້ກະສັດທັງ-
ຫຼາຍມາຊຸມນຸມກັນໃນບ່ອນໜຶ່ງ ຕາມພາສາເຮັບເຣີເອີ້ນວ່າ
17 ອາມາເຄໂດນ. ໑໗ເທວະດາຕົນທີເຈັດໄດ້ຖອກຂັນຂອງຕົນ
ລົງໃສ່ອາກາດ ແລະມີພຣະສຸລະສຽງດັງອອກມາຈາກພຣະ
ລາຊະບັນລັງໃນພຣະວິຫານແຫ່ງສະຫວັນນັ້ນວ່າ, “ສຳເລັດ
18 ແລ້ວ.” ໑໘ແລະເກີດມີຟ້າແມບ, ມີສຽງດັງຕ່າງໆ , ມີຟ້າຮ້ອງ,
ແລະເກີດມີແຜ່ນດິນໄຫວອັນໃຫຍ່ ຊຶ່ງຕັ້ງແຕ່ມີມະນຸດເກີດ
ມາໃນໂລກ ບໍ່ເຄີຍມີແຜ່ນດິນໄຫວອັນໃຫຍ່ແລະຮ້າຍປານ
19 ນີ້ຈັກເທື່ອ. ໑໙ມະຫານະຄອນນັ້ນກໍແຍກອອກເປັນສາມສ່ວນ
ແລະຫົວເມືອງທັງປວງຂອງນານາປະເທດກໍຫຼົ້ມຈົມ ພຣະ
ເຈົ້າບໍ່ໄດ້ຊົງລືມມະຫານະຄອນບາບີໂລນ ແຕ່ໄດ້ຊົງໃຫ້ນະ-
ຄອນນັ້ນດື່ມຈອກເຫຼົ້າແວງແຫ່ງພຣະພິໂລດຂອງພຣະອົງ.
20 ໒໐ເກາະທຸກເກາະກໍເຄື່ອນໜີໄປແລະຈະຊອກຫາພູທັງຫຼາຍ
21 ກໍບໍ່ພົບ. ໒໑ມີໝາກເຫັບໃຫຍ່ ກ້ອນລະຫ້າສິບກິໂລກຣາມ
ຕົກລົງມາຈາກຟ້າຖືກຄົນທັງປວງ ເຂົາຈຶ່ງປ້ອຍດ່າພຣະເຈົ້າ
ເພາະໄພອັນຕະລາຍທີ່ເກີດຈາກໝາກເຫັບນັ້ນ ດ້ວຍວ່າໄພ
ອັນຕະລາຍນັ້ນຮ້າຍແຮງເຫຼືອເກີນ.

# ບົດທີ 17

1 ໑ເທວະດາຕົນໜຶ່ງໃນເຈັດຕົນທີ່ຖືຂັນທັງເຈັດໜ່ວຍນັ້ນ ໄດ້
ມາຫາຂ້າພະເຈົ້າແລະເວົ້າວ່າ, “ເຊີນມານີ້ເທີນ ເຮົາຈະໃຫ້
ທ່ານເຫັນການຊົງພິພາກສາລົງໂທດຍິງໂສເພນີຄົນສຳຄັນ ທີ່
2 ນັ່ງຢູ່ເທິງແມ່ນ້ຳອັນຫຼວງຫຼາຍ. ໒ຄືຍິງນັ້ນທີ່ບັນດາກະສັດທົ່ວ





ໂລກໄດ້ລ່ວງປະເວນີຜິດຊາຍຍິງກັບນາງ ແລະຊາວໂລກ
ທັງຫຼາຍໄດ້ມົວເມົາດ້ວຍເຫຼົ້າແວງແຫ່ງການລ່ວງປະເວນີຜິດ
3 ຊາຍຍິງຂອງນາງນັ້ນ.” ໓ເທວະດາຕົນນັ້ນໄດ້ຍົກຂ້າພະເຈົ້າ
ເຂົ້າໄປໃນປ່າໂດຍພຣະວິນຍານ ແລະຂ້າພະເຈົ້າໄດ້ເຫັນ
ຜູ້ຍິງຄົນໜຶ່ງ ນັ່ງຢູ່ເທິງຫຼັງສັດຮ້າຍສີແດງເຂັ້ມໂຕໜຶ່ງ ຊຶ່ງມີ
ຊື່ຫຼາຍຊື່ເປັນຄຳໝິ່ນປະໝາດເຕັມໄປທັງໂຕ ມັນມີເຈັດຫົວ
4 ແລະສິບເຂົາ. ໔ຍິງນັ້ນນຸ່ງເຄື່ອງສີມ່ວງອ່ອນແລະສີແດງເຂັ້ມ
ປະດັບປະດາດ້ວຍເຄື່ອງຄຳ, ດ້ວຍເພັດພອຍຕ່າງໆ ແລະໄຂ່
ມຸກ ມືຂອງຍິງນັ້ນຖືຈອກຄຳທີ່ເຕັມດ້ວຍຂອງໜ້າກຽດໜ້າຊັງ
ແລະຂອງຂີ້ດຽດແຫ່ງການລ່ວງປະເວນີຜິດຊາຍຍິງຂອງຕົນ:
5 ໕ທີ່ໜ້າຜາກຂອງຍິງນັ້ນມີຊື່ຂຽນໄວ້ວ່າ: “**ຄວາມເລິກລັບ, ບາ**
**ບີໂລນມະຫານະຄອນ, ແມ່ຂອງຍິງໂສເພນີທັງຫຼາຍ ແລະ**
**ແມ່ ຂອງ ສິ່ງ ທັງ ປວງ ທີ່ ໜ້າ ກຽດ ໜ້າ ຊັງ ໃນ ແຜ່ນດິນ ໂລກ**.”
6 ໖ແລະຂ້າພະເຈົ້າໄດ້ເຫັນວ່າຍິງນັ້ນເມົາດ້ວຍເລືອດຂອງໄພ່
ພົນແຫ່ງພຣະເຈົ້າ ແລະດ້ວຍເລືອດຂອງບັນດາຜູ້ທີ່ຍອມສະ-
ຫຼະຊີວິດເພາະເປັນພະຍານຝ່າຍພຣະເຢຊູ: ເມື່ອຂ້າພະເຈົ້າ
7 ເຫັນຍິງນັ້ນ ແລ້ວກໍອັດສະຈັນໃຈຫຼາຍ. ໗ເທວະດາຕົນນັ້ນຈຶ່ງ
ຖາມຂ້າພະເຈົ້າວ່າ, “ເປັນຫຍັງທ່ານຈຶ່ງອັດສະຈັນໃຈ? ເຮົາ
ຈະບອກໃຫ້ທ່ານຮູ້ຄວາມໝາຍຂໍ້ເລິກລັບຂອງຍິງນັ້ນ ແລະ
ຂອງສັດຮ້າຍທີ່ມີເຈັດຫົວແລະສິບເຂົາ ຊຶ່ງເປັນພາຫະນະ
8 ຂອງຍິງນັ້ນ. ໘ສັດຮ້າຍທີ່ທ່ານໄດ້ເຫັນນັ້ນໄດ້ເປັນຢູ່ໃນຄາວ
ກ່ອນ ແຕ່ບັດນີ້ບໍ່ໄດ້ເປັນຢູ່ ມັນຈະຂຶ້ນມາຈາກເຫວເລິກເພື່ອ
ໄປສູ່ຄວາມຈິບຫາຍ: ບັນດາຊາວໂລກທີ່ບໍ່ມີຊື່ຈົດໄວ້ໃນທະ-
ບຽນແຫ່ງຊີວິດຕັ້ງແຕ່ເລີ້ມຕົ້ນຊົງສ້າງໂລກນັ້ນ ກໍຈະປະຫຼາດ
ໃຈເມື່ອເຂົາເຫັນສັດຮ້າຍທີ່ໄດ້ເປັນຢູ່ໃນຄາວກ່ອນ ແຕ່ບັດນີ້
9 ບໍ່ໄດ້ເປັນຢູ່ ແຕ່ຍັງເປັນ*.ແລະກຳລັງຈະເປັນ. ໙ໃນເລື່ອງນີ້
ແຫຼະ, ຕ້ອງໃຊ້ຈິດໃຈທີ່ມີສະຕິປັນຍາ. ຫົວທັງເຈັດນັ້ນໄດ້ແກ່